**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ປະທານປະເທດ

ເລກທີ 057/ປປທ

ນະຄອນຫຼວງວຽງຈັນ, ວັນທີ 16/01/2012

# ລັດຖະດຳລັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍ ພາສີ**

**ສະບັບປັບປຸງ.**

~~~~~~~~~~~~~~~~~~

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI ມາດຕາ 67 ຂໍ້ 1 ກ່ຽວກັບການປະກາດໃຊ້ລັດຖະທຳມະນູນ ແລະ ກົດໝາຍທີ່ສະພາແຫ່ງຊາດໄດ້ຕົກລົງຮັບຮອງເອົາແລ້ວ;
- ອີງຕາມມະຕິຕົກລົງຂອງສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 20/ສພຊ, ລົງວັນທີ 20 ທັນວາ 2011 ກ່ຽວກັບການຕົກລົງຮັບຮອງເອົາກົດໝາຍວ່າດ້ວຍ ພາສີ ສະບັບປັບປຸງ;
- ອີງຕາມໜັງສືສະເໜີ ຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 20/ຄປຈ, ລົງວັນທີ 03 ມັງກອນ 2012.

***ປະທານປະເທດ***

***ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ອອກລັດຖະດຳລັດ :***

*<u>ມາດຕາ 1</u>* : ປະກາດໃຊ້ກົດໝາຍວ່າດ້ວຍ ພາສີ ສະບັບປັບປຸງ.

*<u>ມາດຕາ 2</u>* : ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ.**

ຈູມມາລີ ໄຊຍະສອນ
~~~~~~~~~~~~~~~~~~

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ສະພາແຫ່ງຊາດ** ເລກທີ 20 /ສພຊ

# ມະຕິຕົກລົງ

**ຂອງ**

**ສະພາແຫ່ງຊາດ ແຫ່ງ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

## ກ່ຽວກັບການຕົກລົງຮັບຮອງເອົາ ກົດໝາຍວ່າດ້ວຍ ພາສີ ສະບັບປັບປຸງ

---

ອີງຕາມມາດຕາ 53 ຂໍ້ 2 ຂອງລັດຖະທຳມະນູນ ແລະມາດຕາ 3 ຂໍ້ 1 ຂອງກົດໝາຍວ່າດ້ວຍ ສະພາແຫ່ງຊາດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ກ່ຽວກັບສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດ

ພາຍຫຼັງທີ່ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ VII ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນ ຂອງກົດໝາຍວ່າດ້ວຍ ພາສີ ສະບັບປັບປຸງ ໃນວາລະກອງປະຊຸມຕອນບ່າຍຂອງວັນທີ 20 ທັນວາ 2011

**ກອງປະຊຸມໄດ້ຕົກລົງ:**

ມາດຕາ 1. ຮັບຮອງເອົາກົດໝາຍວ່າດ້ວຍ ພາສີ ສະບັບປັບປຸງ ດ້ວຍຄະແນນສຽງເຫັນດີ ເປັນສ່ວນຫຼາຍ.

ມາດຕາ 2. ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ນະຄອນຫລວງວຽງຈັນ, ວັນທີ 20 ທັນວາ 2011

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

------------------------------------

ສະພາແຫ່ງຊາດ

ເລກທີ 04 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 20 ທັນວາ 2011

# ກົດໝາຍວ່າດ້ວຍ ພາສີ

## ( ສະບັບປັບປຸງ )

## ພາກທີ I

## ບົດບັນຍັດທົ່ວໄປ

**ມາດຕາ 1 ( ປັບປຸງ ). ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດຫຼັກການ, ນະໂຍບາຍ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການສົ່ງອອກ-ນຳເຂົ້າ, ການຂົນສົ່ງຜ່ານແດນ ແລະ ການເຄື່ອນຍ້າຍສິນຄ້າ, ເຄື່ອງຂອງ ຢູ່ພາຍໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເພື່ອຊຸກຍູ້ສົ່ງເສີມການລົງທຶນ, ປົກປ້ອງຜົນປະໂຫຍດ ອັນຊອບທຳທາງດ້ານເສດຖະກິດ-ສັງຄົມ ແລະ ຄວາມໝັ້ນຄົງຂອງຊາດ, ການເຊື່ອມໂຍງກັບສາກົນ ແນໃສ່ຮັບປະກັນການເກັບລາຍຮັບເຂົ້າງົບປະມານແຫ່ງລັດ ໃຫ້ມີປະສິດທິຜົນ, ປະກອບສ່ວນເຂົ້າໃນ ການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ.

**ມາດຕາ 2 ( ປັບປຸງ ). ພາສີ**

ພາສີ ແມ່ນ ພັນທະເປັນເງິນທີ່ມອບໃຫ້ລັດ ໂດຍບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ດຳເນີນ ການສົ່ງອອກ-ນຳເຂົ້າ, ການຜ່ານແດນ ແລະ ການເຄື່ອນຍ້າຍສິນຄ້າ, ເຄື່ອງຂອງຜ່ານດ່ານພາສີຊາຍ ແດນ ຕາມອັດຕາທີ່ໄດ້ກຳນົດໄວ້ໃນປຶ້ມສາລະບານອັດຕາພາສີ.

ມາດຕາ 3 ( ປັບປຸງ ). **ການອະທິບາຍຄຳສັບ**

**ຄຳສັບ ທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີ ຄວາມໝາຍ ດັ່ງນີ້:**

1. **ລັດຖະການພາສີ ໝາຍເຖິງ** ກົມພາສີ, ພາສີປະຈຳເຂດ, ດ່ານພາສີຊາຍແດນ ແລະ ການຈັດຕັ້ງອື່ນຂອງພາສີ ຊຶ່ງເປັນການຈັດຕັ້ງໜຶ່ງທີ່ຂຶ້ນກັບກະຊວງການເງິນ ມີຄວາມຮັບຜິດຊອບ ໃນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍພາສີ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ ຢ່າງລວມສູນເອກະພາບໃນຂອບເຂດທົ່ວປະເທດ;
2. **ເຈົ້າໜ້າທີ່ພາສີ ໝາຍເຖິງ** ພະນັກງານພາສີ ທີ່ຖືກແຕ່ງຕັ້ງໃຫ້ປະຕິບັດໜ້າທີ່ ປະຈຳການຢູ່ ລັດຖະການພາສີແຕ່ລະຂັ້ນ ຫຼື ວຽກງານສະເພາະກິດໃດໜຶ່ງ;
3. **ຜູ້ແຈ້ງພາສີ ໝາຍເຖິງ** ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ, ຜູ້ບໍລິການແຈ້ງພາສີ ຫຼື ຜູ້ໄດ້ຮັບມອບສິດ ທີ່ໄດ້ຮັບອະນຸຍາດໃຫ້ແຈ້ງພາສີ ພ້ອມທັງລົງລາຍເຊັນໃນໃບແຈ້ງພາສີເປັນລາຍລະອຽດ;
4. **ພັນທະອື່ນ ໝາຍເຖິງ** ປະເພດອາກອນຕ່າງໆ ແລະ ຄ່າທຳນຽມທີ່ໄດ້ກຳນົດໄວ້ໃນລະບຽບການ, ກົດໝາຍວ່າດ້ວຍ ງົບປະມານ ຊຶ່ງມອບໃຫ້ເຈົ້າໜ້າທີ່ພາສີເກັບ;
5. **ການແຈ້ງພາສີເປັນລາຍລະອຽດແບບທົ່ວໄປ ໝາຍເຖິງ** ການປະກອບຂໍ້ມູນລົງໃນໃບແຈ້ງພາສີເປັນລາຍລະອຽດ ກ່ຽວກັບສິນຄ້າ, ເຄື່ອງຂອງທີ່ສົ່ງອອກ-ນຳເຂົ້າ ຕາມແບບພິມ ທີ່ລັດຖະການພາສີກຳນົດໄວ້;
6. **ການແຈ້ງພາສີເປັນລາຍລະອຽດທາງອີເລັກໂຕຣນິກ ໝາຍເຖິງ** ການນຳໃຊ້ຂໍ້ມູນຂ່າວສານ ແລະ ເຕັກໂນໂລຊີ ກ່ຽວກັບສິນຄ້າ, ເຄື່ອງຂອງຜ່ານລະບົບການແຈ້ງພາສີແບບອັດຕະໂນມັດ ຂອງລັດຖະການພາສີ;
7. **ລາຍເຊັນທາງອີເລັກໂຕຣນິກ ໝາຍເຖິງ** ລາຍເຊັນຂອງຜູ້ແຈ້ງພາສີ ເພື່ອຢັ້ງຢືນຄວາມຖືກຕ້ອງຂອງຂໍ້ມູນ ໃນການແຈ້ງພາສີຜ່ານລະບົບອີເລັກໂຕຣນິກ ແລະ ຮັບຮູ້ໂດຍລັດຖະການພາສີ;
8. **ເສັ້ນທາງສະເພາະ ໝາຍເຖິງ** ເສັ້ນທາງທີ່ເຈົ້າໜ້າທີ່ພາສີກຳນົດ ເພື່ອຄວບຄຸມການສົ່ງອອກ-ນຳເຂົ້າ, ການຜ່ານແດນ ແລະ ການເຄື່ອນຍ້າຍສິນຄ້າ, ເຄື່ອງຂອງ;
9. **ການຍຶດສິນຄ້າ, ເຄື່ອງຂອງ ໝາຍເຖິງ** ການຮັກສາສິນຄ້າ, ເຄື່ອງຂອງໄວ້ຊົ່ວຄາວ ເພື່ອລໍຖ້າຜົນຂອງການດຳເນີນຄະດີ;
10. **ການອາຍັດສິນຄ້າ, ເຄື່ອງຂອງ ໝາຍເຖິງ** ການຮັກສາສິນຄ້າ, ເຄື່ອງຂອງໄວ້ຊົ່ວຄາວຢູ່ສະຖານທີ່ຂອງຜູ້ຖືກຫາ ໂດຍຫ້າມຊື້-ຂາຍ, ໂອນ ຫຼື ຊວດຈຳ ເພື່ອລໍຖ້າຜົນຂອງການພິສູດ ຫຼື ຜົນຂອງການດຳເນີນຄະດີ;
11. **ການຮິບສິນຄ້າ, ເຄື່ອງຂອງ ໝາຍເຖິງ** ການເອົາສິນຄ້າ, ເຄື່ອງຂອງ ທີ່ເປັນຂອງກາງໃນການກະທຳຜິດທາງພາສີ ມາເປັນຂອງລັດຕາມຄຳຕັດສິນຂອງສານ;

12. **ອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ພາສີ ໝາຍເຖິງ** ລັດຖະການພາສີທຸກຂັ້ນທີ່ໄດ້ຮັບມອບໝາຍເຮັດໜ້າທີ່ສືບສວນ-ສອບສວນ ກ່ຽວກັບການດຳເນີນ ແລະ ແກ້ໄຂຄະດີທາງພາສີ;
13. **ດ່ານພາສີຊາຍແດນ ໝາຍເຖິງ** ດ່ານພາສີສາກົນ, ດ່ານພາສີທ້ອງຖິ່ນ ແລະ ດ່ານພາສີປະເພນີ ທີ່ອະນຸຍາດໃຫ້ຜູ້ໂດຍສານ, ພາຫະນະ ແລະ ສິນຄ້າ, ເຄື່ອງຂອງເຂົ້າ-ອອກ;
14. **ການງົດເກັບພາສີ ໝາຍເຖິງ** ການຢຸດເຊົາເກັບພາສີ ໃນໄລຍະໃດໜຶ່ງໃນເວລາສົ່ງອອກ-ນຳເຂົ້າ ສິນຄ້າ ແຕ່ບໍ່ໃຫ້ເກີນກຳນົດເວລາ ທີ່ໄດ້ບົ່ງໄວ້ໃນລະບຽບກົດໝາຍ;
15. **ຄ່າສິ້ນເປືອງ ໝາຍເຖິງ** ຄ່າໃຊ້ຈ່າຍໃນການດຳເນີນຄະດີທາງພາສີ, ຄ່າຝາກສາງ, ຄ່າຄົ່ງນຖ່າຍ, ຄ່າບຳລຸງຮັກສາ, ຄ່າຂົນສົ່ງ ແລະ ອື່ນໆທີ່ກ່ຽວຂ້ອງ.

**ມາດຕາ 4 ( ປັບປຸງ ). ນະໂຍບາຍຂອງລັດກ່ຽວກັບວຽກງານພາສີ**

ລັດ ສົ່ງເສີມໃຫ້ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງຕ່າງໆທີ່ເຄື່ອນໄຫວກ່ຽວກັບການສົ່ງອອກ-ນຳເຂົ້າ ສິນຄ້າ, ເຄື່ອງຂອງ ປະກອບສ່ວນເສຍພັນທະໃຫ້ລັດ ແນໃສ່ພັດທະນາເສດຖະກິດ-ສັງຄົມ ຂອງຊາດ ເປັນຕົ້ນ ວຽກງານສຶກສາ ແລະ ສາທາລະນະສຸກ ໃຫ້ມີຄວາມເຂັ້ມແຂງ ແລະ ຂະຫຍາຍຕົວຢ່າງຕໍ່ເນື່ອງ, ສ້າງຄວາມເຂັ້ມແຂງໃນການປະຕິບັດໜ້າທີ່ຂອງລັດຖະການພາສີ ດ້ວຍການວາງນະໂຍບາຍ, ລະບຽບການ , ການປະກອບ ແລະ ພັດທະນາບຸກຄະລາກອນ, ການສະໜອງງົບປະມານໃນການກໍ່ສ້າງພື້ນຖານໂຄງລ່າງ, ພາຫະນະ ແລະ ວັດຖຸປະກອນ ທີ່ຈຳເປັນໃຫ້ແກ່ການເຄື່ອນໄຫວວຽກງານພາສີ.

**ມາດຕາ 5 ( ໃໝ່ ). ຫຼັກການກ່ຽວກັບວຽກງານພາສີ**

**ໃນການເຄື່ອນໄຫວວຽກງານພາສີ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:**

1. ຮັບປະກັນການຄຸ້ມຄອງຢ່າງລວມສູນເປັນເອກະພາບໃນຂອບເຂດທົ່ວປະເທດ;
2. ຮັບປະກັນການສົ່ງເສີມການຜະລິດ, ການດຳເນີນທຸລະກິດ ແລະ ການລົງທຶນໃຫ້ມີການຂະຫຍາຍຕົວ;
3. ຮັບປະກັນຄວາມຍຸຕິທຳ, ທັນສະໄໝ, ໂປ່ງໃສ, ບໍລິການວ່ອງໄວ ແລະ ກວດສອບໄດ້;
4. ອຳນວຍຄວາມສະດວກທາງດ້ານການຄ້າ ແລະ ສົ່ງເສີມການລົງທຶນ;
5. ປະສານສົມທົບຢ່າງກົມກຽວ ລະຫວ່າງການຄຸ້ມຄອງຕາມສາຍຕັ້ງ ແລະ ສາຍຂວາງ;
6. ປະຕິບັດພັນທະຕ່າງໆ ກ່ຽວກັບຂໍ້ຕົກລົງ, ສັນຍາ, ສົນທິສັນຍາ ຂອງພາກພື້ນ ແລະ ສາກົນ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 6 ( ປັບປຸງ ). ສິນຄ້າ, ເຄື່ອງຂອງ ທີ່ຕ້ອງເສຍພາສີ ແລະ ພັນທະອື່ນ**

ສິນຄ້າ, ເຄື່ອງຂອງທຸກຊະນິດທີ່ສົ່ງອອກ-ນຳເຂົ້າ ສປປ ລາວ ຕ້ອງໄດ້ເສຍພາສີ ແລະ ພັນທະອື່ນ ຕາມອັດຕາພາສີທີ່ໄດ້ກຳນົດໄວ້ໃນປຶ້ມສາລະບານອັດຕາພາສີ ເວັ້ນເສຍແຕ່ກໍລະນີງົດເກັບ ຫຼື ຍົກເວັ້ນພາສີ ແລະ ພັນທະອື່ນ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ດຳເນີນການກ່ຽວກັບການສົ່ງອອກ-ນຳເຂົ້າ ສິນຄ້າ, ເຄື່ອງຂອງ ຕ້ອງເສຍພາສີ ແລະ ພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 7 ( ປັບປຸງ ). ອານາເຂດພາສີ**

ອານາເຂດພາສີ ກວມເອົາຜືນແຜ່ນດິນອັນຄົບຖ້ວນຂອງ ສປປ ລາວ ທີ່ ໄດ້ກຳນົດຂອບເຂດການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ພາສີ. ເຈົ້າໜ້າທີ່ພາສີ ສາມາດປະຕິບັດໜ້າທີ່ຂອງຕົນນອກອານາເຂດພາສີຕາມສັນຍາ ຫຼື ອະນຸສັນຍາ ທີ່ ລັດຖະບານ ແຫ່ງ ສປປ ລາວ ໄດ້ຮ່ວມລົງນາມ.

ຢູ່ໃນອານາເຂດພາສີ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໂດຍບໍ່ຈຳແນກສັນຊາດ ທີ່ດຳເນີນກ່ຽວກັບການສົ່ງອອກ-ນຳເຂົ້າ, ການຜ່ານແດນ ແລະ ການເຄື່ອນຍ້າຍສິນຄ້າ, ເຄື່ອງຂອງ ຕ້ອງປະຕິບັດຕາມກົດໝາຍສະບັບນີ້ ແລະ ລະບຽບກົດໝາຍອື່ນ ທີ່ກ່ຽວຂ້ອງ.

**ມາດຕາ 8 ( ໃໝ່ ). ການຄວບຄຸມທາງພາສີ**

ການຄວບຄຸມທາງພາສີ ແມ່ນ ການນຳໃຊ້ ຂັ້ນຕອນ, ວິທີການ, ລະບຽບການ ແລະ ມາດຕະການ ໂດຍລັດຖະການພາສີ ຕາມກົດໝາຍສະບັບນີ້ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ ເພື່ອຄວບຄຸມການສົ່ງອອກ-ນຳເຂົ້າ, ການຜ່ານແດນ ແລະ ການເຄື່ອນຍ້າຍ ສິນຄ້າ, ເຄື່ອງຂອງ.

**ມາດຕາ 9 ( ປັບປຸງ ). ການຮ່ວມມືສາກົນ**

ລັດ ເປີດກວ້າງ ແລະ ສົ່ງເສີມໃຫ້ມີການພົວພັນ, ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານພາສີ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ເຕັກນິກ, ເຕັກໂນໂລຊີ, ການຝຶກອົບຮົມ ແລະ ການກໍ່ສ້າງຍົກລະດັບພະນັກງານ ແລະ ວຽກງານອື່ນໆ, ປະຕິບັດສັນຍາ, ອະນຸສັນຍາ ແລະ ສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

# ພາກທີ II
# ລະບຽບການ ແລະ ຂັ້ນຕອນການແຈ້ງພາສີ
## ໝວດທີ 1
## ການຈັດລະຫັດສິນຄ້າ, ເຄື່ອງຂອງ ແລະ ແຫຼ່ງກຳເນີດສິນຄ້າ

**ມາດຕາ 10 ( ປັບປຸງ ). ການຈັດລະຫັດສິນຄ້າ, ເຄື່ອງຂອງ**

ສິນຄ້າ, ເຄື່ອງຂອງທຸກຊະນິດທີ່ ສົ່ງອອກ-ນຳເຂົ້າ ຕ້ອງໄດ້ແຈ້ງພາສີ ຕາມເລກລະຫັດຂອງແຕ່ລະຊະນິດສິນຄ້າ, ເຄື່ອງຂອງ ທີ່ໄດ້ກຳນົດໄວ້ໃນປຶ້ມສາລະບານອັດຕາພາສີລະບົບເອກະພາບ.

ປຶ້ມສາລະບານອັດຕາພາສີຂອງ ສປປ ລາວ ແມ່ນກຳນົດຂຶ້ນໂດຍອີງຕາມສາລະບານລະບົບເອກະພາບຂອງສາກົນ ຊຶ່ງມີການປັບປຸງໃນແຕ່ລະໄລຍະ.

**ມາດຕາ 11 ( ປັບປຸງ ). ແຫຼ່ງກຳເນີດສິນຄ້າ**

ແຫຼ່ງກຳເນີດສິນຄ້າ ແມ່ນ ປະເທດທີ່ໄດ້ຂຸດຄົ້ນ, ຜະລິດ ຫຼື ຜ່ານຂະບວນການຜະລິດ ຫຼື ປຸງແຕ່ງສິນຄ້າ ຕາມລະບຽບການທີ່ໄດ້ກຳນົດໄວ້ ໂດຍສອດຄ່ອງກັບລະບຽບການຂອງການນຳໃຊ້ສາລະບານອັດຕາພາສີ, ການກຳນົດທາງດ້ານປະລິມານ ຂອງສ່ວນປະກອບ ຫຼື ລະບຽບການອື່ນທາງດ້ານການຄ້າ.

ແຫຼ່ງກຳເນີດສິນຄ້າ ນຳໃຊ້ເພື່ອຢັ້ງຢືນ ປະເທດຕົ້ນກຳເນີດຂອງສິນຄ້າ ແລະ ການໄດ້ຮັບສິດພິເສດໃນການຫຼຸດຜ່ອນອັດຕາພາສີກັບບັນດາປະເທດທີ່ລັດຖະບານແຫ່ງ ສປປ ລາວ ໄດ້ຮ່ວມລົງນາມ.

## ໝວດທີ 2
## ມູນຄ່າແຈ້ງພາສີ ສິນຄ້າ, ເຄື່ອງຂອງ

**ມາດຕາ 12 ( ປັບປຸງ ). ມູນຄ່າແຈ້ງພາສີສົ່ງອອກ**

ມູນຄ່າແຈ້ງພາສີສົ່ງອອກ ແມ່ນ ມູນຄ່າຕົວຈິງຂອງສິນຄ້າ, ເຄື່ອງຂອງ ລວມທັງຄ່າຂົນສົ່ງ ທີ່ນຳສົ່ງຮອດດ່ານພາສີຊາຍແດນ ບ່ອນສົ່ງອອກ.

**ມາດຕາ 13 ( ປັບປຸງ ). ມູນຄ່າແຈ້ງພາສີນຳເຂົ້າ**

ມູນຄ່າແຈ້ງພາສີນຳເຂົ້າ ແມ່ນ ມູນຄ່າສິນຄ້າ, ເຄື່ອງຂອງຕົວຈິງ ລວມທັງຄ່າຂົນສົ່ງ ແລະ/ຫຼື ຄ່າປະກັນໄພ ທີ່ສົ່ງຮອດດ່ານຊາຍແດນບ່ອນນຳເຂົ້າ ໂດຍສອດຄ່ອງກັບຫຼັກການທີ່ໄດ້ກຳນົດໄວ້ໃນຂໍ້

ຕົກລົງທົ່ວໄປວ່າດ້ວຍພາສີ ແລະ ການຄ້າ 1994 ຂອງອົງການການຄ້າໂລກວ່າດ້ວຍ ການກຳນົດມູນຄ່າແຈ້ງພາສີ.

ກະຊວງການເງິນ ເປັນຜູ້ອອກລະບຽບການລະອຽດ ກ່ຽວກັບຫຼັກການປະເມີນມູນຄ່າແຈ້ງພາສີນຳເຂົ້າ.

## ໝວດທີ 3
## ຜູ້ບໍລິການແຈ້ງພາສີ ແລະ ຄວາມຮັບຜິດຊອບຂອງຜູ້ແຈ້ງພາສີ

### ມາດຕາ 14. ຜູ້ບໍລິການແຈ້ງພາສີ

ຜູ້ບໍລິການແຈ້ງພາສີ ມີໜ້າທີ່ບໍລິການແຈ້ງພາສີ ແທນເຈົ້າຂອງສິນຄ້າ, ເຄື່ອງຂອງ ຫຼື ຜູ້ຂົນສົ່ງ.

ກະຊວງການເງິນ ເປັນຜູ້ອອກລະບຽບການກ່ຽວກັບມາດຕະຖານ, ເງື່ອນໄຂ ແລະ ຂອບເຂດການເຄື່ອນໄຫວຂອງຜູ້ບໍລິການແຈ້ງພາສີ.

### ມາດຕາ 15 ( ໃໝ່ ). ຄວາມຮັບຜິດຊອບຂອງຜູ້ແຈ້ງພາສີ

**ຜູ້ແຈ້ງພາສີ ມີຄວາມຮັບຜິດຊອບ ດັ່ງນີ້:**

1. ພົວພັນກັບລັດຖະການພາສີ ຕາມລະບຽບການ ໃນການແຈ້ງສິນຄ້າ, ເຄື່ອງຂອງ, ການປະກອບເອກະສານທາງພາສີ, ການແຈ້ງພາສີ, ການເສັຍພາສີ ແລະ ພັນທະອື່ນ, ການນຳເອົາສິນຄ້າ, ເຄື່ອງຂອງ ອອກຈາກດ່ານພາສີ ຫຼື ສາງແທນເຈົ້າຂອງສິນຄ້າ, ເຄື່ອງຂອງ;
2. ພົວພັນກັບລັດຖະການພາສີ ໃນການລົງທະບຽນ ເພື່ອນຳໃຊ້ລະບົບການແຈ້ງພາສີທາງອີເລັກໂຕຣນິກ;
3. ແຈ້ງສິນຄ້າ, ເຄື່ອງຂອງຢ່າງຖືກຕ້ອງຕໍ່ລັດຖະການພາສີ ແລະ ຍື່ນເອກະສານທີ່ກ່ຽວຂ້ອງ ເພື່ອປະຕິບັດຂັ້ນຕອນທາງພາສີ;
4. ລົງລາຍເຊັນໃສ່ໃບແຈ້ງພາສີເປັນລາຍລະອຽດໃນຮູບແບບທາງອີເລັກໂຕຣນິກ ແລະ/ຫຼື ຮູບແບບທົ່ວໄປ ແທນເຈົ້າຂອງສິນຄ້າ, ເຄື່ອງຂອງ ຕາມການມອບສິດ;
5. ຊຳລະຄ່າພາສີ ແລະ ພັນທະອື່ນ ແທນເຈົ້າຂອງສິນຄ້າ, ເຄື່ອງຂອງ;
6. ເຂົ້າຮ່ວມກວດກາສິນຄ້າ, ເຄື່ອງຂອງ ນຳເຈົ້າໜ້າທີ່ພາສີ ເປັນຕົ້ນ ເປີດຕູ້ສິນຄ້າ, ຫີບຫໍ່, ນັບຈຳນວນສິນຄ້າ, ເຄື່ອງຂອງ, ຕິດຊັ່ງນ້ຳໜັກ, ວັດແທກ;
7. ເປັນຕົວແທນເຈົ້າຂອງສິນຄ້າ, ເຄື່ອງຂອງ, ຜູ້ຂົນສົ່ງ ຫຼື ຜູ້ບໍລິການອື່ນ ຕໍ່ລັດຖະການພາສີໃນກໍລະນີມີການລະເມີດລະບຽບກົດໝາຍ ກ່ຽວກັບພາສີ ແລະ ລະບຽບກົດໝາຍອື່ນ ທີ່ກ່ຽວຂ້ອງ;

8. ຈ່າຍຄ່າຂົນສົ່ງ, ຄ່າຄຸ້ມຖ່າຍ, ຄ່າຝາກສາງ ແລະ ຄ່າສິ້ນເປືອງອື່ນ ໃນການດໍາເນີນການກວດກາສິນຄ້າ, ເຄື່ອງຂອງ.

## ໝວດທີ 4
## ການບໍລິຫານຄວາມສ່ຽງທາງພາສີ

**ມາດຕາ 16 ( ໃໝ່ ). ການບໍລິຫານຄວາມສ່ຽງທາງພາສີ**

ການບໍລິຫານຄວາມສ່ຽງທາງພາສີ ແມ່ນ ການນໍາໃຊ້ກົນໄກຂອງລັດຖະການພາສີ ໃນການວິເຄາະ, ວິໄຈ, ເລືອກເຟັ້ນແຫຼ່ງຂໍ້ມູນ ເຂົ້າໃນການຄວບຄຸມທາງພາສີ ແນໃສ່ອໍານວຍຄວາມສະດວກໃນການສົ່ງອອກ-ນໍາເຂົ້າ, ການຜ່ານແດນ, ການເຄື່ອນຍ້າຍ, ການກວດກາສິນຄ້າ, ເຄື່ອງຂອງ ໂດຍນໍາໃຊ້ຫຼັກການບໍລິຫານຄວາມສ່ຽງ.

**ມາດຕາ 17 ( ໃໝ່ ). ຫຼັກການບໍລິຫານຄວາມສ່ຽງທາງພາສີ**

**ຫຼັກການບໍລິຫານຄວາມສ່ຽງທາງພາສີ ມີ ດັ່ງນີ້:**

1. ນໍາໃຊ້ການບໍລິຫານຄວາມສ່ຽງ ຢ່າງມີປະສິດທິຜົນ ໃນອານາເຂດພາສີ ແລະ ນໍາໃຊ້ເຂົ້າໃນທຸກວຽກງານທາງພາສີ;
2. ເກັບກໍາຂໍ້ມູນພາຍໃນລັດຖະການພາສີ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ເພື່ອນໍາໃຊ້ເປັນຂໍ້ມູນໃນການວິເຄາະ, ວິໄຈ ແລະ ເລືອກເຟັ້ນໃນການບໍລິຫານຄວາມສ່ຽງໃຫ້ມີປະສິດທິຜົນ;
3. ອອກລະບຽບການກ່ຽວກັບການບໍລິຫານຄວາມສ່ຽງ ແລະ ສ້າງມາດຕະຖານຂອງການບໍລິຫານຄວາມສ່ຽງໄປຄວບຄູ່ກັບຄວາມຈໍາເປັນ ໃນການຈັດຕັ້ງປະຕິບັດການຄວບຄຸມ ແລະ ການຄຸ້ມຄອງທາງພາສີຢ່າງມີປະສິດທິຜົນ.

## ໝວດທີ 5
## ລະບຽບການທາງພາສີ ແລະ ການແຈ້ງພາສີ

**ມາດຕາ 18 ( ໃໝ່ ). ລະບຽບການທາງພາສີ**

ລະບຽບການທາງພາສີ ແມ່ນ ບັນດາບົດບັນຍັດທີ່ກໍານົດອອກ ເພື່ອຄວບຄຸມກ່ຽວກັບການສົ່ງອອກ-ນໍາເຂົ້າ, ການຜ່ານແດນ ແລະ ການເຄື່ອນຍ້າຍສິນຄ້າ, ເຄື່ອງຂອງ ພາຍໃນອານາເຂດພາສີ.

**ມາດຕາ 19 ( ປັບປຸງ ). ການແຈ້ງເອກະສານຂົນສົ່ງ ແລະ ພາຫະນະຂົນສົ່ງ**

**ໃນເວລາສິນຄ້າ, ເຄື່ອງຂອງ ມາຮອດດ່ານພາສີຊາຍແດນ ຜູ້ແຈ້ງພາສີ ຫຼື ຜູ້ຂົນສົ່ງ ໃຫ້ປະຕິບັດ ດັ່ງນີ້:**

1. ຕ້ອງແຈ້ງເອກະສານຂົນສົ່ງ ຫຼື ແຈ້ງຕາມແບບພິມທີ່ທາງລັດຖະການພາສີໄດ້ກໍານົດໄວ້ ພາຍໃນ ຊາວສີ່ ຊົ່ວໂມງ;
2. ຕ້ອງແຈ້ງເອກະສານ ກ່ຽວກັບພາຫະນະຂົນສົ່ງ ຕໍ່ເຈົ້າໜ້າທີ່ພາສີ ເພື່ອຄຸ້ມຄອງ ແລະ ຄວບຄຸມຕາມທີ່ໄດ້ກໍານົດໄວ້ໃນລະບຽບການ ແລະ ກົດໝາຍສະບັບນີ້;
3. ບໍ່ໃຫ້ຄ່ຽນຖ່າຍສິນຄ້າ, ເຄື່ອງຂອງ ຈາກພາຫະນະຂົນສົ່ງ ກ່ອນການແຈ້ງເອກະສານຂົນສົ່ງ ເວັ້ນເສຍແຕ່ ໄດ້ຮັບອະນຸຍາດ ຈາກເຈົ້າໜ້າທີ່ພາສີ ຫຼື ມີເຫດສຸດວິໄສ.

**ມາດຕາ 20 ( ປັບປຸງ ). ການແຈ້ງເຄື່ອງຂອງຕິດຕົວຜູ້ໂດຍສານ**

ເຄື່ອງຂອງຕິດຕົວຜູ້ໂດຍສານ ທີ່ອອກ-ເຂົ້າ ຜ່ານດ່ານພາສີຊາຍແດນ ທາງລົດ, ທາງລົດໄຟ, ທາງເຮືອ ແລະ ທາງເຮືອບິນ ຕ້ອງຢູ່ພາຍໃຕ້ການຄວບຄຸມທາງພາສີ. ຜູ້ໂດຍສານທີ່ນໍາສິນຄ້າ, ເຄື່ອງຂອງເກີນຈໍານວນ ຕ້ອງໄດ້ແຈ້ງຕາມແບບພິມທີ່ ລັດຖະການພາສີ ໄດ້ກໍານົດໄວ້ຢ່າງຖືກຕ້ອງ ແລະ ຄົບຖ້ວນ.

ຜູ້ໂດຍສານ ຕ້ອງປະຕິບັດຕາມລະບຽບການຄວບຄຸມ ການສົ່ງອອກ-ນໍາເຂົ້າເງິນຕາຕ່າງປະເທດ, ເງິນກີບ, ວັດຖຸມີຄ່າ, ເຄື່ອງວັດຖຸບູຮານ ແລະ ວັດທະນະທໍາ.

**ມາດຕາ 21 ( ປັບປຸງ ). ການແຈ້ງສິນຄ້າ, ເຄື່ອງຂອງ ທາງໄປສະນີ**

ພັດສະດຸພັນ ແລະ ຖົງເມທາງໄປສະນີ ທີ່ສົ່ງອອກ-ນໍາເຂົ້າ ຫຼື ຜ່ານແດນ ຕ້ອງຢູ່ພາຍໃຕ້ການຄວບຄຸມທາງພາສີ ແລະ ຈະສິ້ນສຸດລົງເມື່ອໄດ້ສໍາເລັດການປະຕິບັດຕາມລະບຽບການທາງພາສີ.

ນິຕິບຸກຄົນ ທີ່ດໍາເນີນທຸລະກິດບໍລິການຈັດສົ່ງ ແລະ ແຈກຢາຍພັດສະດຸພັນ, ຖົງເມທາງໄປສະນີ ຕ້ອງແຈ້ງພາສີ ແທນເຈົ້າຂອງສິນຄ້າ, ເຄື່ອງຂອງ ຕາມລະບຽບກົດໝາຍ ກ່ຽວກັບພາສີ.

**ມາດຕາ 22 ( ປັບປຸງ ). ການແຈ້ງພາສີເປັນລາຍລະອຽດ**

**ຜູ້ແຈ້ງພາສີ ຕ້ອງແຈ້ງພາສີເປັນລາຍລະອຽດແບບທົ່ວໄປ ແລະ/ຫຼື ທາງອີເລັກໂຕຣນິກ ກ່ຽວກັບສິນຄ້າ, ເຄື່ອງຂອງ ທີ່ສົ່ງອອກ-ນໍາເຂົ້າ ແລະ ຜ່ານແດນ ດັ່ງນີ້:**

1. ຂໍ້ມູນທີ່ຈໍາເປັນຕ້ອງປະກອບລົງໃນໃບແຈ້ງພາສີເປັນລາຍລະອຽດ ແລະ ລົງລາຍເຊັນ;
2. ໃບແຈ້ງພາສີເປັນລາຍລະອຽດ ທີ່ຜ່ານການກວດກາຂອງເຈົ້າໜ້າທີ່ພາສີແລ້ວ ຕ້ອງລົງທະບຽນ;

3. ການລົງລາຍເຊັນລົງໃນ ໃບແຈ້ງພາສີເປັນລາຍລະອຽດແບບທົ່ວໄປ ແລະ/ຫຼື ທາງອີເລັກໂຕຣນິກ ມີຄຸນຄ່າເທົ່າທຽມກັນ;
4. ໃບແຈ້ງພາສີເປັນລາຍລະອຽດທີ່ຮັບຮອງ ແລະ ລົງທະບຽນແລ້ວ ບໍ່ສາມາດປ່ຽນແປງໄດ້ ເວັ້ນເສັຍແຕ່ກໍລະນີຜູ້ແຈ້ງພາສີ ມີຂໍ້ມູນ ແລະ ຫຼັກຖານຢັ້ງຢືນຕໍ່ລັດຖະການພາສີ ເພື່ອພິຈາລະນາດັດແກ້ຂໍ້ມູນ ຊຶ່ງຕ້ອງດໍາເນີນການ ກ່ອນການກວດກາສິນຄ້າ, ເຄື່ອງຂອງຕົວຈິງຂອງເຈົ້າໜ້າທີ່ພາສີ;
5. ໃບແຈ້ງພາສີເປັນລາຍລະອຽດແບບທົ່ວໄປທີ່ມີຮອຍລຶບ, ຮອຍຂີດຂ້າ, ຮອຍເປື້ອນ ຖືວ່າໃຊ້ການບໍ່ໄດ້.

ມາດຕາ 23 ( ໃໝ່ ). **ເອກະສານສໍາລັບການແຈ້ງພາສີເປັນລາຍລະອຽດ**

**ເອກະສານສໍາລັບການແຈ້ງພາສີເປັນລາຍລະອຽດ ປະກອບດ້ວຍ:**

1. ໃບແຈ້ງພາສີເປັນລາຍລະອຽດ;
2. ໃບແຈ້ງລາຄາ;
3. ເອກະສານຂົນສົ່ງ;
4. ໃບລາຍການຫຸ້ມຫໍ່ ( ຖ້າມີ );
5. ໃບຢັ້ງຢືນແຫຼ່ງກໍາເນີດສິນຄ້າ ( ຖ້າມີ );
6. ໃບອະນຸຍາດສົ່ງອອກ-ນໍາເຂົ້າ ( ຖ້າມີ ).

ມາດຕາ 24 ( ປັບປຸງ ). **ກໍານົດເວລາ ແລະ ມາດຕະການໃນການແຈ້ງພາສີເປັນລາຍລະອຽດ**

ຜູ້ແຈ້ງພາສີ ຕ້ອງແຈ້ງສິນຄ້າ, ເຄື່ອງຂອງເປັນລາຍລະອຽດ ພາຍໃນກໍານົດ ສິບຫ້າວັນ ລັດຖະການ ນັບແຕ່ວັນເຈົ້າໜ້າທີ່ພາສີໄດ້ບັນທຶກສິນຄ້າ, ເຄື່ອງຂອງ ຕາມເອກະສານຂົນສົ່ງ ເປັນຕົ້ນໄປ.

ຖ້າວ່າຜູ້ແຈ້ງພາສີ ບໍ່ຮູ້ຂໍ້ມູນລະອຽດກ່ຽວກັບສິນຄ້າ, ເຄື່ອງຂອງ ກໍສາມາດກວດເບິ່ງສິນຄ້າ, ເຄື່ອງຂອງຕົວຈິງຢູ່ສາງ ຕາມເວລາທີ່ໄດ້ກໍານົດໄວ້ໃນວັກໜຶ່ງເທິງນີ້ ເພື່ອປະກອບເອກະສານແຈ້ງພາສີ.

ໃນກໍລະນີການແຈ້ງພາສີເປັນລາຍລະອຽດບໍ່ທັນຕາມກໍານົດເວລາດັ່ງກ່າວ ສິນຄ້າ, ເຄື່ອງຂອງ ຕ້ອງຕົກຢູ່ພາຍໃຕ້ການຄວບຄຸມສະເພາະຂອງລັດຖະການພາສີ ແລະ ຕ້ອງປະຕິບັດ ດັ່ງນີ້:

1. ໃຫ້ມາແຈ້ງພາສີເປັນລາຍລະອຽດ ພາຍໃນ ສີ່ສິບຫ້າວັນ ລັດຖະການ ແລະ ຕ້ອງຖືກປັບໃໝເທົ່າກັບ ສູນຈຸດໜຶ່ງສ່ວນຮ້ອຍ (0,1%) ຂອງມູນຄ່າສິນຄ້າ, ເຄື່ອງຂອງ;
2. ຖ້າກາຍກໍານົດເວລາສີ່ສິບຫ້າວັນ ລັດຖະການພາສີ ຕ້ອງປະກາດ ຫຼື ແຈ້ງການໃຫ້ມາແຈ້ງພາສີເປັນລາຍລະອຽດຕື່ມ ພາຍໃນກໍານົດ ຊາວເອັດວັນ ລັດຖະການ ແລະ ຕ້ອງຖືກປັບໃໝ ສູນຈຸດຫ້າສ່ວນຮ້ອຍ (0,5%) ຂອງມູນຄ່າສິນຄ້າ, ເຄື່ອງຂອງ;
3. ຖ້າກາຍກໍານົດເວລາຊາວເອັດວັນອີກ ສິນຄ້າ, ເຄື່ອງຂອງ ຕ້ອງຖືກຮິບເປັນຂອງລັດ.

ສໍາລັບມາດຕະການໃນການແຈ້ງພາສີ ກ່ຽວກັບສິນຄ້າ, ເຄື່ອງຂອງ ເພື່ອຮັບໃຊ້ໂຄງການຂອງລັດ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 25 ( ປັບປຸງ ). ການຊໍາລະຄ່າພາສີ ແລະ ພັນທະອື່ນ**

ພາຍຫຼັງເຈົ້າໜ້າທີ່ພາສີ ໄດ້ຮັບຮອງການແຈ້ງພາສີເປັນລາຍລະອຽດແລ້ວ ຜູ້ແຈ້ງພາສີ ຕ້ອງຊໍາລະຄ່າພາສີ ແລະ ພັນທະອື່ນ ເປັນເງິນກີບ ຕາມລະບຽບການ ໃຫ້ຄົບຖ້ວນຕາມກໍານົດເວລາ.

## ໝວດທີ 6
## ການກວດກາ ແລະ ການນໍາເອົາສິນຄ້າ, ເຄື່ອງຂອງ ອອກຈາກດ່ານພາສີ ຫຼື ສາງ

**ມາດຕາ 26 ( ປັບປຸງ ). ການກວດກາສິນຄ້າ, ເຄື່ອງຂອງ ອອກຈາກດ່ານພາສີ ຫຼື ສາງ**

ພາຍຫຼັງການແຈ້ງພາສີເປັນລາຍລະອຽດ ໄດ້ຖືກຮັບຮອງ ແລະ ລົງທະບຽນແລ້ວ ເຈົ້າໜ້າທີ່ພາສີ ຕ້ອງດໍາເນີນການກວດກາສິນຄ້າ, ເຄື່ອງຂອງທັງໝົດ ຫຼື ບາງສ່ວນແລ້ວແຕ່ເຫັນສົມຄວນ.

ການກວດກາສິນຄ້າ, ເຄື່ອງຂອງຕົວຈິງ ຕ້ອງດໍາເນີນໂດຍຊ້ອງໜ້າຜູ້ແຈ້ງພາສີ ຢູ່ດ່ານພາສີ ຫຼື ຢູ່ໃນສາງເກັບສິນຄ້າ ຫຼື ບໍລິເວນສາງ ຫຼື ໃນສະຖານທີ່ອື່ນ ຊຶ່ງທາງການພາສີໄດ້ກໍານົດໃຫ້.

ໃນກໍລະນີທີ່ມີຂໍ້ຂັດແຍ່ງ ກ່ຽວກັບຜົນຂອງການກວດກາສິນຄ້າ, ເຄື່ອງຂອງບາງສ່ວນນັ້ນ ຜູ້ແຈ້ງພາສີອາດຈະຮ້ອງຂໍໃຫ້ເຈົ້າໜ້າທີ່ພາສີ ທໍາການກວດກາສິນຄ້າ, ເຄື່ອງຂອງທັງໝົດຄືນໃໝ່ກໍໄດ້.

ພາຍຫຼັງສິ້ນສຸດການກວດກາສິນຄ້າ, ເຄື່ອງຂອງ ເຈົ້າໜ້າທີ່ພາສີ ຕ້ອງໄດ້ບັນທຶກຜົນການກວດກາ ກ່ຽວກັບຊະນິດ, ຈໍານວນ, ນໍ້າໜັກ, ລາຄາ, ປະເທດຜະລິດ, ພາຫະນະຂົນສົ່ງ, ວັນເວລາ ແລະ ສະຖານທີ່ກວດກາ ສິນຄ້າ ພ້ອມທັງລົງລາຍເຊັນ, ຊື່ ແລະ ນາມສະກຸນໃສ່ໃບແຈ້ງພາສີເປັນລາຍລະອຽດ ແລະ/ຫຼື ໃບປ່ອຍສິນຄ້າ, ເຄື່ອງຂອງ.

ໃນກໍລະນີຜົນການກວດກາສິນຄ້າ, ເຄື່ອງຂອງ ບໍ່ຖືກຕ້ອງຕາມຂໍ້ມູນທີ່ໄດ້ແຈ້ງລົງໃນໃບແຈ້ງພາສີເປັນລາຍລະອຽດແບບທົ່ວໄປ ແລະ/ຫຼື ໃບແຈ້ງພາສີທາງອີເລັກໂຕຣນິກນັ້ນ ເຈົ້າໜ້າທີ່ພາສີຕ້ອງເຮັດບົດບັນທຶກ ເພື່ອປະກອບສໍານວນຄະດີ.

**ມາດຕາ 27( ປັບປຸງ ). ການຄໍ້າປະກັນເພື່ອນໍາເອົາສິນຄ້າ, ເຄື່ອງຂອງ ອອກຈາກດ່ານພາສີ ຫຼື ສາງ**

**ການຄໍ້າປະກັນເພື່ອນໍາເອົາສິນຄ້າ, ເຄື່ອງຂອງ ອອກຈາກ ດ່ານພາສີ ຫຼື ສາງ ກ່ອນການແຈ້ງພາສີເປັນລາຍລະອຽດ ຕ້ອງປະຕິບັດ ດັ່ງນີ້:**

1. ຜູ້ແຈ້ງພາສີ ຕ້ອງເຮັດໃບຄໍາຮ້ອງຂໍອະນຸຍາດຄໍ້າປະກັນນໍາ ລັດຖະການພາສີ;

2. ມູນຄ່າການຄ້ຳປະກັນ ຕ້ອງເທົ່າກັບ ຄ່າພາສີ ແລະ ພັນທະອື່ນ ໂດຍບວກເພີ່ມຊາວສ່ວນຮ້ອຍ (20%) ດ້ວຍເງິນສົດ ຫຼື ໜັງສືຄ້ຳປະກັນຂອງສະຖາບັນການເງິນ ຫຼື ທະນາຄານ ຫຼື ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ມີຖານະທາງດ້ານການເງິນ ແລະ ທີ່ເຊື່ອຖືໄດ້;
3. ພາຍຫຼັງໄດ້ນຳສິນຄ້າ ອອກຈາກສາງແລ້ວ ພາຍໃນກຳນົດສິບຫ້າວັນ ລັດຖະການ ຕ້ອງແຈ້ງພາສີເປັນລາຍລະອຽດ. ເງິນ ຫຼື ໜັງສືຄ້ຳປະກັນ ຕ້ອງຖືກສົ່ງຄືນ;
4. ຖ້າກາຍກຳນົດເວລາ ສິບຫ້າວັນ ລັດຖະການ ຜູ້ແຈ້ງພາສີ ຕ້ອງຖືກປັບໃໝເທົ່າກັບ ສູນຈຸດສິບສ່ວນຮ້ອຍ ( 0,10% ) ຂອງມູນຄ່າສິນຄ້າ, ເຄື່ອງຂອງ;
5. ຖ້າຫາກບໍ່ປະຕິບັດຕາມສັນຍາຄ້ຳປະກັນດັ່ງກ່າວແລ້ວ ກໍຈະຖືກດຳເນີນຄະດີຕາມລະບຽບກົດໝາຍ.

## ໝວດທີ 7
## ການຢັ້ງຢືນຮັບຮອງລ່ວງໜ້າ ແລະ ການແຈ້ງພາສີກ່ອນສິນຄ້າ, ເຄື່ອງຂອງມາຮອດຊາຍແດນ

ມາດຕາ 28 ( ໃໝ່ ). **ການຢັ້ງຢືນຮັບຮອງລ່ວງໜ້າ**

**ໃນກໍລະນີຜູ້ແຈ້ງພາສີບໍ່ໝັ້ນໃຈ ໃນການຈັດເລກລະຫັດ ແລະ ແຫຼ່ງກຳເນີດສິນຄ້າ ເພື່ອປະກອບການແຈ້ງພາສີເປັນລາຍລະອຽດ ຜູ້ແຈ້ງພາສີສາມາດຂໍຄຳແນະນຳ ແລະ ການຢັ້ງຢືນຮັບຮອງລ່ວງໜ້າ ນຳລັດຖະການພາສີ ດັ່ງນີ້:**

1. ເອກະສານ ແລະ/ຫຼື ຕົວຢ່າງສິນຄ້າ ຕ້ອງນຳສະເໜີເປັນລາຍລັກອັກສອນ ຕໍ່ລັດຖະການພາສີ;
2. ລັດຖະການພາສີ ຕ້ອງພິຈາລະນາຄົ້ນຄວ້າ ເພື່ອອອກເອກະສານຢັ້ງຢືນຮັບຮອງຢ່າງເປັນທາງການ ພາຍໃນກຳນົດ ສິບຫ້າວັນ ລັດຖະການ ນັບແຕ່ວັນໄດ້ຮັບເອກະສານຄົບຖ້ວນແລ້ວ;
3. ໃນກໍລະນີທີ່ລັດຖະການພາສີຕ້ອງການຂໍ້ມູນເພີ່ມເຕີມ ຜູ້ແຈ້ງພາສີຕ້ອງສະໜອງຂໍ້ມູນທີ່ກ່ຽວຂ້ອງ ພາຍໃນກຳນົດ ສິບຫ້າວັນ ລັດຖະການ ນັບແຕ່ວັນໄດ້ຮັບແຈ້ງການຈາກລັດຖະການພາສີ, ຖ້າກາຍກຳນົດເວລາດັ່ງກ່າວ ລັດຖະການພາສີ ຈະບໍ່ຮັບມາພິຈາລະນາ;
4. ໃບຢັ້ງຢືນຮັບຮອງຈາກລັດຖະການພາສີ ມີອາຍຸການນຳໃຊ້ໄດ້ບໍ່ເກີນໜຶ່ງປີ ບົນພື້ນຖານຄຸນລັກສະນະຂອງສິນຄ້າ, ເຄື່ອງຂອງ ທີ່ນຳເຂົ້າຊຶ່ງບໍ່ມີການປ່ຽນແປງ, ຖ້າມີຂໍ້ມູນ, ຫຼັກຖານຢັ້ງຢືນຢ່າງໜັກແໜ້ນກ່ຽວກັບສິນຄ້າ, ເຄື່ອງຂອງທີ່ມີການປ່ຽນແປງນັ້ນ ໃບຢັ້ງຢືນຮັບຮອງສະບັບດັ່ງກ່າວກໍຈະຖືກລຶບລ້າງ;

5. ເມື່ອຂໍ້ມູນ ຫຼື ຫຼັກຖານກ່ຽວກັບສິນຄ້າ, ເຄື່ອງຂອງມີການປ່ຽນແປງ ຜູ້ແຈ້ງພາສີ ຕ້ອງສະເໜີຕໍ່ ລັດຖະການພາສີ ເພື່ອພິຈາລະນາອອກເອກະສານຢັ້ງຢືນສະບັບໃໝ່.

**ມາດຕາ 29 ( ໃໝ່ ). ການແຈ້ງພາສີກ່ອນສິນຄ້າ, ເຄື່ອງຂອງ ມາຮອດດ່ານພາສີຊາຍແດນ**

ເພື່ອອຳນວຍຄວາມສະດວກໃນການສົ່ງອອກ-ນຳເຂົ້າ ຜູ້ແຈ້ງພາສີສາມາດແຈ້ງພາສີເປັນລາຍລະອຽດກ່ອນ ສິນຄ້າ, ເຄື່ອງຂອງ ມາຮອດດ່ານພາສີຊາຍແດນ ແລະ ໃຫ້ປະຕິບັດ ດັ່ງນີ້:

1. ຜູ້ແຈ້ງພາສີ ສາມາດແຈ້ງພາຍໃນກຳນົດເຈັດວັນ ລັດຖະການ ແລະ ຕ້ອງປະກອບເອກະສານໃຫ້ຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 23 ຂອງກົດໝາຍສະບັບນີ້;
2. ພາຍຫຼັງສິນຄ້າ, ເຄື່ອງຂອງ ມາຮອດດ່ານພາສີແລ້ວ ຕ້ອງຊຳລະຄ່າພາສີ ແລະ ພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 25 ຂອງກົດໝາຍສະບັບນີ້.

## ພາກທີ III
## ສິນຄ້າ, ເຄື່ອງຂອງ ປະເພດຄວບຄຸມ ແລະ ເກືອດຫ້າມ

**ມາດຕາ 30 ( ປັບປຸງ ). ສິນຄ້າ, ເຄື່ອງຂອງ ປະເພດຄວບຄຸມ**

ສິນຄ້າ, ເຄື່ອງຂອງ ປະເພດຄວບຄຸມ ແມ່ນ ສິນຄ້າ, ເຄື່ອງຂອງ ທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍທີ່ກ່ຽວຂ້ອງ ດ້ວຍເຫດຜົນຄວາມໝັ້ນຄົງຂອງຊາດ, ສຸຂານາໄມ, ສຸຂານາໄມພືດ, ການຮັກສາສິ່ງແວດລ້ອມ ແລະ ອື່ນໆ ຊຶ່ງຕ້ອງຢູ່ພາຍໃຕ້ການຄວບຄຸມຂອງລັດຖະການພາສີ.

ການສົ່ງອອກ-ນຳເຂົ້າ, ການຜ່ານແດນ ແລະ ການເຄື່ອນຍ້າຍສິນຄ້າ, ເຄື່ອງຂອງ ປະເພດຄວບຄຸມ ຕ້ອງໄດ້ຮັບອະນຸຍາດຈາກລັດຖະບານ ຫຼື ຂະແໜງການທີ່ກ່ຽວຂ້ອງ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 31 ( ປັບປຸງ ). ສິນຄ້າ, ເຄື່ອງຂອງ ປະເພດເກືອດຫ້າມ**

ສິນຄ້າ, ເຄື່ອງຂອງ ປະເພດເກືອດຫ້າມ ແມ່ນ ສິນຄ້າ, ເຄື່ອງຂອງ ທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍທີ່ກ່ຽວຂ້ອງ ເຊັ່ນ ອາວຸດເສິກ, ຢາເສບຕິດ, ວັດຖຸອອກລິດຕໍ່ຈິດປະສາດ ແລະ ສານເຄມີອັນຕະລາຍ ບໍ່ອະນຸຍາດໃຫ້ສົ່ງອອກ-ນຳເຂົ້າ, ຜ່ານແດນ, ເຄື່ອນຍ້າຍ, ຊື້-ຂາຍ ແລະ ມີສິນຄ້າ, ເຄື່ອງຂອງດັ່ງກ່າວໄວ້ໃນຄອບຄອງ.

# ພາກທີ IV
# ມາດຕະການປົກປ້ອງສິດຕໍ່ຊັບສິນທາງປັນຍາ

**ມາດຕາ 32 ( ໃໝ່ ). ມາດຕະການປົກປ້ອງ**

ຖ້າເຈົ້າຂອງສິດຕໍ່ຊັບສິນທາງປັນຍາ ຫາກມີຂໍ້ມູນທີ່ໜ້າເຊື່ອຖືໄດ້ວ່າການສົ່ງອອກ-ນໍາເຂົ້າ ຫຼື ການຂົນສົ່ງສິນຄ້າຜ່ານແດນ ມີສິນຄ້າທີ່ລະເມີດເຄື່ອງໝາຍການຄ້າ ຫຼື ລະເມີດລິຂະສິດຂອງຕົນ ເຈົ້າຂອງສິດນັ້ນ ສາມາດປະກອບຄໍາຮ້ອງແລ້ວ ຍື່ນຕໍ່ລັດຖະການພາສີ ເພື່ອຂໍໃຫ້ດໍາເນີນການກວດກາ ແລະ ຢຶດສິນຄ້ານັ້ນໄວ້ຊົ່ວຄາວ.

**ມາດຕາ 33 ( ໃໝ່ ). ການຈັດຕັ້ງປະຕິບັດມາດຕະການປົກປ້ອງ**

ລັດຖະການພາສີ ເປັນຜູ້ອອກລະບຽບການລະອຽດ ເພື່ອຈັດຕັ້ງປະຕິບັດມາດຕະການປົກປ້ອງ ທີ່ໄດ້ກໍານົດໄວ້ໃນມາດຕາ 32 ຂອງກົດໝາຍສະບັບນີ້ ໂດຍໃຫ້ສອດຄ່ອງກັບກົດໝາຍວ່າດ້ວຍ ຊັບສິນທາງປັນຍາ, ສັນຍາ ແລະ ສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

# ພາກທີ V
# ການເຄື່ອນຍ້າຍສິນຄ້າ, ເຄື່ອງຂອງ

**ມາດຕາ 34 ( ປັບປຸງ ). ການເຄື່ອນຍ້າຍສິນຄ້າ, ເຄື່ອງຂອງພາຍໃນອານາເຂດພາສີ**

ສິນຄ້າ, ເຄື່ອງຂອງ ທີ່ຕ້ອງປະກອບເອກະສານການເຄື່ອນຍ້າຍ ແມ່ນ ສິນຄ້າ, ເຄື່ອງຂອງ ທີ່ຍັງບໍ່ທັນໄດ້ເສຍພາສີ ແລະ ພັນທະອື່ນ, ສິນຄ້າປອດພາສີ, ສິນຄ້າ, ເຄື່ອງຂອງນໍາເຂົ້າຕາມນະໂຍບາຍສົ່ງເສີມການລົງທຶນ ແລະ ສິນຄ້າ, ເຄື່ອງຂອງເຄື່ອນຍ້າຍພາຍໃນລະບົບສາງ.

ຜູ້ແຈ້ງພາສີ ທີ່ມີຈຸດປະສົງເຄື່ອນຍ້າຍສິນຄ້າ, ເຄື່ອງຂອງ ພາຍໃນອານາເຂດພາສີ ຕ້ອງໄປຕາມເສັ້ນທາງສະເພາະທີ່ລັດຖະການພາສີກໍານົດ ເມື່ອຮອດປາຍທາງແລ້ວ ຕ້ອງນໍາໄປແຈ້ງຕໍ່ເຈົ້າໜ້າທີ່ພາສີ ເພື່ອດໍາເນີນຕາມລະບຽບການ.

**ມາດຕາ 35 ( ໃໝ່ ). ການເຄື່ອນຍ້າຍສິນຄ້າ, ເຄື່ອງຂອງ ນອກອານາເຂດພາສີ**

ໃນກໍລະນີມີຄວາມຈໍາເປັນທີ່ບໍ່ສາມາດເຄື່ອນຍ້າຍສິນຄ້າ, ເຄື່ອງຂອງ ພາຍໃນອານາເຂດພາສີໄດ້ ລັດຖະການພາສີ ຈະອະນຸຍາດໃຫ້ເຄື່ອນຍ້າຍ ໂດຍອາໄສດິນແດນຂອງຕ່າງປະເທດ ຕາມການເຫັນດີຂອງປະເທດໃຫ້ຜ່ານ; ສິນຄ້າ, ເຄື່ອງຂອງດັ່ງກ່າວນັ້ນ ຈະໄດ້ຮັບການຍົກເວັ້ນຄ່າພາສີສົ່ງອອກ ພ້ອມທັງຍົກເວັ້ນການປະຕິບັດລະບຽບການສົ່ງອອກ-ນໍາເຂົ້າ.

ການຂົນສົ່ງສິນຄ້າ, ເຄື່ອງຂອງ ດັ່ງກ່າວ ຕ້ອງມີໃບແຈ້ງພາສີ ຕິດຕາມໄປນໍາ.

**ມາດຕາ 36 ( ປັບປຸງ ). ການຂົນສົ່ງສິນຄ້າ, ເຄື່ອງຂອງຜ່ານແດນສາກົນ**

**ຜູ້ດຳເນີນການຂົນສົ່ງ, ຜູ້ແຈ້ງພາສີ ທີ່ດຳເນີນການຂົນສົ່ງສິນຄ້າ, ເຄື່ອງຂອງ ຜ່ານແດນສາກົນ ໂດຍຜ່ານດິນແດນຂອງ ສປປ ລາວ ຕ້ອງໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງ ແລະ ລັດຖະການພາສີ ແລະ ໃຫ້ປະຕິບັດ ດັ່ງນີ້:**

1. ຜູ້ດຳເນີນການຂົນສົ່ງ ຕ້ອງຄ້ຳປະກັນເປັນແຊັກເງິນສົດ ຫຼື ໜັງສືຄ້ຳປະກັນຂອງທະນາຄານ ຫຼື ສະຖາບັນການເງິນ ເທົ່າກັບຄ່າພາສີ ແລະ ພັນທະອື່ນ;
2. ຜູ້ດຳເນີນການຂົນສົ່ງ ຕ້ອງແຈ້ງເອກະສານທີ່ກ່ຽວຂ້ອງໃນການຂົນສົ່ງ ຕໍ່ລັດຖະການພາສີ;
3. ພາຫະນະຂົນສົ່ງ ຕ້ອງໄປຕາມເສັ້ນທາງສະເພາະ ແລະ ໄລຍະເວລາທີ່ລັດຖະການພາສີໄດ້ກຳນົດ;
4. ສິນຄ້າ, ເຄື່ອງຂອງ ຜ່ານແດນສາກົນ ແມ່ນຢູ່ພາຍໃຕ້ການຄວບຄຸມຂອງເຈົ້າໜ້າທີ່ພາສີ ໂດຍບໍ່ໃຫ້ຈຳໜ່າຍ;
5. ໃນກໍລະນີເກີດອຸປະຕິເຫດ ຫຼື ເຫດສຸດວິໄສ ຕ້ອງແຈ້ງຕໍ່ເຈົ້າໜ້າທີ່ພາສີບ່ອນໃກ້ທີ່ສຸດ, ຖ້າມີການຄ່ຽນຖ່າຍ ສິນຄ້າ, ເຄື່ອງຂອງ ຕ້ອງໄດ້ຮັບອະນຸຍາດຈາກເຈົ້າໜ້າທີ່ພາສີ.

   ໃນກໍລະນີສິນຄ້າ, ເຄື່ອງຂອງ ທີ່ໄດ້ຮັບຄວາມເສັຍຫາຍຈາກອຸປະຕິເຫດ ຊຶ່ງບໍ່ສາມາດເກັບກູ້ຄືນໄດ້ ຫຼື ມີຜົນສະທ້ອນຕໍ່ສິ່ງແວດລ້ອມນັ້ນ ຜູ້ດຳເນີນການຂົນສົ່ງຕ້ອງຮັບຜິດຊອບຕໍ່ລະບຽບກົດໝາຍ ສປປ ລາວ.
6. ການຂົນສົ່ງສິນຄ້າ, ເຄື່ອງຂອງຜ່ານແດນສາກົນ ແລະ ການຄ້ຳປະກັນ ໄດ້ສິ້ນສຸດລົງ ເມື່ອສິນຄ້າ, ເຄື່ອງຂອງ ຖືກນຳອອກຈາກດິນແດນ ສປປ ລາວ ແລະ ມີການຢັ້ງຢືນຈາກເຈົ້າໜ້າທີ່ພາສີຊາຍແດນ. ເງິນ ຫຼື ໜັງສືຄ້ຳປະກັນ ຕ້ອງຖືກສົ່ງຄືນໃຫ້ແກ່ເຈົ້າຂອງ.

## ພາກທີ VI
## ສາງສິນຄ້າ, ເຄື່ອງຂອງ ແລະ ລະບົບສາງ

**ມາດຕາ 37 ( ປັບປຸງ ). ສາງສິນຄ້າ, ເຄື່ອງຂອງ**

ສາງສິນຄ້າ, ເຄື່ອງຂອງ ແມ່ນ ສະຖານທີ່ເກັບຮັກສາ ສິນຄ້າ, ເຄື່ອງຂອງຊົ່ວຄາວ ທີ່ຕັ້ງຢູ່ໃນອານາເຂດພາສີ ແລະ ຢູ່ພາຍໃຕ້ການຄວບຄຸມຂອງເຈົ້າໜ້າທີ່ພາສີ ເພື່ອລໍຖ້າການແຈ້ງພາສີ.

**ມາດຕາ 38 ( ປັບປຸງ ). ລະບົບສາງ**

ລະບົບສາງ ແມ່ນ ບັນດາສາງເກັບຮັກສາ ສິນຄ້າ, ເຄື່ອງຂອງ ເພື່ອສົ່ງອອກ-ນຳເຂົ້າໃນກຳນົດເວລາອັນແນ່ນອນ ໂດຍງົດເກັບພາສີ ແລະ ຢູ່ພາຍໃຕ້ການຄວບຄຸມຂອງລັດຖະການພາສີ ເພື່ອລໍຖ້າການແຈ້ງພາສີ.

**ລະບົບສາງ ມີ ສີ່ ປະເພດ ດັ່ງນີ້:**

1. **ສາງຈິງ** ແມ່ນ ບ່ອນເກັບມ້ຽນສິນຄ້າ, ເຄື່ອງຂອງທົ່ວໄປທີ່ມີລັກສະນະປົກກະຕິ ຊຶ່ງບໍ່ກວມເອົາສິນຄ້າ, ເຄື່ອງຂອງ ທີ່ຖືກຈັດໄວ້ໃນປະເພດ ສາງທີ 2, 3 ແລະ 4 ຂອງມາດຕານີ້;
2. **ສາງພາງ** ແມ່ນ ບ່ອນເກັບມ້ຽນສິນຄ້າ, ເຄື່ອງຂອງ ສຳລັບຮ້ານຄ້າປອດພາສີ ຊຶ່ງມີ ສັນຍາຄ້ຳປະກັນວ່າຈະຂາຍສິນຄ້າ, ເຄື່ອງຂອງ ໃຫ້ແກ່ຜູ້ອອກໄປຕ່າງປະເທດ ແລະ ຈຳໜ່າຍ ຕາມລະບຽບການສະເພາະ;
3. **ສາງອຸດສາຫະກຳ** ແມ່ນ ບ່ອນເກັບມ້ຽນສິນຄ້າ, ເຄື່ອງຂອງ ທີ່ສົ່ງອອກ-ນຳເຂົ້າຊົ່ວຄາວ ເພື່ອປະກອບ, ດັດແປງ, ປຸງແຕ່ງ ຫຼື ສ້ອມແປງ ແລ້ວສົ່ງອອກຄືນ;
4. **ສາງພິເສດ** ແມ່ນ ບ່ອນເກັບມ້ຽນສິນຄ້າ, ເຄື່ອງຂອງ ທີ່ມີລັກສະນະພິເສດ ຊຶ່ງໄດ້ແກ່:
   - ສັດມີຊີວິດ;
   - ສິນຄ້າ, ເຄື່ອງຂອງ ປະເພດຄວບຄຸມ ຫຼື ຕົກຢູ່ໃນການຄຸ້ມຄອງສະເພາະ;
   - ສິນຄ້າ, ເຄື່ອງຂອງທີ່ມີຄວາມສ່ຽງສູງ ແລະ ເປັນອັນຕະລາຍ ຊຶ່ງບໍ່ເໝາະສົມເກັບຮັກສາໄວ້ໃນປະເພດສາງອື່ນ.

ກະຊວງການເງິນ ເປັນຜູ້ອະນຸຍາດໃຫ້ສ້າງຕັ້ງສາງ, ກຳນົດລະບຽບການຕ່າງໆ ກ່ຽວກັບສະຖານທີ່ປຸກສ້າງສາງ, ການນຳໃຊ້, ການຄວບຄຸມ, ການກຳນົດເວລາເກັບມ້ຽນສິນຄ້າ, ເຄື່ອງຂອງ ໄວ້ໃນແຕ່ລະລະບົບສາງ.

**ມາດຕາ 39 ( ໃໝ່ ). ສິນຄ້າ, ເຄື່ອງຂອງ ທີ່ເສື່ອມຄຸນນະພາບໄວ**

ສິນຄ້າ, ເຄື່ອງຂອງ ທີ່ເສື່ອມຄຸນນະພາບໄວ ໂດຍບໍ່ມີເຈົ້າຂອງມາພົວພັນນັ້ນ ລັດຖະການພາສີ ມີສິດປະມູນຂາຍອອກ ແລະ ຫັກຄ່າໃຊ້ຈ່າຍຕ່າງໆທີ່ຈຳເປັນໃນການປະມູນ, ສ່ວນເງິນທີ່ຍັງເຫຼືອແມ່ນຮັກສາໄວ້ເພື່ອດຳເນີນຕາມຂັ້ນຕອນຂອງລະບຽບກົດໝາຍ.

**ມາດຕາ 40 ( ປັບປຸງ ). ລະບຽບການຄຸ້ມຄອງສາງ**

ເຈົ້າໜ້າທີ່ພາສີ ມີສິດກວດເບິ່ງບັນຊີ, ສິນຄ້າ, ເຄື່ອງຂອງ ທີ່ຢູ່ໃນສາງ ປະເພດຕ່າງໆໄດ້ທຸກເວລາ ຕາມລະບຽບການ ຖ້າເຫັນວ່າມີຄວາມຈຳເປັນ.

ໃນກໍລະນີ ສິນຄ້າ, ເຄື່ອງຂອງຢູ່ໃນສາງ ມີຈຳນວນບໍ່ຄົບຖ້ວນຕາມບັນຊີທີ່ໄດ້ແຈ້ງໄວ້ໃນເບື້ອງຕົ້ນ ຜູ້ຄຸ້ມຄອງສາງ ຕ້ອງຮັບຜິດຊອບຕາມລະບຽບກົດໝາຍ.

ການເຄື່ອນຍ້າຍສິນຄ້າ, ເຄື່ອງຂອງ ພາຍໃນລະບົບສາງ ຕ້ອງມີໃບເຄື່ອນຍ້າຍສິນຄ້າ, ເຄື່ອງຂອງຈາກເຈົ້າໜ້າທີ່ພາສີ.

## ພາກທີ VII
## ການນຳອອກ-ນຳເຂົ້າສິນຄ້າ, ເຄື່ອງຂອງ ຊົ່ວຄາວ

ມາດຕາ 41 ( ປັບປຸງ ). **ການນຳອອກສິນຄ້າ, ເຄື່ອງຂອງຊົ່ວຄາວ**

ການນຳເອົາສິນຄ້າ, ເຄື່ອງຂອງ ອອກນອກປະເທດເປັນການຊົ່ວຄາວ ໃນເວລານຳກັບຄືນປະເທດ ຖ້າຫາກມີການດັດແປງ, ເສີມແຕ່ງ ຫຼື ເພີ່ມເຕີມອຸປະກອນໃດໜຶ່ງ ຕ້ອງໄດ້ເສັຍພາສີ ແລະ ພັນທະອື່ນ ຕາມລະບຽບການ ໂດຍຖືເອົາມູນຄ່າຂອງການດັດແປງ, ເສີມແຕ່ງ ຫຼື ເພີ່ມເຕີມອຸປະກອນນັ້ນ ເປັນພື້ນຖານການຄິດໄລ່.

ການນຳເອົາສິນຄ້າ, ເຄື່ອງຂອງ ໄປວາງສະແດງ, ທົດລອງ, ຄົ້ນຄວ້າ, ວິໄຈ ແລະ ອື່ນໆ ຢູ່ຕ່າງປະເທດ ຕ້ອງໄດ້ແຈ້ງພາສີເປັນລາຍລະອຽດ, ຄ້ຳປະກັນການນຳອອກ ແລະ ປະຕິບັດຕາມລະບຽບການທີ່ກ່ຽວຂ້ອງ.

ຖ້າຫາກແມ່ນສິນຄ້າ, ເຄື່ອງຂອງປະເພດຄວບຄຸມ ຕ້ອງໄດ້ຮັບອະນຸຍາດຈາກຂະແໜງການທີ່ກ່ຽວຂ້ອງ.

ສິນຄ້າ, ເຄື່ອງຂອງ ທີ່ອະນຸຍາດນຳອອກຊົ່ວຄາວ ແມ່ນ ໄດ້ຮັບການງົດເກັບພາສີ ແລະ ພັນທະອື່ນ.

ມາດຕາ 42 ( ໃໝ່ ). **ການນຳເຂົ້າຊົ່ວຄາວ**

**ການນຳເຂົ້າສິນຄ້າ, ເຄື່ອງຂອງ ຊົ່ວຄາວ ມີ ດັ່ງນີ້:**

1. ວັດຖຸສິ່ງຂອງ ເພື່ອຜະລິດ, ປຸງແຕ່ງ, ປະກອບ , ດັດແປງ ຫຼື ສ້ອມແປງ;
2. ພາຫະນະ ເພື່ອການສຳຫຼວດອອກແບບຂອງໂຄງການ;
3. ພາຫະນະ ເພື່ອການທ່ອງທ່ຽວ ຢ້ຽມຢາມ;
4. ວັດຖຸປະກອນ ເພື່ອການສຳຫຼວດອອກແບບຂອງໂຄງການ;
5. ສິນຄ້າ, ເຄື່ອງຂອງ ເພື່ອການວາງສະແດງ;
6. ເຄື່ອງຂອງ ເພື່ອການສຶກສາ ແລະ ການທົດລອງ;

ສິນຄ້າ, ເຄື່ອງຂອງ ທີ່ກ່າວໄວ້ໃນຂໍ້ 1 ຫາ 6 ເທິງນີ້ ແມ່ນໄດ້ຮັບການງົດເກັບພາສີ ແລະ ພັນທະອື່ນ ແລະ ເວລາສົ່ງອອກຄືນ ແມ່ນໄດ້ຮັບການຍົກເວັ້ນພາສີຕາມທີ່ໄດ້ກຳນົດໄວ້ໃນລະບຽບການ.

**ມາດຕາ 43 ( ປັບປຸງ ). ການນຳເຂົ້າວັດຖຸສິ່ງຂອງເພື່ອຜະລິດ, ປຸງແຕ່ງ, ປະກອບ, ດັດແປງ ຫຼື ສ້ອມແປງ**

ການນຳເຂົ້າຊົ່ວຄາວ ວັດຖຸສິ່ງຂອງ ລວມທັງພາຊະນະບັນຈຸ ແລະ ວັດສະດຸຫຸ້ມຫໍ່ຕ່າງໆ ເພື່ອຜະລິດ, ປຸງແຕ່ງ ເປັນຜະລິດຕະພັນສຳເລັດຮູບ ຫຼື ເຄິ່ງສຳເລັດຮູບ, ປະກອບ, ດັດແປງ ຫຼື ສ້ອມແປງແລ້ວນຳອອກຄືນ ທີ່ໄດ້ຮັບອະນຸຍາດ ຕາມລະບຽບການຂອງຂະແໜງການທີ່ກ່ຽວຂ້ອງ ແມ່ນໄດ້ຮັບການງົດເກັບພາສີ ແລະ ໃຫ້ປະຕິບັດ ດັ່ງນີ້:

1. ຕ້ອງມີ ແຜນການນຳເຂົ້າ ແລະ/ຫຼື ສູດການຜະລິດ ສະເໜີຕໍ່ລັດຖະການພາສີ;
2. ຕ້ອງປະຕິບັດຕາມກຳນົດເວລາຂອງລະບຽບການນຳເຂົ້າຊົ່ວຄາວ, ຖ້າປະຕິບັດບໍ່ໄດ້ ຕ້ອງສະເໜີຕໍ່ລັດຖະການພາສີ;
3. ສິ່ງທີ່ເຫຼືອຈາກ ການຜະລິດ, ການປຸງແຕ່ງ, ການປະກອບ, ການດັດແປງ ຫຼື ຜະລິດຕະພັນສຳເລັດຮູບ, ເຄິ່ງສຳເລັດຮູບ ທີ່ມີຄຸນນະພາບບໍ່ສອດຄ່ອງກັບເງື່ອນໄຂສົ່ງອອກຄືນໄດ້ນັ້ນ ຕ້ອງໄດ້ເສຍພາສີ ແລະ ພັນທະອື່ນ ຕາມລະບຽບການ. ໃນກໍລະນີສິ່ງທີ່ເຫຼືອບໍ່ສາມາດນຳໃຊ້ໄດ້ ຫຼື ເປັນຜົນກະທົບຕໍ່ສຸຂະພາບ ແລະ ສິ່ງແວດລ້ອມ ຕ້ອງທຳລາຍຖິ້ມຕາມລະບຽບການ ແລ້ວແຈ້ງຕໍ່ເຈົ້າໜ້າທີ່ພາສີຊາບ.

**ມາດຕາ 44 ( ປັບປຸງ ). ການນຳເຂົ້າພາຫະນະ ເພື່ອການສຳຫຼວດອອກແບບຂອງໂຄງການ**

**ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງນຳເຂົ້າຊົ່ວຄາວພາຫະນະ ເພື່ອນຳໃຊ້ເຂົ້າໃນການສຳຫຼວດອອກແບບຂອງໂຄງການ ຕາມສັນຍາກັບລັດຖະບານ ແຫ່ງ ສປປ ລາວ ໃຫ້ປະຕິບັດຕາມເງື່ອນໄຂ ດັ່ງນີ້:**

1. ການນຳເຂົ້າພາຫະນະ ແມ່ນອີງໃສ່ແຜນແມ່ບົດ, ບໍລິມາດວຽກຕົວຈິງຂອງໂຄງການ ແລະ ສັນຍາ ກັບຂະແໜງການທີ່ກ່ຽວຂ້ອງ;
2. ການນຳເຂົ້າພາຫະນະດັ່ງກ່າວ ຕ້ອງມີໃບທະບຽນນຳໃຊ້ຢ່າງຖືກຕ້ອງຢູ່ຕ່າງປະເທດ;
3. ການນຳເຂົ້າພາຫະນະ ຕ້ອງເຮັດສັນຍາຄ້ຳປະກັນນຳລັດຖະການພາສີ ແລະ ມີກຳນົດເວລານຳໃຊ້ບໍ່ເກີນສອງປີ ຫຼື ບໍ່ກາຍວັນສິ້ນສຸດຂອງໂຄງການ. ຖ້າມີຈຸດປະສົງຂໍຕໍ່ອາຍຸຂອງສັນຍາຄ້ຳປະກັນ ຕ້ອງນຳເອກະສານ ແລະ ພາຫະນະ ສະເໜີຕໍ່ລັດຖະການພາສີ ກ່ອນວັນໝົດກຳນົດສັນຍາຄ້ຳປະກັນສາມສິບວັນ ເພື່ອພິຈາລະນາ;
4. ໃນກໍລະນີບໍ່ສາມາດນຳອອກຄືນໄດ້ ຕ້ອງນຳເອກະສານ ແລະ ພາຫະນະ ສະເໜີຕໍ່ລັດຖະການພາສີ ກ່ອນວັນໝົດກຳນົດສັນຍາຄ້ຳປະກັນ ສາມສິບວັນ ເພື່ອພິຈາລະນາ.

**ມາດຕາ 45 ( ປັບປຸງ ). ການນຳເຂົ້າພາຫະນະ ເພື່ອການທ່ອງທ່ຽວ ຢ້ຽມຢາມ**

ຜູ້ມີຈຸດປະສົງນຳພາຫະນະເຂົ້າມາ ເພື່ອທ່ອງທ່ຽວ ຢ້ຽມຢາມ ຫຼື ພົວພັນວຽກງານ ຕ້ອງປະຕິບັດຕາມລະບຽບການຂອງຂະແໜງການທີ່ກ່ຽວຂ້ອງ ແລະ ເງື່ອນໄຂ ດັ່ງນີ້:

1. ຕ້ອງແຈ້ງລາຍລະອຽດຂອງພາຫະນະ ຕໍ່ເຈົ້າໜ້າທີ່ພາສີ ເພື່ອດຳເນີນຕາມລະບຽບການ;
2. ຕ້ອງແມ່ນພາຫະນະ ທີ່ຂຶ້ນທະບຽນແລ້ວ ຢູ່ຕ່າງປະເທດ;
3. ຕ້ອງນຳພາຫະນະດັ່ງກ່າວອອກຄືນຕາມກຳນົດເວລາ ແລະ ຕາມດ່ານພາສີຊາຍແດນ ທີ່ເຈົ້າໜ້າທີ່ພາສີ ໄດ້ກຳນົດ, ຖ້າກາຍກຳນົດເວລາດັ່ງກ່າວ ຕ້ອງຖືກປັບໃໝ ຕາມລະບຽບການ;
4. ໃນກໍລະນີມີຈຸດປະສົງຂໍຕໍ່ອາຍຸຂອງໃບອະນຸຍາດ ຕ້ອງນຳເອົາເອກະສານ ແລະ ພາຫະນະສະເໜີ ຕໍ່ລັດຖະການພາສີ ກ່ອນວັນໝົດກຳນົດ ຂອງໃບອະນຸຍາດ ດັ່ງກ່າວ ສອງວັນ ເພື່ອພິຈາລະນາ.

**ມາດຕາ 46 ( ປັບປຸງ ). ການນຳເຂົ້າວັດຖູປະກອນ ເພື່ອການສຳຫຼວດອອກແບບຂອງໂຄງການ**

**ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງນຳເຂົ້າຊົ່ວຄາວ ວັດຖູປະກອນ ເປັນຕົ້ນ ເຄື່ອງຈັກ, ເຄື່ອງມື ເພື່ອນຳໃຊ້ເຂົ້າໃນການສຳຫຼວດອອກແບບ ແລະ ການຜະລິດຂອງໂຄງການ ຕາມສັນຍາກັບລັດຖະບານ ແຫ່ງ ສປປ ລາວ ຕ້ອງປະຕິບັດຕາມເງື່ອນໄຂ ດັ່ງນີ້:**

1. ການນຳເຂົ້າວັດຖູປະກອນ ແມ່ນ ອີງໃສ່ແຜນແມ່ບົດ, ບໍລິມາດວຽກຕົວຈິງຂອງ ໂຄງການ ແລະ ສັນຍາ ກັບຂະແໜງການທີ່ກ່ຽວຂ້ອງ;
2. ການນຳເຂົ້າວັດຖູປະກອນ ມີອາຍຸການນຳໃຊ້ຕະຫຼອດໄລຍະເວລາຂອງໂຄງການ ແລະ ສາມາດນຳອອກຄືນໄດ້ຕາມຈຳນວນເດີມ;
3. ການນຳເຂົ້າດັ່ງກ່າວ ແມ່ນ ຖືກງົດເກັບພາສີ ແລະ ພັນທະອື່ນ ແລະ ຢູ່ພາຍໃຕ້ການຄວບຄຸມຂອງ ລະບຽບການນຳເຂົ້າຊົ່ວຄາວ;
4. ການນຳເຂົ້າວັດຖູປະກອນ ຕ້ອງເຮັດສັນຍາຄ້ຳປະກັນນຳລັດຖະການພາສີ ຊຶ່ງມີກຳນົດເວລານຳໃຊ້ບໍ່ເກີນໜຶ່ງປີ, ຖ້າມີຈຸດປະສົງຂໍຕໍ່ອາຍຸຂອງສັນຍາຄ້ຳປະກັນ ຕ້ອງນຳເອກະສານ ສະເໜີຕໍ່ລັດຖະການພາສີ ກ່ອນວັນໝົດກຳນົດສັນຍາຄ້ຳປະກັນ ສາມສິບ ວັນ ເພື່ອພິຈາລະນາ;
5. ໃນກໍລະນີບໍ່ສາມາດນຳອອກຄືນໄດ້ ຕ້ອງນຳເອກະສານ ສະເໜີຕໍ່ລັດຖະການພາສີ ກ່ອນວັນໝົດກຳນົດສັນຍາຄ້ຳປະກັນ ສາມສິບວັນ ເພື່ອພິຈາລະນາ.

**ມາດຕາ 47 ( ປັບປຸງ ). ການນຳເຂົ້າສິນຄ້າ, ເຄື່ອງຂອງ ເພື່ອການວາງສະແດງ**

ການນຳເຂົ້າສິນຄ້າ, ເຄື່ອງຂອງ ເປັນການຊົ່ວຄາວ ເພື່ອການວາງສະແດງ ໃຫ້ປະຕິບັດຕາມລະບຽບການ ດັ່ງນີ້:

1. ຕ້ອງມີເອກະສານຢັ້ງຢືນ ຫຼື ມີການຄໍ້າປະກັນ ຈາກຂະແໜງການທີ່ກ່ຽວຂ້ອງ;
2. ຕ້ອງເຮັດໜັງສືຄໍ້າປະກັນ ນຳລັດຖະການພາສີ;
3. ຕ້ອງນຳອອກຄືນຕາມ ຈຳນວນ ແລະ ສະພາບເດີມ ເມື່ອການວາງສະແດງໄດ້ສິ້ນສຸດແລ້ວ.

**ມາດຕາ 48 ( ໃໝ່ ). ການນຳເຂົ້າເຄື່ອງຂອງ ເພື່ອການສຶກສາ ແລະ ການທົດລອງ**

ການນຳເຂົ້າ ເຄື່ອງຂອງ ເປັນການຊົ່ວຄາວ ເພື່ອການສຶກສາ ແລະ ການທົດລອງ ທີ່ບໍ່ແມ່ນລັກສະນະທາງການຄ້າ ຕ້ອງມີເອກະສານຢັ້ງຢືນຈາກຂະແໜງການທີ່ກ່ຽວຂ້ອງ ແລະ ນຳອອກຄືນຕາມຈຳນວນເດີມ.

**ມາດຕາ 49 ( ໃໝ່ ). ມາດຕະການຄຸ້ມຄອງການນຳເຂົ້າຊົ່ວຄາວ**

ຜູ້ເຮັດສັນຍາຄໍ້າປະກັນ ນຳລັດຖະການພາສີ ຕ້ອງປະຕິບັດຕາມກຳນົດເວລາ ແລະ ເງື່ອນໄຂທີ່ໄດ້ກຳນົດໄວ້ຢ່າງເຂັ້ມງວດ.

ສິນຄ້າ, ເຄື່ອງຂອງ ທີ່ນຳເຂົ້າຊົ່ວຄາວ ບໍ່ອະນຸຍາດໃຫ້ໂອນກຳມະສິດ, ຊວດຈຳ, ແລກປ່ຽນ, ຊື້-ຂາຍ ແລະ ນຳໃຊ້ໂດຍບໍ່ຖືກເປົ້າໝາຍ. ຖ້າມີການລະເມີດ ຈະຖືກດຳເນີນຄະດີ ຕາມລະບຽບກົດໝາຍ.

ໃນກໍລະນີມີຄວາມຈຳເປັນຕ້ອງການຊົມໃຊ້ພາຍໃນ ຕ້ອງໄດ້ຮັບອະນຸຍາດຈາກລັດຖະການພາສີ.

# ພາກທີ VIII

# ການຍົກເວັ້ນ, ການງົດເກັບພາສີ ແລະ ພັນທະອື່ນ

## ໝວດທີ 1

## ການຍົກເວັ້ນ, ການງົດເກັບພາສີ ແລະ ພັນທະອື່ນ ທາງການທູດ ແລະ ອົງການຈັດຕັ້ງສາກົນ

**ມາດຕາ 50 ( ປັບປຸງ ). ການນຳເຂົ້າເຄື່ອງຂອງ ແລະ ພາຫະນະ ເພື່ອຮັບໃຊ້ທາງການທູດ**

ການນຳເຂົ້າເຄື່ອງຂອງ ແລະ ພາຫະນະ ເພື່ອຮັບໃຊ້ທາງການທູດ ຊຶ່ງໄດ້ປະຕິບັດຕາມສົນທິສັນຍາກຸງວຽນ ວ່າດ້ວຍ ການພົວພັນທາງການທູດ ສະບັບລົງວັນທີ 18 ເມສາ 1961 ແລະ ໄດ້ຮັບ

ການຢັ້ງຢືນ ຈາກ ກະຊວງການຕ່າງປະເທດ ແຫ່ງ ສປປ ລາວ ແມ່ນ ໄດ້ຮັບການຍົກເວັ້ນ, ການງົດເກັບພາສີ ແລະ ພັນທະອື່ນ.

**ມາດຕາ 51 ( ປັບປຸງ ). ການນຳເຂົ້າເຄື່ອງຂອງ ແລະ ພາຫະນະ ເພື່ອຮັບໃຊ້ອົງການຈັດຕັ້ງສາກົນ**

ການນຳເຂົ້າເຄື່ອງຂອງ ແລະ ພາຫະນະ ເພື່ອຮັບໃຊ້ອົງການຈັດຕັ້ງສາກົນ ຫຼື ອົງການຈັດຕັ້ງຕ່າງປະເທດ ທີ່ບໍ່ສັງກັດລັດຖະບານ ແລະ ຜູ້ຊ່ຽວຊານຕ່າງປະເທດປະຈຳໂຄງການ ໂດຍໄດ້ຮັບການຢັ້ງຢືນ ຫຼື ການອະນຸຍາດ ຈາກ ກະຊວງການຕ່າງປະເທດ ແຫ່ງ ສປປ ລາວ ແມ່ນ ໄດ້ຮັບການຍົກເວັ້ນ, ການງົດເກັບພາສີ ແລະ ພັນທະອື່ນ.

**ມາດຕາ 52 ( ໃໝ່ ). ການສິ້ນສຸດການຍົກເວັ້ນ, ການງົດເກັບພາສີ ແລະ ພັນທະອື່ນ**

ເຄື່ອງຂອງ ແລະ ພາຫະນະທີ່ໄດ້ຮັບການຍົກເວັ້ນ, ການງົດເກັບພາສີ ແລະ ພັນທະອື່ນ ຂອງນັກການທູດ, ອົງການຈັດຕັ້ງສາກົນ, ອົງການຈັດຕັ້ງຕ່າງປະເທດ ທີ່ບໍ່ສັງກັດລັດຖະບານ ແລະ ຜູ້ຊ່ຽວຊານຕ່າງປະເທດປະຈຳໂຄງການ ພາຍຫຼັງສິ້ນສຸດໜ້າທີ່ ຢູ່ ສປປ ລາວ ແລ້ວ ໃຫ້ນຳເຄື່ອງຂອງ ແລະ ພາຫະນະດັ່ງກ່າວອອກຄືນ, ຖ້າຫາກມີຈຸດປະສົງຊົມໃຊ້ພາຍໃນ ກໍຕ້ອງໄດ້ເສຍພາສີ ແລະ ພັນທະອື່ນ ຕາມລະບຽບການ.

## ໝວດທີ 2
## ການຍົກເວັ້ນພາສີ ແລະ ພັນທະອື່ນ ທົ່ວໄປ

**ມາດຕາ 53 ( ປັບປຸງ ). ການຍົກເວັ້ນພາສີ ແລະ ພັນທະອື່ນ ທົ່ວໄປ**

**ສິນຄ້າ, ເຄື່ອງຂອງ ນຳເຂົ້າ ທີ່ໄດ້ຮັບການຍົກເວັ້ນພາສີ ແລະ ພັນທະອື່ນ ທົ່ວໄປ ມີ ດັ່ງນີ້:**

1. ເຄື່ອງຕິດຕົວຂອງຜູ້ໂດຍສານ;
2. ເຄື່ອງຮັບໃຊ້ບາງປະເພດ ໃນເວລາຍົກຍ້າຍບ່ອນຢູ່;
3. ຂອງຂວັນ ຂອງຄະນະຜູ້ແທນທີ່ໄປເຄື່ອນໄຫວຢູ່ຕ່າງປະເທດ;
4. ສິນຄ້າ, ເຄື່ອງຂອງທີ່ໄດ້ຈາກແຫຼ່ງເງິນຊ່ວຍເຫຼືອ ແລະ ກູ້ຢືມ ຂອງລັດຖະບານ;
5. ເຄື່ອງຮັບໃຊ້ອັນຈຳເປັນແກ່ການສຶກສາ, ສາທາລະນະສຸກ, ການຄົ້ນຄວ້າວິທະຍາສາດ, ເຄື່ອງຂອງຕົວຢ່າງ ແລະ ທາງສາສະໜາ;
6. ເຄື່ອງຮັບໃຊ້ວິຊາສະເພາະໃນການປ້ອງກັນຊາດ, ປ້ອງກັນຄວາມສະຫງົບ.

ລັດຖະບານເປັນຜູ້ກຳນົດລະອຽດ ກ່ຽວກັບສິນຄ້າ, ເຄື່ອງຂອງ ທີ່ຈະຍົກເວັ້ນພາສີ. ໃນກໍລະນີທີ່ຈຳເປັນ ລັດຖະບານ ກໍມີສິດສະເໜີ ຕໍ່ຄະນະປະຈຳສະພາແຫ່ງຊາດ ເພື່ອພິຈາລະນາກຳນົດລາຍການສິນຄ້າ, ເຄື່ອງຂອງ ຍົກເວັ້ນພາສີ ເພີ່ມເຕີມ.

**ມາດຕາ 54 ( ປັບປຸງ ). ການຍົກເວັ້ນພາສີ ສຳລັບເຄື່ອງຕິດຕົວ**

**ຜູ້ໂດຍສານ ທີ່ເດີນທາງເຂົ້າມາໃນ ສປປ ລາວ ທີ່ມີເຄື່ອງຕິດຕົວ ຈະໄດ້ຮັບນະໂຍບາຍຍົກເວັ້ນພາສີ ແລະ ພັນທະອື່ນ ດັ່ງນີ້:**

1. ວັດຖຸມີຄ່າຕ່າງໆ ແລະ ເງິນຕາຕ່າງປະເທດ ທີ່ມີມູນຄ່າບໍ່ເກີນຈຳນວນທີ່ ທະນາຄານແຫ່ງ ສປປ ລາວ ກຳນົດໄວ້;
2. ເຫຼົ້າທຸກຊະນິດບໍ່ເກີນ ຈຳນວນ 2 ລິດ, ເບຍທຸກຊະນິດບໍ່ເກີນ 5 ລິດ, ເຫຼົ້າແວງທຸກຊະນິດບໍ່ເກີນ 3 ລິດ;
3. ຢາສູບທຸກຊະນິດບໍ່ເກີນ 1 ຕຸດ ( 200 ກອກ ), ຢາສູບຊິກາ ບໍ່ເກີນ 50 ກອກ ຫຼື ໃບຢາສູບບໍ່ເກີນ 250 ກຣາມ;
4. ນ້ຳຫອມ ແລະ ທີ່ອນ້ຳຫອມບໍ່ເກີນຊະນິດລະໜຶ່ງຢ່າງ.

**ມາດຕາ 55 ( ປັບປຸງ ). ການຍົກເວັ້ນພາສີສຳລັບເຄື່ອງຮັບໃຊ້ບາງປະເພດ ໃນເວລາຍົກຍ້າຍບ່ອນຢູ່**

ນັກສຶກສາ , ລັດຖະກອນ, ນັກການທູດ ທີ່ສຳເລັດວຽກງານຢູ່ຕ່າງປະເທດ ແລະ ຄົນຕ່າງປະເທດ ທີ່ມີຈຸດປະສົງຍົກຍ້າຍມາຢູ່ແບບຖາວອນ ທີ່ນຳເຂົ້າເຄື່ອງຮັບໃຊ້ບາງປະເພດ ແລະ ຂອງຂວັນຂອງຄະນະຜູ້ແທນທີ່ໄປເຄື່ອນໄຫວຢູ່ຕ່າງປະເທດ ນອກຈາກພາຫະນະຂັບເຄື່ອນດ້ວຍເຄື່ອງຈັກ ຈະໄດ້ຮັບນະໂຍບາຍຍົກເວັ້ນພາສີ ແລະ ພັນທະອື່ນ ດັ່ງນີ້:

1. ເຄື່ອງຂອງບາງຊະນິດ ແລະ ບາງຈຳນວນ ທີ່ບໍ່ມີລັກສະນະທາງການຄ້າ;
2. ເຄື່ອງໃຊ້ທີ່ຈຳເປັນສຳລັບຄົວເຮືອນ;
3. ວັດຖຸສິ່ງຂອງ ທີ່ໄດ້ຈາກການສືບທອດມູນມໍຣະດົກ.

**ມາດຕາ 56 ( ປັບປຸງ ). ການຍົກເວັ້ນພາສີ ສຳລັບສິນຄ້າ, ເຄື່ອງຂອງ ທີ່ໄດ້ຈາກແຫຼ່ງເງິນຊ່ວຍເຫຼືອ ແລະ ກູ້ຢືມ ຂອງລັດຖະບານ**

ການນຳເຂົ້າສິນຄ້າ, ເຄື່ອງຂອງ ທີ່ໄດ້ຈາກແຫຼ່ງເງິນຊ່ວຍເຫຼືອ ແລະ ກູ້ຢືມ ຂອງລັດຖະບານຈາກຕ່າງປະເທດ, ເຄື່ອງຊ່ວຍເຫຼືອດ້ານມະນຸດສະທຳ ແລະ ໄພທຳມະຊາດ ຈະໄດ້ຮັບການຍົກເວັ້ນພາສີ ແລະ ພັນທະອື່ນ ຕາມການຕົກລົງຂອງ ລັດຖະບານ.

**ມາດຕາ 57 ( ປັບປຸງ ). ການຍົກເວັ້ນພາສີ ສຳລັບ ເຄື່ອງຮັບໃຊ້ອັນຈຳເປັນແກ່ການສຶກສາ, ສາທາລະນະສຸກ, ການຄົ້ນຄວ້າວິທະຍາສາດ, ເຄື່ອງຂອງຕົວຢ່າງ ແລະ ທາງສາສະໜາ**

**ການນຳເຂົ້າເຄື່ອງຂອງ ບາງຊະນິດທີ່ຈຳເປັນ ແລະ ບໍ່ມີລັກສະນະທາງການຄ້າ ແມ່ນໄດ້ຮັບການຍົກເວັ້ນພາສີ ແລະ ພັນທະອື່ນ ມີ ດັ່ງນີ້:**

1. ສຳລັບເຄື່ອງຮັບໃຊ້ການສຶກສາ, ສາທາລະນະສຸກ, ການຄົ້ນຄວ້າວິທະຍາສາດ, ເຄື່ອງຂອງຕົວຢ່າງ ຕ້ອງໄດ້ຮັບການຢັ້ງຢືນຈາກຂະແໜງການທີ່ກ່ຽວຂ້ອງ;

2. ສຳລັບເຄື່ອງຮັບໃຊ້ທາງສາສະໜາ ເຊັ່ນ ພະພຸດທະຮູບ, ເຄື່ອງສັກກະລະບູຊາ, ວັດຖຸປະກອບທີ່ຈຳເປັນ ແລະ ເຄື່ອງຮັບໃຊ້ພິທີການທາງສາສະໜາ ຕ້ອງໃຫ້ມີໜັງສືຢັ້ງຢືນ ຈາກອົງການແນວລາວສ້າງຊາດ ໂດຍການປະສານສົມທົບກັບຂະແໜງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.

**ມາດຕາ 58 ( ປັບປຸງ ). ການຍົກເວັ້ນພາສີ ສຳລັບເຄື່ອງຮັບໃຊ້ວິຊາສະເພາະໃນການປ້ອງກັນຊາດ, ປ້ອງກັນຄວາມສະຫງົບ**

ການນຳເຂົ້າວັດຖຸ, ເຄື່ອງຂອງ, ອາວຸດຍຸດໂທປະກອນ ແລະ ພາຫະນະວິຊາສະເພາະ ເພື່ອຮັບໃຊ້ເຂົ້າໃນວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ແມ່ນ ໄດ້ຮັບການຍົກເວັ້ນພາສີ ແລະ ພັນທະອື່ນ.

**ມາດຕາ 59 ( ໃໝ່ ). ການຍົກເວັ້ນພາສີ ສົ່ງອອກທົ່ວໄປ**

ການສົ່ງອອກ ຜະລິດຕະພັນກະສິກຳ ທີ່ໄດ້ຈາກການຜະລິດ, ການປູກ ແລະ ການລ້ຽງ, ສິນຄ້າອຸດສາຫະກຳ ທີ່ຜ່ານຂະບວນການຜະລິດ ຫຼື ປຸງແຕ່ງ , ຜະລິດຕະພັນຫັດຖະກຳ ຈະໄດ້ຮັບການຍົກເວັ້ນພາສີສົ່ງອອກ ເວັ້ນເສັຍແຕ່ບາງລາຍການສິນຄ້າ, ເຄື່ອງຂອງ ທີ່ໄດ້ກຳນົດໃຫ້ມີການເກັບພາສີສົ່ງອອກ.

## ພາກທີ IX
## ການຍົກເວັ້ນ, ການງົດເກັບ ຫຼື ຫຼຸດຜ່ອນພາສີ ແລະ ພັນທະອື່ນ ຂອງການລົງທຶນ

**ມາດຕາ 60 ( ໃໝ່ ). ການສົ່ງອອກ-ນຳເຂົ້າ ຕາມນະໂຍບາຍສົ່ງເສີມການລົງທຶນ**

ເພື່ອເປັນການສົ່ງເສີມການລົງທຶນ, ຊຸກຍູ້ການຜະລິດຕາມນະໂຍບາຍຂອງລັດຖະບານ, ການສົ່ງອອກ-ນຳເຂົ້າສິນຄ້າ, ເຄື່ອງຂອງ ແມ່ນ ໄດ້ຮັບການຍົກເວັ້ນ ຫຼື ຫຼຸດຜ່ອນພາສີ ແລະ ພັນທະອື່ນຕາມກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ.

**ມາດຕາ 61 ( ປັບປຸງ ). ການສົ່ງອອກ-ນຳເຂົ້າ ຕາມນະໂຍບາຍ ເຂດເສດຖະກິດພິເສດ ແລະ ເຂດສດຖະກິດສະເພາະ**

ການສົ່ງອອກ-ນຳເຂົ້າສິນຄ້າ, ເຄື່ອງຂອງ ໃນເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ແມ່ນ ໄດ້ຮັບການຍົກເວັ້ນ, ການງົດເກັບ ຫຼື ຫຼຸດຜ່ອນພາສີ ແລະ ພັນທະອື່ນ ຕາມລະບຽບການສະເພາະທີ່ກ່ຽວຂ້ອງ.

ມາດຕາ 62 ( ປັບປຸງ ). **ຮ້ານຄ້າປອດພາສີ**

ກະຊວງການເງິນ ເປັນຜູ້ອະນຸຍາດໃຫ້ສ້າງຕັ້ງ ຮ້ານຄ້າປອດພາສີ ເພື່ອຈຳໜ່າຍສິນຄ້າ, ເຄື່ອງຂອງ ໃຫ້ແກ່ຜູ້ເດີນທາງອອກນອກປະເທດ. ສິນຄ້າ, ເຄື່ອງຂອງດັ່ງກ່າວ ແມ່ນ ຖືກງົດເກັບພາສີ ແລະ ພັນທະອື່ນ ຕາມລະບຽບການ.

ມາດຕາ 63 ( ໃໝ່ ). **ການຄຸ້ມຄອງການນຳໃຊ້ສິນຄ້າ, ເຄື່ອງຂອງ, ພາຫະນະ ຫຼື ວັດຖຸປະກອນ**

ສິນຄ້າ, ເຄື່ອງຂອງ ທີ່ ສົ່ງອອກ-ນຳເຂົ້າ ໃນລະບຽບການຍົກເວັ້ນ, ການງົດເກັບ ຫຼື ຫຼຸດຜ່ອນ ພາສີ ແລະ ພັນທະອື່ນ ຕ້ອງຢູ່ພາຍໃຕ້ການຄວບຄຸມຂອງລັດຖະການພາສີ.

ສິນຄ້າ, ເຄື່ອງຂອງ ຈາກເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ ທີ່ມີຈຸດປະສົງຈຳໜ່າຍ ຫຼື ຊົມໃຊ້ຢູ່ພາຍໃນດິນແດນຂອງ ສປປ ລາວ ຕ້ອງໄດ້ເສຍພາສີ ແລະ ພັນທະອື່ນ ຕາມລະບຽບການ.

ພາຫະນະ ຫຼື ວັດຖຸປະກອນ ທີ່ໄດ້ຮັບອະນຸຍາດນຳເຂົ້າຕາມນະໂຍບາຍສົ່ງເສີມການລົງທຶນ ຕ້ອງນຳໃຊ້ໃຫ້ຖືກເປົ້າໝາຍ, ບໍ່ອະນຸຍາດໃຫ້ຈຳໜ່າຍຂາຍທົ່ວໄປ. ຖ້າຫາກມີການລະເມີດ ກໍຈະຖືກດຳເນີນມາດຕະການທາງພາສີ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

# ພາກທີ X
# ການຄຸ້ມຄອງເອກະສານ ແລະ ການສະເໜີຄືນ
## ໝວດທີ 1
## ການຄຸ້ມຄອງເອກະສານ, ການກວດສອບຄືນຂອງລັດຖະການພາສີ

ມາດຕາ 64 ( ປັບປຸງ ). **ລະບຽບການຄຸ້ມຄອງເອກະສານ**

**ຜູ້ດຳເນີນທຸລະກິດ ກ່ຽວກັບການສົ່ງອອກ-ນຳເຂົ້າ ແລະ ຜ່ານແດນ ຕ້ອງຄຸ້ມຄອງເອກະສານ ກ່ຽວກັບພາສີ ດັ່ງນີ້:**

1. ຂໍ້ມູນດ້ານການບັນຊີ, ໃບແຈ້ງພາສີເປັນລາຍລະອຽດພ້ອມດ້ວຍເອກະສານ ແລະ ຂໍ້ມູນອື່ນທີ່ກ່ຽວຂ້ອງ ຕ້ອງເກັບຮັກສາໄວ້ພາຍໃນກຳນົດ ສາມປີ;
2. ເມື່ອເຈົ້າໜ້າທີ່ພາສີ ຕ້ອງການກວດສອບແລ້ວ ຜູ້ດຳເນີນທຸລະກິດ ຫຼື ຜູ້ຕາງໜ້າ ຕ້ອງສະໜອງຂໍ້ມູນດ້ານການບັນຊີ, ສຳນວນເອກະສານ ແລະ ຂໍ້ມູນອື່ນກ່ຽວກັບ ການສົ່ງອອກ-ນຳເຂົ້າ, ການຜ່ານແດນ.

**ມາດຕາ 65 ( ປັບປຸງ ). ກຳນົດເວລາໃນການກວດສອບຄືນຂອງລັດຖະການພາສີ**

ໃບແຈ້ງພາສີເປັນລາຍລະອຽດ ຕ້ອງຢູ່ພາຍໃຕ້ການກວດສອບຄືນຂອງລັດຖະການພາສີ ພາຍໃນກຳນົດເວລາສາມປີ ນັບແຕ່ວັນລົງທະບຽນໃບແຈ້ງພາສີເປັນລາຍລະອຽດ ຫຼື ນັບແຕ່ວັນໄດ້ນຳເອົາສິນຄ້າ, ເຄື່ອງຂອງ ອອກຈາກສາງ ຫຼື ດ່ານພາສີເປັນຕົ້ນໄປ.

**ມາດຕາ 66 ( ໃໝ່ ). ຫຼັກການໃນການກວດສອບຄືນການແຈ້ງພາສີ**

**ຫຼັກການໃນການກວດສອບຄືນການແຈ້ງພາສີ ກ່ຽວກັບການສົ່ງອອກ-ນຳເຂົ້າ, ການຜ່ານແດນຂອງເຈົ້າໜ້າທີ່ພາສີ ໃຫ້ປະຕິບັດ ດັ່ງນີ້:**

1. ກວດສອບຄືນບັນດາຂໍ້ມູນທັງໝົດ ກ່ຽວກັບການແຈ້ງພາສີ ລວມທັງສິນຄ້າ, ເຄື່ອງຂອງທີ່ຍັງຢູ່ໃນສາງຂອງຜູ້ດຳເນີນທຸລະກິດ;
2. ກວດສອບ ບັນດາເອກະສານອ້າງອີງ ກ່ຽວກັບການສົ່ງອອກ- ນຳເຂົ້າສິນຄ້າ, ເຄື່ອງຂອງ ເຊັ່ນ ມູນຄ່າແຈ້ງພາສີ, ແຫຼ່ງກຳເນີດສິນຄ້າ, ການຈັດເລກລະຫັດ, ຂໍ້ມູນການຊຳລະສະສາງ, ຂໍ້ມູນດ້ານການເງິນ, ການບັນຊີ ແລະ ຂໍ້ມູນອື່ນ ຂອງຜູ້ດຳເນີນທຸລະກິດ;
3. ຮັກສາ ຫຼື ອາຍັດໄວ້ຊົ່ວຄາວ ບັນດາຫຼັກຖານອ້າງອີງທັງໝົດ ຫຼື ບາງສ່ວນຂອງຜູ້ດຳເນີນທຸລະກິດ ໃນໄລຍະດຳເນີນການກວດສອບ ຫຼື ການສືບສວນ-ສອບສວນ;
4. ຕ້ອງແຈ້ງຜົນການກວດສອບ ໃຫ້ຜູ້ດຳເນີນທຸລະກິດ ຊາບ.

ຂະແໜງການທີ່ກ່ຽວຂ້ອງ ຕ້ອງໃຫ້ຄວາມຮ່ວມມື ເມື່ອມີການຮ້ອງຂໍຂອງເຈົ້າໜ້າທີ່ພາສີກ່ຽວກັບຂໍ້ມູນຂອງ ຜູ້ດຳເນີນທຸລະກິດ.

**ມາດຕາ 67 ( ໃໝ່ ). ຂັ້ນຕອນດຳເນີນການກວດສອບຄືນການແຈ້ງພາສີ**

**ການກວດສອບຄືນການແຈ້ງພາສີ ຂອງເຈົ້າໜ້າທີ່ພາສີ ຈະດຳເນີນຕາມຂັ້ນຕອນ ດັ່ງນີ້:**

1. ເກັບກຳ ແລະ ວິເຄາະຂໍ້ມູນໃນໃບແຈ້ງພາສີເປັນລາຍລະອຽດ;
2. ແຈ້ງເປັນລາຍລັກອັກສອນ ໃຫ້ຜູ້ດຳເນີນທຸລະກິດ ຊາບລ່ວງໜ້າ ເພື່ອກະກຽມບັນດາຂໍ້ມູນຫຼັກຖານ ໃນການດຳເນີນການກວດສອບ;
3. ກວດກາສະຖານທີ່ດຳເນີນທຸລະກິດ ເພື່ອດຳເນີນການກວດສອບ ຕາມລະບຽບການ;
4. ສະຫຼຸບຜົນການກວດສອບ ແລະ ດຳເນີນການແກ້ໄຂ;
5. ແຈ້ງຜົນຂອງການກວດສອບຄືນ ການແຈ້ງພາສີ ໃຫ້ຜູ້ດຳເນີນທຸລະກິດ.

ກະຊວງການເງິນ ເປັນຜູ້ກຳນົດລະບຽບການລະອຽດ ກ່ຽວກັບການກວດສອບຄືນການແຈ້ງພາສີເປັນລາຍລະອຽດ.

## ໝວດທີ 2
## ການສະເໜີຄືນ ແລະ ການແກ້ໄຂ

**ມາດຕາ 68 ( ໃໝ່ ). ການສະເໜີຄືນ**

ຜູ້ແຈ້ງພາສີ ມີສິດສະເໜີຄືນ ເມື່ອເຫັນວ່າຕົນບໍ່ໄດ້ຮັບຄວາມເປັນທຳຕາມຄຳຕົກລົງຂອງລັດຖະການພາສີ ກ່ຽວກັບມູນຄ່າແຈ້ງພາສີ, ລະຫັດສິນຄ້າ ແລະ ແຫຼ່ງກຳເນີດສິນຄ້າ, ເຄື່ອງຂອງ.

**ການສະເໜີຄືນຂອງຜູ້ແຈ້ງພາສີ ໃຫ້ປະຕິບັດ ດັ່ງນີ້:**

1. ຍື່ນຄຳສະເໜີ ພ້ອມດ້ວຍເອກະສານ ແລະ ຫຼັກຖານອ້າງອີງທີ່ກ່ຽວຂ້ອງຕ່າງໆ ຕໍ່ຄະນະກຳມະການແກ້ໄຂຄຳສະເໜີ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 69 ຂອງກົດໝາຍສະບັບນີ້;
2. ຍື່ນຄຳສະເໜີ ພາຍໃນກຳນົດເວລາສາມສິບວັນ ນັບແຕ່ວັນມີຄຳຕົກລົງ ເປັນຕົ້ນໄປ.

**ມາດຕາ 69 ( ໃໝ່ ). ຄະນະກຳມະການແກ້ໄຂຄຳສະເໜີ**

**ຄະນະກຳມະການແກ້ໄຂຄຳສະເໜີ ຖືກແຕ່ງຕັ້ງໂດຍ ລັດຖະມົນຕີວ່າການ ກະຊວງການເງິນ ຊຶ່ງມີ ສອງຂັ້ນ ດັ່ງນີ້:**

1. ຄະນະກຳມະການແກ້ໄຂຄຳສະເໜີປະຈຳເຂດ ຊຶ່ງປະກອບດ້ວຍ ຫົວໜ້າພາສີປະຈຳເຂດ ເປັນປະທານ, ຜູ້ຕາງໜ້າຈາກພະແນກການເງິນແຂວງ, ນະຄອນ, ຂະແໜງການທີ່ກ່ຽວຂ້ອງ ແລະ ຜູ້ຊ່ຽວຊານ ດ້ານພາສີ ບ່ອນພາສີປະຈຳເຂດຕັ້ງຢູ່ ເປັນຄະນະ;
2. ຄະນະກຳມະການແກ້ໄຂຄຳສະເໜີ ຂັ້ນສູນກາງ ຊຶ່ງປະກອບດ້ວຍ ຫົວໜ້າກົມພາສີ ເປັນປະທານ, ຜູ້ຕາງໜ້າຈາກກົມອື່ນຂອງກະຊວງການເງິນ, ກະຊວງທີ່ກ່ຽວຂ້ອງ ແລະ ຜູ້ຊ່ຽວຊານດ້ານພາສີ ເປັນຄະນະ.

**ມາດຕາ 70 ( ໃໝ່ ). ຂັ້ນຕອນການແກ້ໄຂຄຳສະເໜີ**

**ຂັ້ນຕອນການແກ້ໄຂຄຳສະເໜີ ໃຫ້ປະຕິບັດ ດັ່ງນີ້:**

1. ພາຍຫຼັງໄດ້ຮັບຄຳສະເໜີແລ້ວ ຄະນະກຳມະການແກ້ໄຂຄຳສະເໜີປະຈຳເຂດ ຕ້ອງດຳເນີນການແກ້ໄຂ ແລະ ແຈ້ງຄຳຕົກລົງໃຫ້ຜູ້ສະເໜີ ພາຍໃນກຳນົດ ສາມສິບວັນລັດຖະການ;
2. ໃນກໍລະນີ ທີ່ມີການຄັດຄ້ານຄຳຕົກລົງຂອງຄະນະກຳມະການ ແກ້ໄຂຄຳສະເໜີ ປະຈຳເຂດນັ້ນ ຜູ້ສະເໜີມີສິດ ຍື່ນຄຳສະເໜີຕໍ່ ຄະນະກຳມະການແກ້ໄຂຄຳສະເໜີຂັ້ນສູນກາງ ພາຍໃນກຳນົດ ສິບຫ້າວັນ ນັບແຕ່ວັນໄດ້ຮັບຄຳຕົກລົງ ດັ່ງກ່າວເປັນຕົ້ນໄປ.

3. ໃນກໍລະນີທີ່ມີການຄັດຄ້ານຄຳຕົກລົງຂອງຄະນະກຳມະການແກ້ໄຂຄຳສະເໜີຂັ້ນສູນກາງນັ້ນ ກໍມີສິດຍື່ນຄຳຮ້ອງຟ້ອງຕໍ່ສານປະຊາຊົນ ພາຍໃນກຳນົດເວລາ ສາມສິບວັນ ນັບແຕ່ວັນ ໄດ້ຮັບຄຳຕົກລົງດັ່ງກ່າວເປັນຕົ້ນໄປ. ຄຳຕັດສິນຂອງສານປະຊາຊົນ ເປັນທີ່ໃຊ້ໄດ້ຢ່າງເດັດຂາດ.

## ພາກທີ XI
## ການໃຊ້ເຮືອຂົນສົ່ງຜູ້ໂດຍສານ ຫຼື ຂົນສົ່ງສິນຄ້າ, ເຄື່ອງຂອງຕາມແມ່ນ້ຳຊາຍແດນ

**ມາດຕາ 71. ການຂຶ້ນບັນຊີເຮືອຕາມແມ່ນ້ຳຊາຍແດນ**

ເຮືອຕ່າງໆທີ່ເຈົ້າຂອງຕັ້ງພູມລຳເນົາຢູ່ ສປປ ລາວ ເພື່ອດຳເນີນທຸລະກິດ ໂດຍສານ ຫຼື ຂົນສົ່ງສິນຄ້າ, ເຄື່ອງຂອງຕາມແມ່ນ້ຳຊາຍແດນ ຕ້ອງຂຶ້ນບັນຊີໃຫ້ຖືກຕ້ອງຕາມລະບຽບກົດໝາຍ ຢູ່ດ່ານພາສີບ່ອນເຈົ້າຂອງເຮືອອາໄສຢູ່.

**ມາດຕາ 72 ( ປັບປຸງ ). ການຂົນສົ່ງສິນຄ້າ, ເຄື່ອງຂອງ ຕາມແມ່ນ້ຳຊາຍແດນ**

ກ່ອນຈະຂົນສິນຄ້າ, ເຄື່ອງຂອງອອກ ຫຼື ເຂົ້າເຮືອນັ້ນ ເຮືອທີ່ຂົນສົ່ງສິນຄ້າ, ເຄື່ອງຂອງຕາມແມ່ນ້ຳຊາຍແດນ ຕ້ອງເຂົ້າຈອດຢູ່ທ່າບ່ອນມີດ່ານພາສີຕັ້ງຢູ່ ເວັ້ນເສຍແຕ່ມີເຫດສຸກເສີນ. ໃນກໍລະນີດັ່ງກ່າວ ເຈົ້າຂອງເຮືອ ຕ້ອງເອົາປຶ້ມທະບຽນເຮືອ, ໃບຂົນສົ່ງສິນຄ້າ, ເຄື່ອງຂອງທາງນ້ຳແຈ້ງຕໍ່ເຈົ້າໜ້າທີ່ພາສີເພື່ອກວດກາ. ໃນເວລາເດີນທາງ ຫຼື ພາຍຫຼັງເຂົ້າທຽບທ່າ ຫຼື ຖ້າຫາກມີການກວດຄົ້ນເຮືອຕາມເສັ້ນທາງເດີນເຮືອ ເຈົ້າຂອງເຮືອ ຕ້ອງເອົາປຶ້ມທະບຽນ ເຮືອ ແລະ ໃບຂົນສົ່ງສິນຄ້າ, ເຄື່ອງຂອງທາງນ້ຳແຈ້ງຕໍ່ເຈົ້າໜ້າທີ່ພາສີເພື່ອກວດກາ ເຖິງວ່າເຮືອນັ້ນຈະບັນທຸກສິນຄ້າ, ເຄື່ອງຂອງ, ຜູ້ໂດຍສານ ຫຼື ບໍ່ກໍຕາມ.

ໃນກໍລະນີມີການຊື້-ຂາຍ, ໂອນ, ປ່ຽນແປງລັກສະນະຂອງເຮືອ ຫຼື ຢຸດເຊົາການເດີນເຮືອ ເຈົ້າຂອງເຮືອ ຕ້ອງແຈ້ງໃຫ້ລັດຖະການພາສີ ແລະ ອົງການທີ່ກ່ຽວຂ້ອງ ບ່ອນເຮືອໄດ້ຂຶ້ນທະບຽນນັ້ນຊາບ ພາຍໃນກຳນົດເວລາ ຊາວວັນ ນັບແຕ່ວັນໄດ້ຊື້-ຂາຍ, ໂອນ, ປ່ຽນແປງ ຫຼື ຢຸດເຊົາ ເປັນຕົ້ນໄປ.

ການເດີນເຮືອຕາມແມ່ນ້ຳຂອງ ໃຫ້ປະຕິບັດຕາມອະນຸສັນຍາ ຂອງບັນດາປະເທດລຸ່ມແມ່ນ້ຳຂອງ.

# ພາກທີ XII
# ການຈັດຕັ້ງ ແລະ ການເຄື່ອນໄຫວຂອງລັດຖະການພາສີ
## ໝວດທີ 1
## ການຈັດຕັ້ງ

**ມາດຕາ 73 ( ປັບປຸງ ). ທີ່ຕັ້ງ ແລະ ພາລະບົດບາດ**

ລັດຖະການພາສີ ແມ່ນ ການຈັດຕັ້ງໜຶ່ງທີ່ຂຶ້ນກັບກະຊວງການເງິນ ມີພາລະບົດບາດຄຸ້ມຄອງວຽກງານພາສີລວມສູນຕາມສາຍຕັ້ງ ແຕ່ສູນກາງລົງຮອດທ້ອງຖິ່ນ, ເປັນເສນາທິການໃຫ້ແກ່ລັດຖະມົນຕີວ່າການກະຊວງການເງິນ ໃນການຄຸ້ມຄອງວຽກງານມະຫາພາກ, ກວດກາ-ກວດການ, ວຽກງານສືບສວນ- ສອບສວນ ແລະ ການຈັດຕັ້ງປະຕິບັດລະບຽບກົດໝາຍກ່ຽວກັບພາສີ, ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ, ແນໃສ່ຮັບປະກັນການປະຕິບັດໜ້າທີ່ ທີ່ໄດ້ຮັບມອບໝາຍໃຫ້ມີປະສິດທິຜົນ.

**ມາດຕາ 74 ( ປັບປຸງ ). ໂຄງປະກອບການຈັດຕັ້ງຂອງລັດຖະການພາສີ**

**ໂຄງປະກອບການຈັດຕັ້ງຂອງລັດຖະການພາສີ ມີ ດັ່ງນີ້:**

1. ກົມພາສີ;
2. ພາສີປະຈຳເຂດ;
3. ດ່ານພາສີຊາຍແດນ ຊຶ່ງມີ ດ່ານພາສີສາກົນ, ດ່ານພາສີທ້ອງຖິ່ນ ແລະ ດ່ານພາສີປະເພນີ.

**ມາດຕາ 75 ( ປັບປຸງ ). ສິດ ແລະ ໜ້າທີ່ ຂອງລັດຖະການພາສີ**

**ລັດຖະການພາສີ ແຕ່ລະຂັ້ນ ມີສິດ ແລະ ໜ້າທີ່ ດັ່ງນີ້:**

**ກ. ກົມພາສີ:**

1. ເປັນເສນາທິການໃຫ້ກະຊວງການເງິນ ໃນການຄົ້ນຄວ້ານະໂຍບາຍ ກ່ຽວກັບວຽກງານພາສີ, ລະບຽບກົດໝາຍ, ແຜນຍຸດທະສາດ, ແຜນພັດທະນາ ກ່ຽວກັບວຽກງານພາສີ;
2. ປັບປຸງລະບຽບກົດໝາຍ, ອອກບົດແນະນຳລະອຽດ ໃນການຈັດຕັ້ງປະຕິບັດ;
3. ຈັດຕັ້ງຜັນຂະຫຍາຍ, ໂຄສະນາ ເຜີຍແຜ່ລະບຽບກົດໝາຍ ແລະ ນະໂຍບາຍຕ່າງໆ ກ່ຽວກັບວຽກງານພາສີ;
4. ຄົ້ນຄວ້າ ແລະ ສະເໜີການສ້າງຕັ້ງລະບົບສາງ ຕໍ່ ກະຊວງການເງິນ ເພື່ອພິຈາລະນາ;
5. ຊີ້ນຳ ນຳພາ, ຕິດຕາມ, ກວດກາ-ກວດການ ການຈັດຕັ້ງ, ວິຊາສະເພາະ ແລະ ການເຄື່ອນໄຫວວຽກງານຂອງລັດຖະການພາສີ ໃນຂອບເຂດທົ່ວປະເທດ;

6. ເກັບກຳ ແລະ ສະໜອງຂໍ້ມູນສະຖິຕິການສົ່ງອອກ-ນຳເຂົ້າກ່ຽວກັບວຽກງານພາສີ;
7. ສ້າງແຜນການບຳລຸງ, ກໍ່ສ້າງ, ຈັດວາງ, ສະເໜີແຕ່ງຕັ້ງ, ປົດຕຳແໜ່ງ, ຍົກຍ້າຍ, ສັບຊ້ອນໝູນວຽນພະນັກງານ, ປະຕິບັດນະໂຍບາຍເລື່ອນຊັ້ນ, ເລື່ອນຂັ້ນພະນັກງານພາສີ ຕາມລະບຽບກົດໝາຍ;
8. ປະສານສົມທົບກັບຂະແໜງການຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ກ່ຽວກັບວຽກງານພາສີ;
9. ດຳເນີນການກວດສອບຄືນຫຼັງການແຈ້ງພາສີ, ການກວດກາ ແລະ ສະກັດກັ້ນການລັກລອບໜີພາສີ, ດຳເນີນ ແລະ ແກ້ໄຂຄະດີທາງພາສີ;
10. ຄົ້ນຄວ້າ, ແກ້ໄຂຄຳສະເໜີຂອງຜູ້ແຈ້ງພາສີຕາມຄວາມຮັບຜິດຊອບຂອງຕົນ;
11. ສືບສວນ-ສອບສວນຄະດີທາງພາສີ ແລະ ປະກອບສຳນວນຄະດີທາງພາສີຍື່ນຕໍ່ອົງການໄອຍະການປະຊາຊົນ ເພື່ອສັ່ງຟ້ອງຕໍ່ສານ;
12. ພົວພັນ, ຮ່ວມມືກັບຕ່າງປະເທດ ແລະ ປະຕິບັດຂໍ້ຕົກລົງ, ສັນຍາ, ສົນທິສັນຍາຂອງພາກພື້ນ ແລະ ສາກົນກ່ຽວກັບວຽກງານພາສີ ທີ່ລັດຖະບານແຫ່ງ ສປປ ລາວ ເປັນພາຄີ ຕາມການມອບໝາຍ;
13. ສະຫຼຸບ ແລະ ລາຍງານຜົນການເຄື່ອນໄຫວວຽກງານພາສີ ຕໍ່ກະຊວງການເງິນ ຢ່າງເປັນປົກກະຕິ;
14. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ຂ. ພາສີປະຈຳເຂດ:**

1. ເປັນເສນາທິການໃຫ້ກົມພາສີ ໃນການຈັດຕັ້ງປະຕິບັດຍຸດທະສາດ, ນະໂຍບາຍ ແລະ ກົນໄກຄຸ້ມຄອງວຽກງານພາສີ ພາຍໃນເຂດຮັບຜິດຊອບ ຕາມລະບຽບກົດໝາຍກ່ຽວກັບພາສີ ແລະ ກົດໝາຍອື່ນ ທີ່ກ່ຽວຂ້ອງຢ່າງເຂັ້ມງວດ;
2. ໂຄສະນາ ເຜີຍແຜ່ລະບຽບກົດໝາຍກ່ຽວກັບວຽກງານພາສີ ໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງຢູ່ໃນສັງຄົມ ເພື່ອຮັບຮູ້ ແລະ ມີຄວາມຕື່ນຕົວປະຕິບັດ;
3. ຊີ້ນຳ, ຄຸ້ມຄອງ,ກວດກາ-ກວດການ ໃນການຈັດຕັ້ງປະຕິບັດບັນດາວຽກງານວິຊາສະເພາະ, ການປະຕິບັດໜ້າທີ່ ແລະ ການເຄື່ອນໄຫວວຽກງານຂອງເຈົ້າໜ້າທີ່ພາສີຢູ່ພາຍໃນເຂດ ແລະ ບັນດາດ່ານພາສີຊາຍແດນ ທີ່ຢູ່ພາຍໃນຄວາມຮັບຜິດຊອບຂອງຕົນ;
4. ສ້າງແຜນຄາດຄະເນເກັບລາຍຮັບພາສີ ແລະ ພັນທະອື່ນ ຂອງ ສົກປີງົບປະມານພາຍໃນເຂດທີ່ຕົນຮັບຜິດຊອບ ເພື່ອລາຍງານໃຫ້ກົມພາສີ;
5. ຄົ້ນຄວ້າ, ແກ້ໄຂຄຳສະເໜີຂອງຜູ້ແຈ້ງພາສີຕາມຄວາມຮັບຜິດຊອບຂອງຕົນ;

6. ດໍາເນີນການກວດສອບຄືນຫຼັງການແຈ້ງພາສີ, ການກວດກາ ແລະ ສະກັດກັ້ນການລັກລອບໜີພາສີ, ດໍາເນີນ ແລະ ແກ້ໄຂຄະດີທາງພາສີ;
7. ສືບສວນ-ສອບສວນຄະດີທາງພາສີ ແລະ ປະກອບສໍານວນຄະດີຍື່ນຕໍ່ອົງການໄອຍະການປະຊາຊົນ ເພື່ອສັ່ງຟ້ອງຕໍ່ສານ;
8. ປະສານສົມທົບກັບອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງພາຍໃນເຂດຂອງຕົນກ່ຽວກັບການເຄື່ອນໄຫວໜ້າທີ່ວຽກງານ;
9. ສ້າງແຜນການບໍາລຸງ, ກໍ່ສ້າງ, ຈັດວາງພະນັກງານ, ສະເໜີແຕ່ງຕັ້ງ, ປົດຕໍາແໜ່ງ, ຍົກຍ້າຍ, ສັບຊ້ອນໝູນວຽນພະນັກງານພາສີ ໃນຂອບເຂດຄວາມຮັບຜິດຊອບຂອງຕົນຕໍ່ກົມພາສີ ເພື່ອພິຈາລະນາຕາມລະບຽບການ;
10. ຕິດຕາມ ກວດກາ, ປະເມີນຜົນການເຄື່ອນໄຫວແຈ້ງພາສີ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ປະຕິບັດລະບຽບກົດໝາຍກ່ຽວກັບພາສີ ເພື່ອປະຕິບັດນະໂຍບາຍຍ້ອງຍໍ ຕາມຄວາມເໝາະສົມ;
11. ພົວພັນ ແລະ ຮ່ວມມືກັບສາກົນກ່ຽວກັບວຽກງານພາສີ ຕາມການມອບໝາຍຂອງກົມພາສີ;
12. ສະຫຼຸບ ແລະ ລາຍງານຜົນການເຄື່ອນໄຫວວຽກງານພາສີຕໍ່ກົມພາສີ ແລະ ອົງການປົກຄອງແຂວງ, ນະຄອນ ຢ່າງເປັນປົກກະຕິ;
13. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບກົດໝາຍ.

**ຄ. ດ່ານພາສີຊາຍແດນ:**

1. ຈັດຕັ້ງປະຕິບັດແຜນການ, ລະບຽບກົດໝາຍ ກ່ຽວກັບພາສີໃນຂອບເຂດດ່ານພາສີຂອງຕົນຮັບຜິດຊອບ ຢ່າງເຂັ້ມງວດ;
2. ເກັບພາສີ ແລະ ພັນທະອື່ນ ຢ່າງຖືກຕ້ອງ, ຄົບຖ້ວນຕາມແຜນງົບປະມານ ແລະ ທັນຕາມກໍານົດເວລາ;
3. ຄຸ້ມຄອງ ແລະ ນໍາໃຊ້ເຄື່ອງມືອຸປະກອນ ເຂົ້າໃນວຽກງານວິຊາສະເພາະ ໃຫ້ມີປະສິດທິຜົນ;
4. ບໍລິການ, ຄຸ້ມຄອງ, ຕິດຕາມ, ກວດກາ ແລະ ອໍານວຍຄວາມສະດວກ ໃຫ້ແກ່ການສົ່ງອອກ-ນໍາເຂົ້າ ແລະ ການຜ່ານແດນ ສິນຄ້າ, ເຄື່ອງຂອງ ຢ່າງວ່ອງໄວ ແລະ ຖືກຕ້ອງຕາມລະບຽບກົດໝາຍ;
5. ກວດກາ ແລະ ສະກັດກັ້ນທຸກການລະເມີດລະບຽບກົດໝາຍກ່ຽວກັບພາສີ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ ພາຍໃນດ່ານຂອງຕົນຮັບຜິດຊອບ ແລະ ດໍາເນີນຄະດີຕໍ່ຜູ້ລະເມີດ;

6. ປະສານສົມທົບກັບຂະແໜງການອື່ນທີ່ກ່ຽວຂ້ອງພາຍໃນດ່ານ ແລະ ອົງການປົກຄອງທ້ອງຖິ່ນ ໃນການປະຕິບັດໜ້າທີ່ຂອງຕົນ;
7. ສະຫຼຸບ ແລະ ລາຍງານຜົນການເຄື່ອນໄຫວວຽກງານພາສີ ຕໍ່ພາສີປະຈຳເຂດ ແລະ ອົງການປົກຄອງເມືອງ, ເທດສະບານ ຢ່າງເປັນປົກກະຕິ;
8. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມການມອບໝາຍຂອງພາສີປະຈຳເຂດ.

ມາດຕາ 76 ( ປັບປຸງ ). **ໂຄງປະກອບບຸກຄະລາກອນ**

**ໂຄງປະກອບບຸກຄະລາກອນຂອງລັດຖະການພາສີ ມີ ດັ່ງນີ້ :**

1. ຫົວໜ້າກົມ, ຮອງຫົວໜ້າກົມ;
2. ຫົວໜ້າພະແນກ, ຮອງຫົວໜ້າພະແນກ, ຫົວໜ້າ, ຮອງຫົວໜ້າພາສີປະຈຳເຂດ;
3. ຫົວໜ້າ, ຮອງຫົວໜ້າໜ່ວຍງານຂອງພະແນກ, ຫົວໜ້າ, ຮອງຫົວໜ້າໜ່ວຍງານຂອງພາສີປະຈຳເຂດ, ຫົວໜ້າ, ຮອງຫົວໜ້າດ່ານພາສີສາກົນ;
4. ຫົວໜ້າ, ຮອງຫົວໜ້າຈຸງານຂອງດ່ານພາສີສາກົນ, ຫົວໜ້າ, ຮອງຫົວໜ້າດ່ານພາສີທ້ອງຖິ່ນ, ດ່ານປະເພນີ;
5. ພະນັກງານ ແລະ ເຈົ້າໜ້າທີ່ພາສີ;
6. ພະນັກງານຊ່ວຍວຽກຈຳນວນໜຶ່ງ.

ສຳລັບການແຕ່ງຕັ້ງ ຫຼື ປົດຕຳແໜ່ງບຸກຄະລາກອນແຕ່ລະຂັ້ນ ໃຫ້ປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງ.

ມາດຕາ 77 ( ປັບປຸງ ). **ມາດຕະຖານຂອງເຈົ້າໜ້າທີ່ພາສີ**

**ເຈົ້າໜ້າທີ່ພາສີ ມີມາດຕະຖານ ດັ່ງນີ້:**

1. ເປັນພົນລະເມືອງລາວ ທີ່ມີອາຍຸແຕ່ 18 ປີ ຂຶ້ນໄປ;
2. ມີຄຸນສົມບັດດີ, ມີຈັນຍາບັນ ແລະ ມີຄວາມສັດຊື່ບໍລິສຸດ;
3. ມີປະກາສະນີຍະບັດ, ມີຄວາມຮູ້, ຄວາມສາມາດ, ປະສົບການທາງດ້ານການເງິນ, ພາສີ ແລະ ວິຊາສະເພາະທີ່ກ່ຽວຂ້ອງ, ຮູ້ພາສາຕ່າງປະເທດໃດໜຶ່ງ;
4. ບໍ່ຖືກລົງວິໄນ ຫຼື ບໍ່ກະທຳຜິດທາງດ້ານການເງິນ ໂດຍເຈດຕະນາ;
5. ມີສຸຂະພາບດີ.

ມາດຕາ 78 ( ປັບປຸງ ). **ການຮັກສາຄວາມລັບທາງລັດຖະການ**

ເຈົ້າໜ້າທີ່ພາສີ ຕ້ອງຮັກສາຄວາມລັບທາງລັດຖະການ ຢ່າງເຂັ້ມງວດ.

## ໝວດທີ 2
## ສິດ ແລະ ໜ້າທີ່ຂອງເຈົ້າໜ້າທີ່ພາສີ

ມາດຕາ 79 ( ປັບປຸງ ). **ສິດຂອງເຈົ້າໜ້າທີ່ພາສີ**

**ເຈົ້າໜ້າທີ່ພາສີ ມີສິດ ດັ່ງນີ້:**

1. ສືບສວນ-ສອບສວນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ;
2. ຍຶດ, ອາຍັດ ສິນຄ້າ, ເຄື່ອງຂອງ ແລະ ເກັບຮັກສາຂອງກາງທີ່ພົວພັນກັບການກະທຳຜິດທາງພາສີ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ພາສີ, ກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ;
3. ກວດຄົ້ນເຄຫະສະຖານ, ສະຖານທີ່ອື່ນ, ພາຫະນະ ແລະ ຕົວບຸກຄົນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍ ພາສີ, ກົດໝາຍວ່າດ້ວຍ ການດຳເນີນຄະດີອາຍາ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ;
4. ເຂົ້າສະຖານທີ່ດຳເນີນທຸລະກິດ ແລະ ສາງ ເພື່ອກວດກາສິນຄ້າ, ເຄື່ອງຂອງ ພ້ອມດ້ວຍເອກະສານທີ່ກ່ຽວຂ້ອງ ກ່ຽວກັບການສົ່ງອອກ-ນຳເຂົ້າ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍກ່ຽວກັບພາສີ;
5. ນຳໃຊ້ອາວຸດ, ເຄື່ອງມື ແລະ ອຸປະກອນວິຊາສະເພາະຕ່າງໆ ໃນການປະຕິບັດໜ້າທີ່ຂອງຕົນ;
6. ປະສານສົມທົບຂໍຄວາມຮ່ວມມື ແລະ ຊ່ວຍເຫຼືອໃນກໍລະນີຈຳເປັນ ນຳອົງການປົກຄອງທ້ອງຖິ່ນທຸກຂັ້ນ, ກຳລັງປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ປະຊາຊົນ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ;
7. ປະຕິບັດສິດ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ ແລະ ຕາມການມອບໝາຍ.

ມາດຕາ 80 ( ປັບປຸງ ). **ໜ້າທີ່ຂອງເຈົ້າໜ້າທີ່ພາສີ**

**ເຈົ້າໜ້າທີ່ພາສີ ມີໜ້າທີ່ ດັ່ງນີ້:**

1. ໂຄສະນາ, ເຜີຍແຜ່, ໃຫ້ຄຳແນະນຳແກ່ສັງຄົມ ໂດຍສະເພາະບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ດຳເນີນກິດຈະການ ກ່ຽວກັບການສົ່ງອອກ-ນຳເຂົ້າສິນຄ້າ, ເຄື່ອງຂອງ;
2. ຈັດຕັ້ງປະຕິບັດ ລະບຽບກົດໝາຍກ່ຽວກັບພາສີ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ;

3. ບໍລິການຢ່າງວ່ອງໄວ ແລະ ມີຄວາມຍຸຕິທຳ;
4. ຈັດຕັ້ງປະຕິບັດການເກັບພາສີ ແລະ ພັນທະອື່ນຢ່າງຖືກຕ້ອງ, ຄົບຖ້ວນ ແລະ ທັນຕາມກຳນົດເວລາ;
5. ນຳໃຊ້ບັນດາມາດຕະການ ເພື່ອຕ້ານ ແລະ ສະກັດກັ້ນການລັກລອບຫຼົບຫຼີກພາສີ ແລະ ການຄ້າຂາຍເຖື່ອນໃນທຸກຮູບແບບ ຕາມລະບຽບກົດໝາຍ;
6. ປົກປັກຮັກສາຄວາມລັບຂອງຊາດ ແລະ ຄວາມລັບທາງລັດຖະການ;
7. ສະຫຼຸບ, ລາຍງານຜົນການຈັດຕັ້ງປະຕິບັດວຽກງານຂອງຕົນຕໍ່ການຈັດຕັ້ງທີ່ຕົນຂຶ້ນກັບຢ່າງເປັນປົກກະຕິ;
8. ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

**ມາດຕາ 81. ການເຄື່ອນໄຫວ ໃນວົງລັດສະໝີພາສີ**

ວົງລັດສະໝີພາສີ ແມ່ນ ເຂດຄວບຄຸມກວດກາຂອງເຈົ້າໜ້າທີ່ພາສີ ທາງໜ້າດິນຈາກຊາຍແດນເລິກເຂົ້າໄປໃນອານາເຂດພາສີ ເຖິງສາມສິບກິໂລແມັດ. ໃນກໍລະນີທີ່ມີການສ້າງຕັ້ງຫ້ອງການພາສີ ຢູ່ນອກວົງລັດສະໝີພາສີນັ້ນ ການເຄື່ອນໄຫວໃຫ້ກຳນົດເອົາສິບກິໂລແມັດ ອ້ອມຮອບ ຫ້ອງການພາສີ.

ເພື່ອອຳນວຍຄວາມສະດວກໃຫ້ແກ່ການສະກັດກັ້ນ ແລະ ປາບປາມການລັກລອບ, ການຄ້າຂາຍເຖື່ອນ ແລະ ການລະເມີດລະບຽບກົດໝາຍ ກ່ຽວກັບພາສີນັ້ນ ກະຊວງການເງິນ ມີສິດອອກລະບຽບການເພື່ອຂະຫຍາຍວົງລັດສະໝີພາສີອອກຕື່ມ ຈາກ ສາມສິບກິໂລແມັດ ເປັນ ຫ້າສິບກິໂລແມັດ ແລະອ້ອມຮອບຫ້ອງການພາສີ ຈາກ ສິບກິໂລແມັດ ເປັນ ຊາວກິໂລແມັດ ໃນຈຸດທີ່ຕັ້ງສະເພາະ ແລະ ໃນກຳນົດເວລາໃດໜຶ່ງ.

**ມາດຕາ 82. ການເຄື່ອນໄຫວນອກວົງລັດສະໝີພາສີ**

ໃນກໍລະນີທີ່ມີການຕິດຕາມ ການລັກລອບ ຫຼົບຫຼີກພາສີ ຢ່າງບໍ່ຂາດໄລຍະ ໂດຍມີຂໍ້ມູນຫຼັກຖານໜັກແໜ້ນນັ້ນ ເຈົ້າໜ້າທີ່ພາສີ ມີສິດປະຕິບັດໜ້າທີ່ຂອງຕົນ ໃນທົ່ວອານາເຂດພາສີ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 7 ແລະ 81 ຂອງກົດໝາຍສະບັບນີ້.

**ມາດຕາ 83 ( ປັບປຸງ ). ເຄື່ອງແບບ, ບັດປະຈຳໜ້າທີ່, ກາໝາຍ, ເຄື່ອງໝາຍ ແລະ ຕາປະທັບ**

ລັດຖະກອນພາສີ ມີ ເຄື່ອງແບບຄົບຊຸດ, ບັດປະຈຳໜ້າທີ່ ແລະ ກາໝາຍຕ່າງໆ ເຊັ່ນ ທະນູປ່າຕິດກາໝາຍ, ສາຍອຳນາດ, ກາໝາຍບັນຊາ ແລະ ກາໝາຍອື່ນ.

ລັດຖະການພາສີ ມີ ເຄື່ອງໝາຍ ແລະ ຕາປະທັບທາງລັດຖະການ.

ເຄື່ອງແບບ, ບັດປະຈຳໜ້າທີ່, ກາໝາຍ, ເຄື່ອງໝາຍ ແລະ ຕາປະທັບ ໄດ້ກຳນົດໄວ້ສະເພາະ.

# ພາກທີ XIII
# ຂໍ້ຫ້າມ

**ມາດຕາ 84 ( ໃໝ່ ). ຂໍ້ຫ້າມສໍາລັບເຈົ້າໜ້າທີ່ພາສີ**

**ຫ້າມເຈົ້າໜ້າທີ່ພາສີ ມີພຶດຕິກໍາ ດັ່ງນີ້:**

1. ກົດໜ່ວງຖ່ວງດຶງ, ປອມແປງເອກະສານຕ່າງໆ, ຂາດຄວາມຮັບຜິດຊອບຕໍ່ວຽກງານທີ່ໄດ້ຮັບມອບໝາຍ;
2. ສວຍໃຊ້ໜ້າທີ່ຕໍາແໜ່ງ,ໃຊ້ຄວາມຮຸນແຮງ, ບັງຄັບນາບຂູ່ ຫຼື ຮັບສິນບົນ ຊຶ່ງກໍ່ໃຫ້ເກີດຄວາມເສັຍຫາຍ ແກ່ຜົນປະໂຫຍດຂອງບຸກຄົນ, ລວມໝູ່, ລັດ ແລະ ການຈັດຕັ້ງ;
3. ປົກປ້ອງ ຫຼື ສົມຮູ້ຮ່ວມຄິດກັບຜູ້ດໍາເນີນທຸລະກິດ ກະທໍາຜິດຕໍ່ລະບຽບກົດໝາຍ;
4. ປອມແປງໃບແຈ້ງພາສີ, ໃບຮັບເງິນ ຫຼື ເອກະສານອື່ນ;
5. ນໍາເອົາເງິນຄ່າພາສີ ແລະ ພັນທະອື່ນ ທີ່ເກັບໄດ້ມານໍາໃຊ້ສ່ວນຕົວ;
6. ນໍາໃຊ້, ເຮັດໃຫ້ເປ່ເພ, ຕົກເຮັ່ຍເສັຍຫາຍ ຫຼື ຍັກຍອກເອົາຂອງກາງຄະດີທາງພາສີ;
7. ມີພຶດຕິກໍາອື່ນ ທີ່ເປັນການລະເມີດລະບຽບກົດໝາຍ ກ່ຽວກັບພາສີ.

**ມາດຕາ 85 ( ໃໝ່ ). ຂໍ້ຫ້າມສໍາລັບຜູ້ແຈ້ງພາສີ**

**ຫ້າມຜູ້ແຈ້ງພາສີ ມີ ພຶດຕິກໍາ ດັ່ງນີ້:**

1. ທໍາລາຍຂໍ້ມູນຫຼັກຖານ, ປອມແປງເອກະສານ, ແຈ້ງຂໍ້ມູນບໍ່ຖືກຕ້ອງ, ຫຼົບຫຼີກພາສີ;
2. ໃຫ້ສິນບົນ, ຂັດຂວາງການປະຕິບັດວຽກງານຂອງເຈົ້າໜ້າທີ່ພາສີ;
3. ໝິ່ນປະໝາດ, ນາບຂູ່ ແລະ ທໍາຮ້າຍຮ່າງກາຍເຈົ້າໜ້າທີ່ພາສີ;
4. ຮ່ວມມືໃນການປົກປິດ ແລະ ຊຸກຍູ້ການກະທໍາ ທີ່ພົວພັນກັບການເສັຍພັນທະຂອງຜູ້ດໍາເນີນທຸລະກິດ;
5. ມີພຶດຕິກໍາອື່ນ ທີ່ເປັນການລະເມີດລະບຽບກົດໝາຍກ່ຽວກັບພາສີ.

# ພາກທີ XIV
# ການກະທຳຜິດ ແລະ ການດຳເນີນຄະດີທາງພາສີ
## ໝວດທີ 1
## ການກະທຳຜິດທາງພາສີ

**ມາດຕາ 86 ( ໃໝ່ ). ການກະທຳຜິດທາງພາສີ**

ການກະທຳຜິດທາງພາສີ ແມ່ນ ການລະເມີດລະບຽບກົດໝາຍກ່ຽວກັບພາສີ ໃນການສົ່ງອອກ-ນຳເຂົ້າ, ການຜ່ານແດນ, ການເຄື່ອນຍ້າຍ ແລະ ການຫຼົບຫຼີກພາສີ ໃນທຸກຮູບແບບ.

**ມາດຕາ 87 ( ປັບປຸງ ). ປະເພດການກະທຳຜິດທາງພາສີ**

ການກະທຳຜິດທາງພາສີ ໄດ້ຈັດແບ່ງເປັນສອງປະເພດ ຄື ການກະທຳຜິດສະຖານເບົາ ແລະ ສະຖານໜັກ.

**ການກະທຳຜິດສະຖານເບົາ ມີ ສາມລະດັບ ຄື:**

- ລະດັບທີ ໜຶ່ງ;
- ລະດັບທີ ສອງ;
- ລະດັບທີ ສາມ.

**ການກະທຳຜິດສະຖານໜັກ ມີ ສອງລະດັບ ຄື:**

- ລະດັບທີ ໜຶ່ງ;
- ລະດັບທີ ສອງ.

**ມາດຕາ 88 ( ປັບປຸງ ). ການກະທຳຜິດສະຖານເບົາລະດັບທີໜຶ່ງ**

**ການກະທຳຜິດສະຖານເບົາລະດັບທີໜຶ່ງ ມີ ດັ່ງນີ້:**

1. ການແຈ້ງຂໍ້ມູນເປັນລາຍລະອຽດ ບໍ່ຖືກຕ້ອງ ແລະ ບໍ່ຄົບຖ້ວນຕາມຕົວຈິງ ຊຶ່ງບໍ່ມີຜົນສະທ້ອນຕໍ່ຄ່າພາສີ ແລະ ພັນທະອື່ນ;
2. ການບໍ່ຍອມມອບເອກະສານທີ່ກ່ຽວຂ້ອງ ໃຫ້ແກ່ເຈົ້າໜ້າທີ່ພາສີຕາມທີ່ໄດ້ກຳນົດໄວ້ໃນມາດຕາ 64 ຂອງກົດໝາຍສະບັບນີ້;
3. ການສ້າງຄວາມຫຍຸ້ງຍາກຕໍ່ການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ພາສີ;
4. ການນຳເອົາສິນຄ້າ, ເຄື່ອງຂອງອອກ ຫຼື ເຂົ້າ ສປປ ລາວ ບໍ່ຖືກຕາມດ່ານທີ່ໄດ້ບົ່ງໄວ້ໃນໃບອະນຸຍາດ;

5. ການນຳເອົາພາຫະນະ ຫຼົບຫຼີກຈາກການກວດກາຂອງເຈົ້າໜ້າທີ່ພາສີ;

6. ການກະທຳອື່ນ ທີ່ບໍ່ໄດ້ຈັດເຂົ້າໃນລະດັບອື່ນຂອງການກະທຳຜິດທາງພາສີ.

ບຸກຄົນທີ່ໄດ້ກະທຳຜິດສະຖານເບົາລະດັບທີໜຶ່ງ ຈະຖືກປະຕິບັດມາດຕະການ ຕາມມູນຄ່າສິນຄ້າ, ເຄື່ອງຂອງ ດັ່ງນີ້:

- ຕ່ຳກວ່າ 5.000.000 ກີບ ຈະຖືກສຶກສາອົບຮົມ, ກ່າວເຕືອນ;

- ແຕ່ 5.000.001 ກີບ ຫາ 10.000.000 ກີບ ຈະຖືກປັບໃໝ ຫ້າສ່ວນຮ້ອຍ (5%) ຂອງມູນຄ່າສິນຄ້າ, ເຄື່ອງຂອງ;

- ແຕ່ 10.000.0001 ກີບ ຂຶ້ນໄປ ຈະຖືກປັບໃໝ ສິບສ່ວນຮ້ອຍ (10%) ຂອງມູນຄ່າສິນຄ້າ, ເຄື່ອງຂອງ.

**ມາດຕາ 89 ( ປັບປຸງ ). ການກະທຳຜິດສະຖານເບົາລະດັບທີສອງ**

**ການກະທຳຜິດສະຖານເບົາລະດັບທີສອງ ມີ ດັ່ງນີ້:**

1. ການແຈ້ງຂໍ້ມູນບໍ່ຖືກຕ້ອງ ຊຶ່ງມີຜົນສະທ້ອນຕໍ່ຄ່າພາສີ ແລະ ພັນທະອື່ນ ເຊັ່ນ ລະຫັດສິນຄ້າ, ແຫຼ່ງກຳເນີດສິນຄ້າ, ອັດຕາພາສີ-ອາກອນ, ມູນຄ່າແຈ້ງພາສີ ແລະ ຂໍ້ມູນອື່ນ;
2. ການແຈ້ງຫີບຫໍ່ສິນຄ້າ, ເຄື່ອງຂອງບໍ່ຖືກຕາມຈຳນວນຕົວຈິງ ຫຼື ການເອົາຫຼາຍຫົວໜ່ວຍ, ຫຼາຍຊະນິດສິນຄ້າໂຮມເຂົ້າກັນເປັນຫົວໜ່ວຍ ຫຼື ຊະນິດດຽວແລ້ວນຳມາແຈ້ງຕໍ່ເຈົ້າໜ້າທີ່ພາສີ ເພື່ອຫຼົບຫຼີກຄ່າພາສີ ແລະ ພັນທະອື່ນ;
3. ການແຈ້ງຫີບຫໍ່ສິນຄ້າ, ເຄື່ອງຂອງທີ່ຢູ່ໃນລະບົບງົດເກັບ, ຍົກເວັ້ນ ຫຼື ຫຼຸດຜ່ອນພາສີ ແລະ ພັນທະອື່ນ ບໍ່ຖືກຕາມຈຳນວນຕົວຈິງ;
4. ການສົ່ງອອກ-ນຳເຂົ້າສິນຄ້າ, ເຄື່ອງຂອງ ໂດຍບໍ່ໄດ້ຮັບອະນຸຍາດຈາກຂະແໜງການທີ່ກ່ຽວຂ້ອງ;
5. ການຫຼຸດ ຫຼື ເພີ່ມຈຳນວນສິນຄ້າ, ເຄື່ອງຂອງ ແລະ ການບໍ່ແຈ້ງຈຳນວນສິນຄ້າ, ເຄື່ອງຂອງທີ່ຢູ່ໃນລະບົບສາງ;
6. ການລະເມີດລະບຽບການສົ່ງອອກ-ນຳເຂົ້າ, ການເຄື່ອນຍ້າຍ ແລະ ການຜ່ານແດນສິນຄ້າ, ເຄື່ອງຂອງ;
7. ການນຳໃຊ້ພາຫະນະ ຫຼື ສິນຄ້າ, ເຄື່ອງຂອງ ທີ່ນຳເຂົ້າໃນລະບົບງົດເກັບ, ຍົກເວັ້ນ, ຊົ່ວຄາວ ແລະ ຫຼຸດຜ່ອນພາສີ ແລະ ພັນທະອື່ນ ໂດຍບໍ່ຖືກຕ້ອງຕາມເປົ້າໝາຍ.

ບຸກຄົນທີ່ໄດ້ກະທຳຜິດສະຖານເບົາລະດັບທີສອງ ຕ້ອງເສັຍຄ່າພາສີ ແລະ ພັນທະອື່ນ ຕາມລະບຽບກົດໝາຍໃຫ້ຄົບຖ້ວນ ແລະ ຈະຖືກປັບໃໝ ສາມສິບສ່ວນຮ້ອຍ (30%) ຂອງມູນຄ່າສິນຄ້າ, ເຄື່ອງຂອງ.

ຖ້າມີການກະທຳເປັນຄັ້ງທີສອງ ຕ້ອງເສັຍພາສີ ແລະ ພັນທະອື່ນໃຫ້ຄົບຖ້ວນ ແລະ ຈະຖືກປັບໃໝ ຫ້າສິບສ່ວນຮ້ອຍ (50%) ຂອງມູນຄ່າສິນຄ້າ, ເຄື່ອງຂອງ.

ສິນຄ້າ, ເຄື່ອງຂອງ ພ້ອມທັງວັດຖຸສິ່ງຂອງທີ່ນຳໃຊ້ ເພື່ອປົກບັງ ແລະ ພາຫະນະທີ່ນຳໃຊ້ເຂົ້າໃນການກະທຳຜິດ ຊຶ່ງບໍ່ແມ່ນປະເພດຄວບຄຸມທີ່ຖືກຍຶດໄວ້ນັ້ນ ໃຫ້ສົ່ງຄືນແກ່ເຈົ້າຂອງພາຍຫຼັງການດຳເນີນຄະດີທາງພາສີ ໄດ້ສິ້ນສຸດລົງ.

**ມາດຕາ 90 ( ປັບປຸງ ). ການກະທຳຜິດສະຖານເບົາລະດັບທີສາມ**

**ການກະທຳຜິດສະຖານເບົາລະດັບທີສາມ ມີ ດັ່ງນີ້:**

1. ການກະທຳຜິດສະຖານເບົາລະດັບທີສອງທີ່ໄດ້ກະທຳ ເປັນຄັ້ງທີສາມ;
2. ການນຳເອົາສິນຄ້າ, ເຄື່ອງຂອງ ທີ່ບໍ່ແມ່ນປະເພດຄວບຄຸມ ແລະ ເກືອດຫ້າມ ອອກ ຫຼື ເຂົ້າ ສປປ ລາວ ໂດຍບໍ່ແຈ້ງພາສີເປັນລາຍລະອຽດ;
3. ການອຳພາງ ປົກບັງສິນຄ້າ, ເຄື່ອງຂອງ ໂດຍນຳໃຊ້ພາຫະນະ ຫຼື ວັດຖຸສິ່ງຂອງ ເພື່ອຫຼົບຫຼີກພາສີໂດຍເຈດຕະນາ;
4. ການເກັບມ້ຽນ ຫຼື ມີໄວ້ໃນຄອບຄອງສິນຄ້າ, ເຄື່ອງຂອງ ທີ່ມີຈຳນວນເກີນຄວາມຕ້ອງການຊົມໃຊ້ຂອງຄົວເຮືອນ ທີ່ບໍ່ແມ່ນປະເພດຄວບຄຸມ ຫຼື ເກືອດຫ້າມ ໂດຍບໍ່ມີເອກະສານແຈ້ງເສັຍພາສີເປັນລາຍລະອຽດຢັ້ງຢືນ ຕາມລະບຽບກົດໝາຍ.

ບຸກຄົນທີ່ໄດ້ກະທຳຜິດສະຖານເບົາ ລະດັບທີສາມ ຕ້ອງເສັຍຄ່າພາສີ ແລະ ພັນທະອື່ນ ຕາມລະບຽບກົດໝາຍໃຫ້ຄົບຖ້ວນ ແລະ ຈະຖືກປັບໃໝ ເຈັດສິບສ່ວນຮ້ອຍ (70%) ຂອງມູນຄ່າສິນຄ້າ, ເຄື່ອງຂອງທີ່ຫຼົບຫຼີກພາສີ.

ການກະທຳຜິດລະດັບທີສາມ ທີ່ກະທຳເປັນຄັ້ງທີສອງ ຕ້ອງໄດ້ເສັຍຄ່າພາສີ ແລະ ພັນທະອື່ນຕາມລະບຽບກົດໝາຍ ໃຫ້ຄົບຖ້ວນ ແລະ ຈະຖືກປັບໃໝ ໜຶ່ງຮ້ອຍສ່ວນຮ້ອຍ (100%) ຂອງມູນຄ່າສິນຄ້າ, ເຄື່ອງຂອງ.

ສິນຄ້າ, ເຄື່ອງຂອງ ພ້ອມທັງວັດຖຸສິ່ງຂອງທີ່ນຳໃຊ້ ເພື່ອປົກບັງ ແລະ ພາຫະນະທີ່ນຳໃຊ້ເຂົ້າໃນການກະທຳຜິດ ຊຶ່ງບໍ່ແມ່ນປະເພດຄວບຄຸມທີ່ຖືກຍຶດໄວ້ນັ້ນ ໃຫ້ສົ່ງຄືນແກ່ເຈົ້າຂອງພາຍຫຼັງການດຳເນີນຄະດີທາງພາສີໄດ້ສິ້ນສຸດລົງ.

**ມາດຕາ 91 ( ປັບປຸງ ). ການກະທຳຜິດສະຖານໜັກລະດັບທີໜຶ່ງ**

ການກະທຳຜິດສະຖານໜັກ ລະດັບທີໜຶ່ງ ແມ່ນ ການສົ່ງອອກ-ນຳເຂົ້າ, ເຄື່ອນຍ້າຍ ສິນຄ້າ, ເຄື່ອງຂອງປະເພດຄວບຄຸມ ໂດຍບໍ່ມີໃບແຈ້ງພາສີເປັນລາຍລະອຽດ ຫຼື ບໍ່ໄດ້ຮັບອະນຸຍາດຈາກຂະແໜງການທີ່ກ່ຽວຂ້ອງ ຫຼື ການກະທຳຜິດສະຖານເບົາລະດັບສາມ ທີ່ມີລັກສະນະເປັນອາຈິນ.

ບຸກຄົນທີ່ໄດ້ກະທຳຜິດສະຖານໜັກລະດັບທີໜຶ່ງ ຈະຖືກປັບໃໝ ສາມສິບສ່ວນຮ້ອຍ (30%)

ຂອງມູນຄ່າສິນຄ້າ, ເຄື່ອງຂອງ. ສ່ວນສິນຄ້າ, ເຄື່ອງຂອງ ທີ່ຖືກຍຶດໄວ້ນັ້ນໃຫ້ຕົກເປັນຂອງລັດ.

**ມາດຕາ 92 ( ປັບປຸງ ). ການກະທຳຜິດສະຖານໜັກລະດັບທີສອງ**

ການກະທຳຜິດສະຖານໜັກລະດັບທີສອງ ແມ່ນ ການກະທຳຜິດສະຖານໜັກລະດັບທີໜຶ່ງ ທີ່ຖືກກະທຳເປັນຄັ້ງທີສອງ, ການລະເມີດສິດຕໍ່ຊັບສິນທາງປັນຍາ ແລະ ການປອມແປງເອກະສານທາງພາສີ.

ບຸກຄົນທີ່ໄດ້ກະທຳຜິດສະຖານໜັກລະດັບທີສອງ ຈະຖືກປັບໃໝ ຫ້າສິບສ່ວນຮ້ອຍ (50%) ຂອງມູນຄ່າສິນຄ້າ, ເຄື່ອງຂອງ. ສ່ວນສິນຄ້າ, ເຄື່ອງຂອງທີ່ຖືກຍຶດໄວ້ນັ້ນໃຫ້ຕົກເປັນຂອງລັດ.

ການກະທຳຜິດສະຖານໜັກລະດັບທີສອງນີ້ ເປັນການກະທຳຜິດທາງອາຍາ ຊຶ່ງຈະຖືກລົງໂທດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍອາຍາ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

**ມາດຕາ 93. ການກະທຳຜິດສຳລັບສິນຄ້າ, ເຄື່ອງຂອງປະເພດເກືອດຫ້າມ**

ເມື່ອເຈົ້າໜ້າທີ່ພາສີ ຫາກກວດພົບ ສິນຄ້າ, ເຄື່ອງຂອງທີ່ຜິດກົດໝາຍ ເຊັ່ນ ອາວຸດເສິກ, ຢາຝິ່ນ, ເຮໂຣອິນ, ຢາບ້າ ຫຼື ຢາເສບຕິດອື່ນ ແລະ ສິ່ງເກືອດຫ້າມອື່ນ ໃຫ້ເຈົ້າໜ້າທີ່ພາສີເຮັດຈົດໝາຍບັນທຶກຍຶດສິນຄ້າ, ເຄື່ອງຂອງ ດັ່ງກ່າວ ແລ້ວສົ່ງຜູ້ຖືກຫາ ພ້ອມທັງຂອງກາງໃຫ້ອົງການໄອຍະການປະຊາຊົນ ເພື່ອດຳເນີນຄະດີ ຕາມລະບຽບກົດໝາຍ.

**ມາດຕາ 94. ການຄອບຄອງສິນຄ້າ, ເຄື່ອງຂອງ ແລະ ພາຫະນະຂົນສົ່ງ**

ບຸກຄົນໃດຫາກມີສິນຄ້າ, ເຄື່ອງຂອງທີ່ຜິດກົດໝາຍ ຫຼື ມີພາຫະນະຂົນສົ່ງ ຊຶ່ງບັນທຸກສິນຄ້າ, ເຄື່ອງຂອງດັ່ງກ່າວ ຢູ່ໃນການຄອບຄອງຂອງຕົນ ຈະຖືວ່າເປັນຜູ້ຮັບຜິດຊອບຕໍ່ສິນຄ້າ, ເຄື່ອງຂອງ ແລະ ພາຫະນະນັ້ນ.

ຜູ້ຂັບຂີ່ພາຫະນະຂົນສົ່ງທຸກປະເພດ ຈະມີຄວາມຮັບຜິດຊອບທາງພາສີ ແລະ ທາງອາຍາ ກໍຕໍ່ເມື່ອການລະເມີດກົດໝາຍວ່າດ້ວຍ ພາສີ ນັ້ນ ຫາກເກີດຈາກການກະທຳຂອງຜູ້ກ່ຽວເອງ.

**ມາດຕາ 95 ( ປັບປຸງ ). ຄວາມຮັບຜິດຊອບທາງແພ່ງ ແລະ ທາງອາຍາ**

ເຈົ້າຂອງສິນຄ້າ, ເຄື່ອງຂອງ ມີຄວາມຮັບຜິດຊອບທາງແພ່ງ ເມື່ອບຸກຄົນທີ່ປະຕິບັດວຽກງານຕາມການມອບສິດຂອງຕົນ ໃນການແຈ້ງພາສີ, ການເສຍຄ່າພາສີ ແລະ ພັນທະອື່ນນັ້ນ ປະຕິບັດບໍ່ຖືກຕ້ອງ ຕາມລະບຽບກົດໝາຍ ແລະ ມີຄວາມຮັບຜິດຊອບຕໍ່ສິນຄ້າ, ເຄື່ອງຂອງ ທີ່ຖືກຍຶດ.

ຜູ້ຄ້ຳປະກັນ ມີຄວາມຮັບຜິດຊອບໃນການເສຍຄ່າພາສີ ແລະ ພັນທະອື່ນ ທີ່ຕົກຢູ່ໃນຄວາມຮັບຜິດຊອບຂອງຜູ້ທີ່ຕົນໄດ້ຄ້ຳປະກັນໃຫ້ນັ້ນ ຕາມລະບຽບກົດໝາຍ.

ຜູ້ຮ່ວມມີກະທຳຜິດທາງພາສີ ຈະຖືກ ລົງໂທດຕາມກົດໝາຍອາຍາ ແລະ ປະຕິບັດມາດຕະການ ຕາມກົດໝາຍສະບັບນີ້.

## ໝວດທີ 2
## ການດຳເນີນຄະດີທາງພາສີ

**ມາດຕາ 96 ( ປັບປຸງ ). ການເຮັດບົດບັນທຶກການຍຶດສິນຄ້າ, ເຄື່ອງຂອງ**

ເມື່ອພົບເຫັນການລະເມີດລະບຽບກົດໝາຍ ກ່ຽວກັບພາສີ ເຈົ້າໜ້າທີ່ພາສີ ມີສິດຍຶດສິນຄ້າ, ເຄື່ອງຂອງ, ພາຫະນະຮັບໃຊ້ການກະທຳຜິດ ພ້ອມທັງເອກະສານທີ່ກ່ຽວຂ້ອງ ເພື່ອເປັນຫຼັກຖານໃນການດຳເນີນຄະດີ.

ການເຮັດບົດບັນທຶກການຍຶດສິນຄ້າ, ເຄື່ອງຂອງ ຕ້ອງດຳເນີນໃນທັນທີໂດຍມີເຈົ້າໜ້າທີ່ພາສີຢ່າງໜ້ອຍສອງຄົນ.

ບົດບັນທຶກການຍຶດສິນຄ້າ, ເຄື່ອງຂອງ ຕ້ອງເຮັດຊ້ອງໜ້າຜູ້ຖືກຫາ ແລະ ມອບໃຫ້ຜູ້ຖືກຫາອ່ານ, ໃນກໍລະນີທີ່ຜູ້ຖືກຫາບໍ່ສາມາດອ່ານໄດ້ ແມ່ນ ມອບໃຫ້ບຸກຄົນທີສາມອ່ານໃຫ້ຟັງ ແລ້ວຜູ້ຖືກຫາຕ້ອງລົງລາຍເຊັນ ຫຼື ແປະໂປ້ມືໃສ່ບົດບັນທຶກນັ້ນ. ໃນກໍລະນີທີ່ຜູ້ຖືກຫາບໍ່ຍອມເຊັນ ຫຼື ແປະໂປ້ມືໃສ່ບົດບັນທຶກ ແມ່ນໃຫ້ໝາຍເຫດໄວ້. ບົດບັນທຶກເຮັດເປັນສາມສະບັບ, ໜຶ່ງສະບັບ ປະກອບເຂົ້າສຳນວນຄະດີ, ໜຶ່ງສະບັບ ມອບໃຫ້ຜູ້ຖືກຫາ ແລະ ອີກໜຶ່ງສະບັບ ເກັບໄວ້ສຳເນົາ.

ໃນກໍລະນີບໍ່ພົບເຫັນຜູ້ຖືກຫານັ້ນ ພາຍຫຼັງເຮັດບົດບັນທຶກແລ້ວ ເຈົ້າໜ້າທີ່ພາສີ ຕ້ອງແຈ້ງ ຫຼື ປະກາດໄວ້ຢູ່ຕໍ່ໜ້າຫ້ອງການພາສີ ຫຼື ຕາມສື່ຕ່າງໆ ພາຍໃນສີ່ສິບແປດຊົ່ວໂມງ ເພື່ອໃຫ້ຜູ້ເປັນເຈົ້າຂອງມາພົວພັນ ພາຍໃນ ຊາວເອັດວັນ ນັບແຕ່ວັນໄດ້ແຈ້ງ ຫຼື ປະກາດເປັນຕົ້ນໄປ. ຖ້າກາຍກຳນົດເວລາດັ່ງກ່າວ ສິນຄ້າ, ເຄື່ອງຂອງ ຈະຕົກເປັນຂອງລັດ, ຖ້າເປັນສິນຄ້າຄວບຄຸມ ຫຼື ສິນຄ້າເກືອດຫ້າມ ຈະຖືກດຳເນີນຄະດີຕາມລະບຽບກົດໝາຍ.

**ມາດຕາ 97 ( ປັບປຸງ ). ການເອົາຄຳໃຫ້ການ**

**ພາຍຫຼັງເຮັດບົດບັນທຶກການຍຶດ, ອາຍັດສິນຄ້າ, ເຄື່ອງຂອງແລ້ວ ເຈົ້າໜ້າທີ່ພາສີ ຕ້ອງເອົາຄຳໃຫ້ການຈາກຜູ້ຖືກຫາ ແລ້ວເຮັດບົດບັນທຶກຄຳໃຫ້ການ ໂດຍໃຫ້ປະຕິບັດ ດັ່ງນີ້:**

1. ການເອົາຄຳໃຫ້ການຂອງຜູ້ຖືກຫາ ຕ້ອງດຳເນີນໃນທັນທີ ເມື່ອມີການຍຶດ, ອາຍັດສິນຄ້າ, ເຄື່ອງຂອງ. ໃນກໍລະນີທີ່ບໍ່ສາມາດເອົາຄຳໃຫ້ການໄດ້ໃນທັນໃດນັ້ນ ຕ້ອງເຮັດບົດບັນທຶກພ້ອມດ້ວຍເຫດຜົນ;

2. ກ່ອນເອົາຄຳໃຫ້ການ ເຈົ້າໜ້າທີ່ພາສີ ຕ້ອງແຈ້ງຂໍ້ກ່າວຫາ ພ້ອມທັງອະທິບາຍສິດ ແລະ ພັນທະຂອງຜູ້ຖືກຫາ, ໃນເວລາເອົາຄຳໃຫ້ການນັ້ນ ຕ້ອງມີເຈົ້າໜ້າທີ່ພາສີ ຢ່າງໜ້ອຍ ສອງຄົນ;
3. ການເອົາຄຳໃຫ້ການ ຕ້ອງດຳເນີນໃນສະຖານທີ່ ຊຶ່ງລັດຖະການພາສີ ກຳນົດ;
4. ເມື່ອເອົາຄຳໃຫ້ການສິ້ນສຸດແລ້ວ ມອບໃຫ້ຜູ້ໃຫ້ການ ອ່ານເນື້ອໃນຂອງບົດບັນທຶກ, ໃນກໍລະນີຜູ້ໃຫ້ການບໍ່ສາມາດອ່ານໄດ້ ກໍມອບໃຫ້ບຸກຄົນທີສາມ ຫຼື ຜູ້ບັນທຶກອ່ານ ແລ້ວຜູ້ໃຫ້ການລົງລາຍເຊັນ ແລະ ແປະໂປ້ມື. ໃນກໍລະນີມີບາງຂໍ້ມູນ ໄດ້ຖືກດັດແປງ ຜູ້ໃຫ້ການຕ້ອງລົງລາຍເຊັນຢັ້ງຢືນ ແລະ ແປະໂປ້ມືໄວ້ຕໍ່ໜ້າແຖວບ່ອນມີການດັດແປງ;
5. ໃນກໍລະນີຜູ້ໃຫ້ການ ບໍ່ຍອມລົງລາຍເຊັນ ຫຼື ບໍ່ຍອມແປະໂປ້ມື ເຈົ້າໜ້າທີ່ພາສີຜູ້ສືບສວນ-ສອບສວນ ຕ້ອງໝາຍເຫດໄວ້ໃນຕອນທ້າຍຂອງບົດບັນທຶກ;
6. ໃນເວລາເອົາຄຳໃຫ້ການຂອງຜູ້ຖືກຫາ ຫຼື ບຸກຄົນທີ່ເຂົ້າຮ່ວມໃນຄະດີ ບໍ່ອະນຸຍາດໃຫ້ເຈົ້າໜ້າທີ່ ໃຊ້ຄວາມຮຸນແຮງ, ບັງຄັບ, ນາບຂູ່ ຫຼື ນຳໃຊ້ມາດຕະການອື່ນ ທີ່ບໍ່ຖືກຕ້ອງຕາມກົດໝາຍ;
7. ບົດບັນທຶກຄຳໃຫ້ການ ຕ້ອງເຮັດເປັນສາມສະບັບ, ໜຶ່ງສະບັບ ປະກອບເຂົ້າສຳນວນຄະດີ, ໜຶ່ງສະບັບ ມອບໃຫ້ຜູ້ຖືກຫາ ແລະ ອີກໜຶ່ງສະບັບ ເກັບໄວ້ສຳເນົາຂອງເຈົ້າໜ້າທີ່ພາສີ.

### ມາດຕາ 98 ( ປັບປຸງ ). ການຮັກສາຂອງກາງ

ສິນຄ້າ, ເຄື່ອງຂອງ ແລະ ພາຫະນະຂົນສົ່ງທີ່ຖືກຍຶດເປັນຂອງກາງນັ້ນ ໃຫ້ເຈົ້າໜ້າທີ່ພາສີເປັນຜູ້ປົກປັກຮັກສາໄວ້, ບໍ່ອະນຸຍາດໃຫ້ນຳໃຊ້ ເຮັດໃຫ້ເປ່ເພ, ຕົກເຮ່ຍເສຍຫາຍ ຫຼື ຍັກຍອກເອົາຂອງກາງ. ຜູ້ລະເມີດ ຈະມີຄວາມຮັບຜິດຊອບຕາມກົດໝາຍ.

ສຳລັບສິນຄ້າ, ເຄື່ອງຂອງທີ່ເສື່ອມຄຸນນະພາບໄວ ຫຼື ບໍ່ເໝາະສົມໃນການຮັກສາໄວ້ ເຈົ້າໜ້າທີ່ພາສີຈະນຳອອກປະມູນຂາຍ ຕາມລະບຽບກົດໝາຍ. ເງິນທີ່ຂາຍໄດ້ນັ້ນ ໃຫ້ເຈົ້າໜ້າທີ່ພາສີຮັກສາໄວ້ຈົນກວ່າການດຳເນີນຄະດີຈະສິ້ນສຸດ.

### ມາດຕາ 99 ( ປັບປຸງ ). ການສົມຍອມຄະດີ

ເຈົ້າໜ້າທີ່ພາສີ ມີສິດແກ້ໄຂຄະດີທາງພາສີ ຕາມການສົມຍອມຂອງຜູ້ກະທຳຜິດ ແລະ ຕາມລະບຽບກົດໝາຍ.

ນັບແຕ່ວັນລົງລາຍເຊັນ ແລະ ແປະໂປ້ມືລົງໃນບົດບັນທຶກ ຜູ້ກະທຳຜິດຕ້ອງມາສົມຍອມຄະດີ ກັບລັດຖະການພາສີ ພາຍໃນກຳນົດ ເຈັດວັນ ລັດຖະການ, ຖ້າກາຍກຳນົດເວລາດັ່ງກ່າວ ເຈົ້າໜ້າທີ່ພາສີ ຕ້ອງແຈ້ງ ຫຼື ປະກາດໄວ້ຢູ່ຕໍ່ໜ້າຫ້ອງການພາສີ ຫຼື ຕາມສື່ຕ່າງໆ ເພື່ອໃຫ້ຜູ້ກະທຳຜິດມາພົວພັນ

ພາຍໃນ ຊາວເອັດວັນ ນັບແຕ່ວັນໄດ້ແຈ້ງ ຫຼື ປະກາດເປັນຕົ້ນໄປ. ຖ້າກາຍກຳນົດເວລາດັ່ງກ່າວ ສິນຄ້າ, ເຄື່ອງຂອງຈະຕົກເປັນຂອງລັດ, ຖ້າເປັນສິນຄ້າຄວບຄຸມ ຫຼື ສິນຄ້າເກືອດຫ້າມ ກໍຈະຖືກດຳເນີນຄະດີຕາມລະບຽບກົດໝາຍ.

ໃນກໍລະນີທີ່ຜູ້ກະທຳຜິດ ຫາກສົມຍອມຄະດີ ຕາມຈົດໝາຍບັນທຶກການກະທຳຜິດແລ້ວ ເຈົ້າໜ້າທີ່ພາສີ ຕ້ອງເຮັດບົດບັນທຶກການສົມຍອມຄະດີແລ້ວ ໃຫ້ຜູ້ກະທຳຜິດຊຳລະຄ່າພາສີ ແລະ ພັນທະອື່ນ ພ້ອມທັງຄ່າປັບໃໝໃນທັນທີ.

ໃນກໍລະນີທີ່ຜູ້ກະທຳຜິດ ຫາກບໍ່ສາມາດຊຳລະໄດ້ໃນທັນທີນັ້ນ ຜູ້ກ່ຽວຕ້ອງຊຳລະຢ່າງຊ້າບໍ່ໃຫ້ເກີນສິບຫ້າວັນນັບແຕ່ວັນເຮັດບົດບັນທຶກການສົມຍອມຄະດີເປັນຕົ້ນໄປ. ພາຍຫຼັງໄດ້ຊຳລະແລ້ວ ສິນຄ້າ, ເຄື່ອງຂອງທີ່ບໍ່ແມ່ນປະເພດຄວບຄຸມ ແລະ ເກືອດຫ້າມພ້ອມດ້ວຍພາຫະນະຂົນສົ່ງ ແລະ ສິ່ງຂອງວັດຖຸທີ່ຮັບ ໃຊ້ການກະທຳຜິດນັ້ນ ໃຫ້ສົ່ງຄືນແກ່ເຈົ້າຂອງ.

**ມາດຕາ 100 ( ໃໝ່ ). ການກວດຄົ້ນພາຫະນະ ແລະ ຕົວບຸກຄົນ**

ການກວດຄົ້ນພາຫະນະ ແມ່ນ ການກວດຄົ້ນລົດທຸກປະເພດ, ເຮືອ, ແພນາວາ, ກຳປັ່ນ, ຍົນ, ລົດໄຟ ຫຼື ພາຫະນະອື່ນ ທີ່ມີຂໍ້ມູນໜັກແໜ້ນ ຫຼື ເຫັນສິ່ງມີພິລຸດທີ່ບົ່ງບອກວ່າມີການຊຸກເຊື່ອງສິນຄ້າ, ເຄື່ອງຂອງ ລັກລອບໜີພາສີ ຈະດຳເນີນໃນເວລາໃດກໍໄດ້ ແຕ່ຕ້ອງໃຫ້ຊ້ອງໜ້າເຈົ້າຂອງພາຫະນະ ຫຼື ຜູ້ຂັບຂີ່ພາຫະນະ.

ການກວດຄົ້ນຕົວບຸກຄົນ ຕ້ອງດຳເນີນໃນສະຖານທີ່ເໝາະສົມ ແລະ ຕ້ອງແມ່ນເຈົ້າໜ້າທີ່ເພດດຽວກັນກັບຜູ້ຖືກກວດຄົ້ນ.

**ມາດຕາ 101 ( ໃໝ່ ). ການກວດຄົ້ນເຄຫະສະຖານ**

**ການກວດຄົ້ນເຄຫະສະຖານ ຕ້ອງປະຕິບັດຕາມລະບຽບການ ດັ່ງນີ້:**

1. ຕ້ອງຂໍຄຳສັ່ງກວດຄົ້ນເປັນລາຍລັກອັກສອນ ຈາກອົງການໄອຍະການປະຊາຊົນ ຫຼື ສານປະຊາຊົນ, ເວັ້ນເສັຍແຕ່ໃນກໍລະນີທີ່ເຈົ້າໜ້າທີ່ພາສີ ໄດ້ໄລ່ຕິດຕາມຜູ້ລັກລອບໜີພາສີ ຢ່າງບໍ່ຂາດໄລຍະ ຫຼື ມີການກະທຳຜິດເຊິ່ງໜ້າ ແລະ ຮີບດ່ວນ ແຕ່ຕ້ອງລາຍງານໃຫ້ອົງການໄອຍະການປະຊາຊົນ ຫຼື ສານປະຊາຊົນຊາບ ພາຍໃນ ສີ່ສິບແປດຊົ່ວໂມງ ພາຍຫຼັງການກວດຄົ້ນສິ້ນສຸດລົງ;
2. ກ່ອນ ແລະ ຫຼັງການກວດຄົ້ນ ເຈົ້າໜ້າທີ່ພາສີ ແລະ ຜູ້ເຂົ້າຮ່ວມ ຕ້ອງສະແດງຄວາມບໍລິສຸດຂອງຕົນ ຕໍ່ເຈົ້າຂອງເຄຫະສະຖານທີ່ຖືກກວດຄົ້ນ;
3. ຕ້ອງເຮັດຊ້ອງໜ້າເຈົ້າຂອງເຄຫະສະຖານ, ພະຍານ ຢ່າງໜ້ອຍສອງຄົນ ແລະ ຜູ້ຕາງໜ້າອົງການປົກຄອງທ້ອງຖິ່ນ. ສຳລັບການກວດຄົ້ນ ບໍລິສັດ, ສຳນັກງານ, ອົງການນັ້ນ ຕ້ອງເຮັດຊ້ອງໜ້າຜູ້ຕາງໜ້າສະຖານທີ່ດັ່ງກ່າວ ຫຼື ອົງການທີ່ກ່ຽວຂ້ອງ;

4. ເມື່ອໄດ້ກວດຄົ້ນສິ້ນສຸດແລ້ວ ຕ້ອງເຮັດບົດບັນທຶກຜົນການກວດຄົ້ນ ແລະ ອ່ານຊ້ອງໜ້າຜູ້ເຂົ້າຮ່ວມໃນການກວດຄົ້ນ ແລ້ວພ້ອມກັນລົງລາຍເຊັນ ແລະ ແປະໂປ້ມືໄວ້ເປັນຫຼັກຖານ, ບົດບັນທຶກຜົນການກວດຄົ້ນ ເຮັດເປັນສີ່ສະບັບໜຶ່ງສະບັບ ປະກອບເຂົ້າສຳນວນຄະດີ, ໜຶ່ງສະບັບ ມອບໃຫ້ເຈົ້າຂອງເຄຫະສະຖານທີ່ຖືກກວດຄົ້ນ, ໜຶ່ງສະບັບມອບໃຫ້ອົງການປົກຄອງທ້ອງຖິ່ນ ແລະ ອີກໜຶ່ງສະບັບ ເກັບໄວ້ສຳເນົາ ຂອງເຈົ້າໜ້າທີ່ພາສີ.

## ໝວດທີ 3
## ຂັ້ນຕອນການສັ່ງຟ້ອງຂຶ້ນສານ

**ມາດຕາ 102 ( ປັບປຸງ ). ຄະດີທາງພາສີທີ່ສັ່ງຟ້ອງຂຶ້ນສານ**

**ຄະດີທາງພາສີ ທີ່ລັດຖະການພາສີ ສັ່ງຟ້ອງຂຶ້ນສານ ມີ ດັ່ງນີ້:**

1. ບໍ່ມີການຕົກລົງສົມຍອມເສຍຄ່າພາສີ ແລະ ພັນທະອື່ນ ພ້ອມທັງຄ່າປັບໃໝ;
2. ບໍ່ປະຕິບັດຕາມບົດບັນທຶກການສົມຍອມຄະດີ;
3. ຍຶດສິນຄ້າ, ເຄື່ອງຂອງ ແລະ ພາຫະນະ ທີ່ບໍ່ມີເຈົ້າຂອງ;
4. ບໍ່ປະຕິບັດຕາມສັນຍາຄ້ຳປະກັນ;
5. ມີການກະທຳຜິດເປັນອາຈີນ ຫຼື ການກະທຳຜິດທາງອາຍາ.

**ມາດຕາ 103 ( ປັບປຸງ ). ການປະກອບສຳນວນຄະດີ**

ລັດຖະການພາສີ ຕ້ອງປະກອບສຳນວນຄະດີຍື່ນຕໍ່ອົງການໄອຍະການປະຊາຊົນ ຫຼື ສານປະຊາຊົນ ທີ່ມີສິດອຳນາດ ເພື່ອດຳເນີນຄະດີຕາມລະບຽບກົດໝາຍ.

ສຳນວນຄະດີ ປະກອບດ້ວຍ ຄຳຮ້ອງ, ບົດບັນທຶກການຍຶດ ຫຼື ອາຍັດສິນຄ້າ, ເຄື່ອງຂອງ ຫຼື ຄຳສັ່ງເປີດການສືບສວນ-ສອບສວນ, ບົດບັນທຶກການສືບສວນ-ສອບສວນ ແລະ ເອກະສານອື່ນທີ່ຈຳເປັນ.

ເນື້ອໃນຂອງຄຳຮ້ອງ ຕ້ອງບົ່ງບອກ ການກະທຳຜິດຂອງຜູ້ລະເມີດໂດຍສັງເຂບ, ຂໍ້ກ່າວຫາ, ມາດຕາກົດໝາຍທີ່ຖືກລະເມີດ, ຈຸດປະສົງ ແລະ ເນື້ອໃນຂອງການຮ້ອງຟ້ອງທາງແພ່ງ.

ການຮ້ອງຟ້ອງ ຕ້ອງສອດຄ່ອງກັບກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ຫຼື ກົດໝາຍວ່າດ້ວຍ ການດຳເນີນຄະດີແພ່ງ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

**ມາດຕາ 104 ( ປັບປຸງ ). ສາເຫດທີ່ພາໃຫ້ເປີດການສືບສວນ-ສອບສວນ**

ລັດຖະການພາສີ ຈະດຳເນີນການເປີດການສືບສວນ-ສອບສວນ ຄະດີທາງພາສີ ເພື່ອສັ່ງຟ້ອງຂຶ້ນສານ ເມື່ອມີການປອມແປງເອກະສານທາງພາສີ, ຄະດີທີ່ເກີດຂຶ້ນມີຄວາມສະຫຼັບສັບຊ້ອນ, ການທຳຮ້າຍຮ່າງກາຍເຈົ້າໜ້າທີ່ພາສີ ແລະ ການກະທຳຜິດອື່ນທີ່ໄດ້ກຳນົດໄວ້ໃນກົດໝາຍອາຍາ ຫຼື ກົດໝາຍອື່ນທີ່ມີການກຳນົດໂທດທາງອາຍາ.

ສຳລັບການກະທຳທີ່ເປັນການກະທຳຜິດທາງອາຍາ ຊຶ່ງໄດ້ກຳນົດໄວ້ໃນມາດຕາ 102 ຂອງກົດໝາຍສະບັບນີ້ ເມື່ອມີຫຼັກຖານຄົບຖ້ວນແລ້ວ ລັດຖະການພາສີ ສາມາດສົ່ງສຳນວນຄະດີ ໃຫ້ອົງການໄອຍະການປະຊາຊົນ ເພື່ອທຳການສັ່ງຟ້ອງຂຶ້ນສານໂດຍກົງ ໂດຍບໍ່ຕ້ອງເປີດການສືບສວນ-ສອບສວນກໍໄດ້.

**ມາດຕາ 105 ( ໃໝ່ ). ຄຳສັ່ງເປີດການສືບສວນ-ສອບສວນ**

ຫົວໜ້າກົມພາສີ ອອກຄຳສັ່ງເປີດການສືບສວນ-ສອບສວນ ຕາມຂອບເຂດ, ສິດອຳນາດຂອງຕົນ ແລະ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ.

**ມາດຕາ 106 ( ໃໝ່ ). ຫຼັກຖານໃນຄະດີ**

**ເຈົ້າໜ້າທີ່ພາສີ ຕ້ອງກວດກາຄວາມຖືກຕ້ອງ, ຄົບຖ້ວນ ແລະ ພາວະວິໄສ ຂອງຫຼັກຖານ ຊຶ່ງມີຫຼັກຖານທາງດ້ານ ວັດຖຸ, ເອກະສານ ແລະ ບຸກຄົນ ດັ່ງນີ້:**

1. ຫຼັກຖານທາງດ້ານວັດຖຸ ແມ່ນ ວັດຖຸສິ່ງຂອງທີ່ເປັນຂອງກາງ ຊຶ່ງພົວພັນກັບການກະທຳຜິດທາງພາສີ ແລະ ໄດ້ມາຈາກການຍຶດ, ອາຍັດ ເຊັ່ນ ສິນຄ້າ, ເຄື່ອງຂອງ, ວັດຖຸ, ອຸປະກອນ, ພາຫະນະ ແລະ ວັດຖຸສິ່ງຂອງອື່ນ ທີ່ນຳໃຊ້ເຂົ້າໃນການກະທຳຜິດທາງພາສີ;
2. ຫຼັກຖານທາງດ້ານເອກະສານ ແມ່ນ ບັນດາຂໍ້ມູນກ່ຽວກັບການແຈ້ງພາສີເປັນລາຍລະອຽດ ແລະ ເອກະສານປະກອບຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 64 ຂອງກົດໝາຍສະບັບນີ້, ບົດບັນທຶກການສືບສວນ-ສອບສວນ, ປຶ້ມເຄື່ອນໄຫວດ້ານການເງິນ-ການບັນຊີ, ຮູບພາບ ແລະ ເອກະສານອື່ນ ທີ່ພົວພັນກັບການກະທຳຜິດທາງພາສີ;
3. ຫຼັກຖານທາງດ້ານບຸກຄົນ ແມ່ນ ຄຳໃຫ້ການຂອງຜູ້ຖືກຫາ, ພະຍານ ແລະ ຄຳເຫັນຢັ້ງຢືນຂອງຜູ້ຊ່ຽວຊານ ແລະ ບຸກຄົນອື່ນ ທີ່ພົວພັນກັບການກະທຳຜິດທາງພາສີ.

## ໝວດທີ 4
## ການແກ້ໄຂຄະດີທາງພາສີ

**ມາດຕາ 107 ( ໃໝ່ ). ການແກ້ໄຂຄະດີທາງພາສີ**

ຄະດີທາງພາສີທີ່ມີການສົມຍອມ ຫຼື ຖືກຮິບສິນຄ້າ, ເຄື່ອງຂອງເປັນຂອງລັດແລ້ວ ຖືວ່າເປັນການສິ້ນສຸດຄະດີທາງພາສີ ເວັ້ນເສຍແຕ່ເປັນການກະທຳຜິດທາງອາຍາ.

ສຳລັບການຈັດຕັ້ງຂັ້ນຕ່າງໆ, ພະນັກງານ, ທະຫານ ແລະ ຕຳຫຼວດ ຫາກໄດ້ຈັບກຸມ, ຍຶດສິນຄ້າ, ເຄື່ອງຂອງທີ່ລັກລອບ ຫຼົບຫຼີກພາສີ ໃນກໍລະນີເຊື່ອງໜ້າ ຫຼື ຮີບດ່ວນ ຕ້ອງມອບຄະດີ ພ້ອມດ້ວຍຂອງກາງ ແລະ ຂໍ້ມູນຕ່າງໆທີ່ກ່ຽວຂ້ອງ ໃຫ້ເຈົ້າໜ້າທີ່ພາສີ ບ່ອນໃກ້ສຸດໃນທັນທີ ເພື່ອດຳເນີນການແກ້ໄຂ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້.

**ມາດຕາ 108 ( ໃໝ່ ). ການປະຕິບັດພັນທະຕໍ່ເງິນປັບໃໝ ຫຼື ຂາຍເຄື່ອງຮິບ**

ພາຍຫຼັງທີ່ມີການດຳເນີນຄະດີທາງພາສີສິ້ນສຸດ ແລະ ໄດ້ຫັກຄ່າສິ້ນເປືອງອອກແລ້ວ ຈຳນວນເງິນຄ່າພາສີ ແລະ ພັນທະອື່ນ ຕ້ອງມອບເຂົ້າງົບປະມານ. ສຳລັບການແບ່ງສ່ວນກ່ຽວກັບເງິນຄ່າປັບໃໝ ຫຼື ຂາຍເຄື່ອງຮິບນັ້ນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 109 ( ປັບປຸງ ). ພັນທະໃນການມີສ່ວນຮ່ວມ**

ໃນເວລາປະຕິບັດໜ້າທີ່ ຕ້ານ ແລະ ສະກັດກັ້ນການລັກລອບໜີພາສີ ຂອງເຈົ້າໜ້າທີ່ພາສີ ພະນັກງານ, ທະຫານ, ຕຳຫຼວດ ແລະ ປະຊາຊົນ ມີພັນທະໃນການມີສ່ວນຮ່ວມ ແລະ ໃຫ້ຄວາມຮ່ວມມື.

# ພາກທີ XV
# ການຄຸ້ມຄອງ ແລະ ກວດກາວຽກງານພາສີ
## ໝວດທີ 1
## ອົງການຄຸ້ມຄອງວຽກງານພາສີ

**ມາດຕາ 110 ( ປັບປຸງ ). ອົງການຄຸ້ມຄອງວຽກງານພາສີ**

ລັດຖະບານ ເປັນຜູ້ຄຸ້ມຄອງວຽກງານພາສີ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງການເງິນ ເປັນໃຈກາງປະສານສົມທົບກັບກະຊວງອື່ນ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານພາສີ ປະກອບດ້ວຍ:

1. ກະຊວງການເງິນ;
2. ກົມພາສີ;
3. ພາສີປະຈຳເຂດ;
4. ດ່ານພາສີຊາຍແດນ.

**ມາດຕາ 111 ( ປັບປຸງ ). ສິດ ແລະ ໜ້າທີ່ ຂອງກະຊວງການເງິນ**

ກະຊວງການເງິນ ມີສິດ ແລະ ໜ້າທີ່ໃນການຄຸ້ມຄອງວຽກງານພາສີ ດັ່ງນີ້:

1. ຄົ້ນຄວ້າຍຸດທະສາດ, ແຜນນະໂຍບາຍ, ລະບຽບກົດໝາຍ ແລະ ແຜນການ ກ່ຽວກັບການພັດທະນາວຽກງານພາສີ ເພື່ອສະເໜີ ລັດຖະບານພິຈາລະນາ;
2. ອອກລະບຽບການ, ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານພາສີ;
3. ຊີ້ນຳ, ຕິດຕາມ ການປະຕິບັດໜ້າທີ່ຂອງລັດຖະການພາສີ ໃນທົ່ວປະເທດ;
4. ໂຄສະນາ, ເຜີຍແຜ່ນະໂຍບາຍ, ລະບຽບກົດໝາຍກ່ຽວກັບພາສີ ແລະ ກົດໝາຍອື່ນ ທີ່ກ່ຽວຂ້ອງ;
5. ປະສານສົມທົບກັບບັນດາຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນ, ຊຸກຍູ້ການຈັດຕັ້ງປະຕິບັດ ລະບຽບກົດໝາຍກ່ຽວກັບພາສີ;
6. ສ້າງແຜນການບຳລຸງສ້າງ , ຍົກລະດັບ ແລະ ປະຕິບັດນະໂຍບາຍຕໍ່ພະນັກງານພາສີຜູ້ມີຜົນງານ ຕາມລະບຽບການ;
7. ພົວພັນຮ່ວມມືກັບຕ່າງປະເທດ ແລະ ສາກົນໃນການຄຸ້ມຄອງວຽກງານພາສີ;
8. ສະຫຼຸບ ແລະ ລາຍງານໃຫ້ລັດຖະບານ ແລະ ສະພາແຫ່ງຊາດ ກ່ຽວກັບວຽກງານພາສີ;
9. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

ສຳລັບສິດ ແລະ ໜ້າທີ່ຂອງກົມພາສີ, ພາສີປະຈຳເຂດ ແລະ ດ່ານພາສີຊາຍແດນ ໄດ້ກຳນົດໄວ້ໃນມາດຕາ 75 ຂອງກົດໝາຍສະບັບນີ້.

## ໝວດທີ 2
## ການກວດກາວຽກງານພາສີ

**ມາດຕາ 112 ( ປັບປຸງ ). ອົງການກວດກາວຽກງານພາສີ**

**ອົງການກວດກາວຽກງານພາສີ ປະກອບດ້ວຍ ອົງການກວດກາພາຍໃນ ແລະ ອົງການກວດກາພາຍນອກ.**

1. ອົງການກວດກາພາຍໃນ ມີ ກະຊວງການເງິນ, ກົມກວດກາການເງິນ ຂອງກະຊວງການເງິນ.
2. ອົງການກວດກາພາຍນອກ ມີຄື:
   - ສະພາແຫ່ງຊາດ;
   - ອົງການກວດກາລັດຖະບານ ແລະ ຕ້ານການສໍ້ລາດບັງຫຼວງ;
   - ອົງການກວດສອບແຫ່ງລັດ;
   - ອົງການປົກຄອງທ້ອງຖິ່ນຂັ້ນຕ່າງໆ, ອົງການແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ສື່ມວນຊົນ ແລະ ພາກສ່ວນທີ່ກ່ຽວຂ້ອງອື່ນ ຊຶ່ງມີສ່ວນຮ່ວມໃນການກວດກາຕາມພາລະບົດບາດຂອງຕົນ.

**ມາດຕາ 113 ( ປັບປຸງ ). ສິດ ແລະ ໜ້າທີ່ຂອງອົງການກວດກາພາຍໃນ**

ອົງການກວດກາພາຍໃນ ມີສິດ ແລະ ໜ້າທີ່ ກວດກາການຈັດຕັ້ງປະຕິບັດລະບຽບກົດໝາຍ, ການປະຕິບັດໜ້າທີ່ ແລະ ຄວາມຮັບຜິດຊອບຂອງລັດຖະການພາສີແຕ່ລະຂັ້ນ.

**ມາດຕາ 114 ( ປັບປຸງ ). ສິດ ແລະ ໜ້າທີ່ຂອງອົງການກວດກາພາຍນອກ**

ອົງການກວດກາພາຍນອກ ມີສິດ ແລະ ໜ້າທີ່ ກວດກາການຈັດຕັ້ງປະຕິບັດໜ້າທີ່ຂອງລັດຖະການພາສີ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນ ເພື່ອເຮັດໃຫ້ການເຄື່ອນໄຫວວຽກງານພາສີ ມີປະສິດທິຜົນ, ມີຄວາມໂປ່ງໃສ ແລະ ຍຸຕິທຳ.

**ມາດຕາ 115 ( ປັບປຸງ ). ຮູບການກວດກາ**

**ການກວດກາລັດຖະການພາສີ ມີ ສາມຮູບການ ດັ່ງນີ້:**

1. ການກວດກາຕາມລະບົບປົກກະຕິ ແມ່ນ ການກວດກາທີ່ດຳເນີນໄປຕາມແຜນການຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ;
2. ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນ ການກວດການອກແຜນການ ເມື່ອເຫັນວ່າມີ ຄວາມຈຳເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ;

3. ການກວດກາແບບກະທັນຫັນ ແມ່ນ ການກວດກາໂດຍຮີບດ່ວນ ຊຶ່ງບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ.

ໃນການດຳເນີນການກວດກາ ລັດຖະການພາສີ, ເຈົ້າໜ້າທີ່ກວດກາອື່ນ ຕ້ອງປະຕິບັດຕາມສິດ ແລະ ໜ້າທີ່ ໃຫ້ຖືກຕ້ອງຕາມລະບຽບກົດໝາຍຢ່າງເຂັ້ມງວດ.

# ພາກທີ XVI
# ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ
## ໝວດທີ 1
## ນະໂຍບາຍຕໍ່ຜູ້ມີຜົນງານ

**ມາດຕາ 116. ການຍ້ອງຍໍ**

ເຈົ້າໜ້າທີ່ພາສີ, ພະນັກງານ, ທະຫານ, ຕຳຫຼວດ ແລະ ປະຊາຊົນ ທີ່ໄດ້ປະກອບສ່ວນເຂົ້າໃນວຽກງານພາສີ ດ້ວຍການໃຫ້ຂໍ້ມູນ, ຂ່າວສານ, ການຈັບກຸມ ທາງກົງ ຫຼື ທາງອ້ອມ ກ່ຽວກັບການລະເມີດລະບຽບກົດໝາຍກ່ຽວກັບພາສີ ຈະໄດ້ຮັບການຍ້ອງຍໍ ຫລື ນະໂຍບາຍອື່ນຕາມລະບຽບການ.

**ມາດຕາ 117 ( ປັບປຸງ ). ນະໂຍບາຍຕໍ່ຜູ້ແຈ້ງພາສີ**

ຜູ້ແຈ້ງພາສີ ທີ່ມີຄວາມສັດຊື່ບໍລິສຸດ, ປະຕິບັດ ຢ່າງຖືກຕ້ອງ, ຄົບຖ້ວນ, ທັນກຳນົດເວລາຕາມລະບຽບກົດໝາຍ ຈະໄດ້ຮັບການຍ້ອງຍໍ ຊົມເຊີຍ ແລະ ຄວາມສະດວກໃນການເຄື່ອນໄຫວກ່ຽວກັບການສົ່ງອອກ- ນຳເຂົ້າ ສິນຄ້າ, ເຄື່ອງຂອງ.

## ໝວດທີ 2
## ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 118 ( ປັບປຸງ ). ມາດຕະການຕໍ່ຜູ້ແຈ້ງພາສີ**

ຜູ້ແຈ້ງພາສີ ທີ່ໄດ້ລະເມີດລະບຽບກົດໝາຍ ກ່ຽວກັບພາສີ ແລະ ລະບຽບກົດໝາຍອື່ນ ທີ່ກ່ຽວຂ້ອງ ນອກຈາກການສຶກສາອົບຮົມ, ກ່າວເຕືອນ, ປັບໃໝ ຫຼື ຖືກດຳເນີນຄະດີທາງພາສີແລ້ວ ຍັງຕ້ອງຮັບຜິດຊອບໃຊ້ແທນຄ່າເສັຍຫາຍທາງແພ່ງ ທີ່ເກີດຈາກການກະທຳຂອງຕົນ ແລະ ຈະຖືກລົງໂທດທາງອາຍາ ຕາມກໍລະນີເບົາ ຫຼື ໜັກ.

**ມາດຕາ 119. ມາດຕະການຕໍ່ເຈົ້າໜ້າທີ່ພາສີ ແລະ ລັດຖະກອນພາສີ**

ເຈົ້າໜ້າທີ່ພາສີ ແລະ ລັດຖະກອນພາສີ ທີ່ໄດ້ລະເມີດລະບຽບກົດໝາຍກ່ຽວກັບພາສີ ຊຶ່ງບໍ່ສ້າງຜົນເສຍຫາຍ ໃຫ້ແກ່ລາຍຮັບພາສີ ແລະ ພັນທະອື່ນ ຈະຖືກສຶກສາອົບຮົມ ແລະ ກ່າວເຕືອນ.

ໃນກໍລະນີທີ່ໄດ້ລະເມີດລະບຽບກົດໝາຍ ແລະ ສ້າງຜົນເສຍຫາຍ ບໍ່ຫຼວງຫຼາຍ ຕໍ່ລາຍຮັບພາສີ ແລະ ພັນທະອື່ນ ໂດຍເຈດຕະນາ ຈະຖືກລົງວິໄນຕາມລະບຽບການ ແລະ ໃຊ້ແທນຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນ.

ສຳລັບຜູ້ທີ່ກະທຳຜິດລະບຽບກົດໝາຍ ກ່ຽວກັບພາສີ ແລະ ສ້າງຜົນເສຍຫາຍຢ່າງຫຼວງຫຼາຍໃຫ້ແກ່ຜົນປະໂຫຍດຂອງລັດ, ລວມໝູ່ ຫຼື ບຸກຄົນ ເຊັ່ນ ສວຍໃຊ້ຖານະຕຳແໜ່ງ, ສິດອຳນາດ, ໜ້າທີ່ເພື່ອຜົນປະໂຫຍດສ່ວນຕົວ, ໃຊ້ອຳນາດເກີນຂອບເຂດ, ປອມແປງເອກະສານ, ຮັບສິນບົນໃນຮູບແບບໃດກໍຕາມ ຫຼື ການກະທຳຜິດອື່ນທາງອາຍາ ຕ້ອງຖືກດຳເນີນຄະດີຕາມກໍລະນີເບົາ ຫຼື ໜັກ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

## ພາກທີ XVII
## ບົດບັນຍັດສຸດທ້າຍ

**ມາດຕາ 120 ( ປັບປຸງ ). ການປັບປຸງແປງອັດຕາພາສີ**

ໃນກໍລະນີ ມີຄວາມຈຳເປັນໃນການປັບປຸງແປງອັດຕາພາສີ ເພື່ອໃຫ້ສອດຄ່ອງກັບການຂະຫຍາຍຕົວຂອງ ເສດຖະກິດ-ສັງຄົມແຫ່ງຊາດ ໃນແຕ່ລະໄລຍະນັ້ນ ລັດຖະບານ ມີສິດສະເໜີຕໍ່ຄະນະປະຈຳສະພາແຫ່ງຊາດ ເພື່ອພິຈາລະນາສະເໜີຕໍ່ປະທານປະເທດ ອອກລັດຖະບັນຍັດປະກາດໃຊ້ເປັນການຊົ່ວຄາວ ໂດຍສອດຄ່ອງກັບກົດໝາຍທີ່ກ່ຽວຂ້ອງ, ສັນຍາ ແລະ ສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 121 ( ປັບປຸງ ). ການຈັດຕັ້ງປະຕິບັດ**

ລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 122 ( ປັບປຸງ ). ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ພາຍຫຼັງເກົ້າສິບວັນ ນັບແຕ່ວັນປະທານປະເທດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ ປະກາດໃຊ້ເປັນຕົ້ນໄປ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍພາສີ ສະບັບເລກທີ 05/ສພຊ, ລົງວັນທີ 20 ພຶດສະພາ 2005.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ປະທານສະພາແຫ່ງຊາດ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້